# ງາມ ບ້ານເກີດ



# ງາມບ້ານເກີດ

ສຳນັກພິມຈຳໜ່າຍ «ລາວຮັກຊາດ»

ວຽງຈັນ 1976

# ສາລະບານ

ຕອນ ໜ້າ

1. ງານບ້ານເກີດ ———— 1
2. ດາວລ້ອມເດືອນ ———— 9
3. ບ້ານນາທີ່ຮັກ ........ 29
4. ບ້ານເກີດເຮົາ ........ 43
5. ຄືນສູ່ບ້ານນາ ———— 61
6. ລຸງຂຽວ ........ 89

# ງາມບ້ານເກີດ

ໂດຍ.. ອຸທິນ ບຸນຍາວົງ.

ຝົນເດືອນສີໂຮຍຣຳຫລາຍເທື່ອແລ້ວ.

ທົ່ວທ້ອງທົ່ງກຳລັງຂຽວງາມໄປດ້ວຍໃບຫຍ້າອ່ອນ ເບິ່ງຄ້າຍຄືກັບພົມສີຂຽວປູລາດໄປສຸດສາຍຕາ ຢາດນ້ຳຝົນທີ່ຕົກຈາກຟາກຟ້າຊຶ່ງຍັງຄ້າງຢູ່ເທິງຍອດຫຍ້າ ເພື່ອຄວາມມີຊີວິດຊີວາໃຫ້ແກ່ພືກສາຍາມເຊົ້າ ຕົ້ນໄມ້ແຄມທົ່ງກຳລັງປົ່ງໃບຂຽວ ອ່ອນໄຫວໄກວໄປມາເມື່ອລົມຕ້ອງ ຕົ້ນເລົາກຳລັງອອກດອກບານ ຕົ້ນຈານກຳລັງປົ່ງໃບຂຽວ ຕົ້ນຂາມປົ່ງໃບອ່ອນ ຕົ້ນມອນຊູໃບເປັນຊອນລອນ ຫລຽວໄປທາງໃດມີແຕ່ຄວາມສົດຊື່ນຫນ້າສະອອນ.

ບັນຍາກາດງຽບສະຫງົບ ເປັນສະບາຍ ແວດລ້ອມໄປດ້ວຍພືກສາຂຽວງາມແບບນີ້ ຂ້ອຍບໍ່ມີໂອກາດໄດ້ເຫັນໄດ້ຊົມມາເທິງສິນຄວນແລ້ວ ແລະອາດຈະບໍ່ໄດ້ເຫັນອີກຕະຫລອດຊີວິດນີ້ ຖ້າຂ້ອຍບໍ່ມີການຕັດສິນໃຈທີ່ຖືກຕ້ອງແນ່ນອນ.

ຂ້ອຍກັບຄືນມາໂພນໂຮງ ອັນເປັນບ້ານເກີດອີກເທື່ອຫນຶ່ງຫລັງພັດພາກຈາກໄປຢູ່ໄກແສນໄກ ແລະ ເຊື່ອວ່າເປັນການກັບມາເປັນເທື່ອສຸດທ້າຍ ເພາະຂ້ອຍຈະບໍ່ຫນີໄປທາງໃດອີກ ຂໍສະແດງຄວາມຊົມເຊີຍ ແລະ ຂອບໃຈນ້ອງສາວປ່າງສຸດ

ຊຶ່ງ ທີ່ສົ່ງຈົດໝາຍໄປຫາເມື່ອຕອນທີ່ຂ້ອຍຍັງຢູ່ປະເທດຝະລັ່ງ ເວລານັ້ນກຳລັງຢູ່ໃນລະດູໜາວ ນ້ອງສາວພັນລະນາໄປໃນຈົດໝາຍວ່າ ...

... ເງິນທີ່ອ້າຍສົ່ງມາໃຫ້ພໍ່ແມ່ນັ້ນ ບໍ່ມີຄວາມໝາຍຫຍັງດອກ ມັນບໍ່ອາດຊື້ເອົາຄວາມຄິດຮອດຄິດເຖິງ ແລະ ເປັນຫ່ວງເປັນໃຍທີ່ພໍ່ແມ່ ແລະ ນ້ອງໆມີຕໍ່ອ້າຍນັ້ນອອກໄປຈາກຫົວໃຈໄດ້ ລຸງກໍ່ຈົ່ມຄິດຫາປ້າກໍ່ຈົ່ມຄິດຮອດ ພໍ່ກໍເຖົ້າແກ່ແມ່ກໍໂຣຍແຮງ ເປັນໄມ້ໃກ້ຝັ່ງໄປແລ້ວ ແຕ່ພື້ນນາເຮົາກ້ວາງຂວາງ ຮົ້ວສວນກໍ່ຮົກເຮື້ອ ຕ້ອງການຜູ້ທີ່ຈະມາສືບຕໍ່ບຸກເບີກຖາກຖາງ ຄຶດຕໍ່ອ້າຍຊ້ຳພັດຢູ່ຄົນລະຟາກຟ້າ ຄຶດມາແລ້ວໂສກເສົ້າຫົວໃຈ.

ອ້າຍອາດຈະລືມແລ້ວ ຕົ້ນມ່ວງຕົ້ນໜຶ່ງຊຶ່ງອ້າຍເອງພຽງແຕ່ໂຍນແກ່ນມັນລົງປາງຊານເມື່ອສີ່ຫ້າປີກ່ອນ ນາບັດນີ້ມັນອອກຊໍ່ສົ່ງກິ່ນຫອມຫວນແຂ່ງກັບຕົ້ນອື່ນໆ ຕົ້ນນ້ຳນົມທີ່ອ້າຍປູກຢູ່ຂ້າງຮົ້ວກໍເປັນໜ່ວຍດົກ ກົກຈຽງຢູ່ຂ້າງເລົ້າກຳລັງເປັນໜ່ວຍນ້ອຍ ຄ້ອຍຄ່ຳມາມີນົກກາບິນຂ້າມບ້ານສົ່ງສຽງເອົ້າວອນ ຍາມນອນໃຜກໍ່ຈົ່ມຄິດຮອດອ້າຍ ...

ແມ່ນແລ້ວເມືອງລາວອຸດົມສົມບູນຂ້ອຍພຽງແຕ່ໂຍນແກ່ນໝາກມ່ວງຖິ້ມລົງປາຍຊານ ແຕ່ມັນກໍງອກງາມຂຶ້ນມາໂດຍ

ທີ່ຂ້ອຍບໍ່ໄດ້ເອົາໃຈໃສ່ບົວລະບັດຫຍັງຫມົດ  ມັນໃຫຍ່ຂຶ້ນມາ ເປັນຊໍ່ແລ້ວເປັນຫມາກຫາກວ່າຂ້ອຍຕັ້ງໃຈປູກເປັນຫລາຍສິບຕົ້ນ ຫລືຫລາຍຮ້ອຍຕົ້ນ ມັນກໍ່ຈະເປັນປ່າມ່ວງອັນດົກຫນາ ບໍ່ສະເພາະແຕ່ຄອບຄົວຂ້ອຍເທົ່ານັ້ນ  ທີ່ໄດ້ກິນຫມາກຜົນ ແມ່ນຫມົດທັງບ້ານທົ່ວທັງຕາແສງກໍ່ໄດ້ກິນນຳກັນ.

ນ້ອງສາວຂ້ອຍເວົ້າຖືກຕອນນັ້ນຂ້ອຍອ່ານຈົດຫມາຍແລ້ວ ຫົວໃຈຂ້ອຍວາບຫວິວ  ຫລຽວຜ່ານປ່ອງຢ້ຽມແກ້ວອອກໄປທາງຖະຫນົນ  ເຫັນຜູ້ຄົນຂອງນະຄອນປາລີຍ່າງໄປມາຢ່າງຟ້າວຟັ່ງ ນຸ່ງເຄື່ອງກັນຫນາວສີຊ້ຳໆດຳໆ  ເກືອບທຸກຄົນມີທ່າທາງເສີຍໆຄືດັ່ງບໍ່ເຄີຍຍິ້ມບໍ່ເຄີຍຫົວມາແລ້ວດົນນານ ສີຫນ້າບຶ້ງບອກວ່າບໍ່ມີມິດໄມຕີໃຫ້ແກ່ຜູ້ໃດ ຕົວໃຜຕົວມັນ ປານວ່າມາຈາກຄົນລະໂລກພວກຫນຶ່ງຍ່າງໄປພວກຫນຶ່ງຍ່າງມາທ່າມກາງຫິມະຂາວ  ທີ່ຕົກຫລົ່ນລົງມາເຕັມຖະຫນົນຫົນທາງເຕັມຫລັງຄາບ້ານເຮືອນຕົ້ນໄມ້ແຄມຖະຫນົນປາສະຈາກໃບໄດ້ກາຍເປັນສີດຳໆຄືຕໍ່ໄຟລົນກາງໄຮ່ຕັ້ງຣຽງກັນຢູ່ຢ່າງເປົ່າປ່ຽວເຫັນແລ້ວຮູ້ສຶກຄ້ອຍໃນຈິດໃນໃຈ.

ຂ້ອຍອ່ວງຫນ້າຈາກປ່ອງຢ້ຽມ ຫລຽວລົງພື້ນຫ້ອງດ້ວງຄວາມຄຶດຄຳນຶງ ນ້ຳຕາໄຫລຊຶມຍ້ອນຄຶດຮອດບ້ານ ຂ້ອຍຄຶດວ່າໂຕເອງຄຶດຜິດແລ້ວທີ່ໄດ້ຈາກພໍ່ແມ່ອ້າຍນ້ອງ  ຈາກປະ

ເທດຊາດບ້ານເມືອງຊຶ່ງກຳລັງຕ້ອງການລູກລາວຫລາຍລາວໄປສ້າງສາພັດທະນາ ຕ້ອງການແຮງງານໄປບຸກເບີກຖາກຖາງດິນດອນດອນຫຍ້າເພື່ອໃຫ້ເກີດດອກອອກຜົນ.

ຂ້ອຍດ່າໂຕເອງໃນໃຈ ທີ່ເຫັນແກ່ປະໂຫຍດສ່ວນຕົວບໍ່ໄດ້ເຮັດວຽກອັນໃດໃຫ້ແກ່ປະເທດຊາດ ສະໄຫມເປັນນັກຮຽນຂ້ອຍຮຽນສຸດຢູ່ໂພນໂຮງແລ້ວກໍໄປຮຽນຕໍ່ທີ່ວຽງຈັນ ໄດ້ຄວາມຮູ້ພໍກະເທີ້ນແລ້ວກໍອອກໂດຍບໍ່ໄດ້ວິຊາສະເພາະແນວໃດ ຈາກນັ້ນກໍເຂົ້າເຮັດການເປັນສະຫມຽນເລັກໆນ້ອຍໆນຳບໍລິສັດ ແລະ ອົງການຕ່າງປະເທດ ພໍກອງທັບປົດປ່ອຍປະຊາຊົນລາວຈະກຳອຳນາດໄດ້ທັງຫມົດ ຂ້ອງກໍເອົາຕົວຫນີອອກຈາກບ້ານເກີດເມືອງນອນຫວັງໄປຫາເອົາຄວາມສຸກສ່ວນຕົວ ຢູ່ຕ່າງປະເທດລຳພັງຄົນດຽວ ຂ້ອຍຖິ້ມພໍ່ຖິ້ມແມ່ທີ່ເຖົ້າແກ່ຊະລາ ທັງທີ່ເພິ່ນຫວັງເພິ່ງຕໍ່ຂ້ອຍໃຫ້ເປັນຜູ້ອູ້ມຊູຄອບຄົວ ແລະ ນ້ອງນຸ່ງ ຂ້ອຍເປັນລູກຊາວກະສິກອນທີ່ພໍ່ແມ່ອອກເຫື່ອແຮງຫາເງິນໃຫ້ໄປຮຽນຫນັງສືຕໍ່ທີ່ວຽງຈັນ ຫມົດເງິນຫມົດຄຳໄປຫລາຍຕໍ່ຫລາຍແລ້ວແຕ່ຂ້ອຍກໍເຮັດໃຫ້ເພິ່ນຜິດຫວັງ ຂ້ອຍເປັນຄົນເນລະຄຸນໄປແລ້ວ ເນລະຄຸນທັງພໍ່ແມ່ ເນລະຄຸນທັງປະເທດຊາດບ້ານເມືອງທີ່ຂ້ອຍໄດ້ອາໄສເຕີບໃຫຍ່ຂຶ້ນມາຈົນປີກກ້າຂາແຂງ.

ຄືດມາແລ້ວຊີວິດຂ້ອຍຕອນຢູ່ເມືອງຝະລັ່ງບໍ່ມີຄວາມໝາຍຫຍັງໝົດ ອະນາຄົດມືດມົນ ຕອນເຊົ້າອອກຈາກຫ້ອງເຊົ່າທີ່ຄັບແຄບບັນຍາກາດຊຶມໆ ມຸ່ງໜ້າໄປເຮັດການຮັບຈ້າງເປັນຄົນຂົນເຄື່ອງຂອງຮ້ານສັບພະສິນຄ້າ ຄ່ຳມາກໍນັ່ງເຫງົາດຽວດາຍ ຫລຽວຫາພີ່ນ້ອງບໍ່ເຫັນ ມື້ໃຊກຮ້າງກໍຖືກເຂົາດ່າວ່າເຫງືກຫງາກເຮັດວຽກບໍ່ທັນການແລ້ວກໍກັບໄປນັ່ງເຫງົາຢູ່ຫ້ອງເຊົ່າຄືຄົນໝົດອາໄລໄຍດີຕໍ່ຊີວິດ ຄືຄົນໝົດຄວາມຄິດປັນຍາ.

ລະດູໜາວຢູ່ນະຄອນປາລີບໍ່ມີປານີຜູ້ໃດ ໂດຍສະເພາະຄົນອາຊີຄືຂ້ອຍ ແມ່ນສັ່ນສະທ້ານໄປທົ່ວຕົນຕົວແຕ່ຫົວສຸດຕີນໜາວກາຍຍັງບໍ່ແລ້ວຂ້ອຍໜາວທັງຈິດໜາວທັງໃຈຫວັ່ນໄຫວໄປຮອດວິນຍານ ດັ່ງນີ້ຂ້ອຍຈຶ່ງຕັດສິນໃຈອຳລາຫ້ອງເຊົ່າຊຶມໆ ອຳລານະຄອນປາລີ.

ຂ້ອຍຕ່າວມາຮອດພື້ນແຜ່ນດິນລາວໃນປາຍ ເດືອນສີ່ທ່າມກາງການຕ້ອນຮັບອັນອົບອຸ່ນ ທ່າມກາງຄວາມຍິ້ມແຍ້ມແຈ່ມໃສຂອງພໍ່ແມ່ອ້າຍນ້ອງ ລຸງປ້າອາວອາຕະຫລອດຮອດມິດສະຫາຍທັງປວງ ຫລຽວ ໄປຂ້າງຊ້າຍເຫັນຍິ້ມຂອງລຸງນາຫລຽວໄປທາງຂວາມີສຽງຫົວຂອງປ້າແບ້ນ ອາວແຈ່ມອອ້ນຂ້າງນີສຽງຮ້ອງໂຮຍິນດີຂອງນ້ອງນຸ່ງແລະໝູ່ເພື່ອນ ຂ້ອຍ

ຮູ້ສຶກອົບອຸ່ນ ຕື່ນຕັນໃຈປານໄດ້ໝ່ວຍແກ້ວດວງປະເສີດເກີນກວ່າໝ່ວຍໃດໆ.

ໃນໄຮ່ງບານເດືອນສີ່ ລະງົມໄປດ້ວຍສຽງຈັກຈັ່ນ ສຽງແມງອີ່ຮ້ອງເປັນວົ່ວອນ ໄດ້ຍິນໄດ້ຟັງແລ້ວໜ້າອອນຊອນເຮັດໃຫ້ຫວນຄິດເຖິງຄວາມຫລັງຄັ້ງເກົ່າໆ ຊວນໃຫ້ເຮົາຮັກຫວງແຫນໃນຜືນແຜ່ນດິນບ້ານເກີດເມືອງນອນຕື່ນຂຶ້ນເປັນທະວີຄູນ ແລະ ພ້ອມທີ່ຈະສະລະຊີວິດຕໍ່ສູ້ປົກປ້ອງຖ້າມີຜູ້ໃດມາຮຸກຮານຮາວີ ພືກສາຊາດກຳລັງຂຽວງາມ ແລະ ສ່ວນໜຶ່ງກຳລັງເປັນໝາກດົກໜາ ບັ້ນຕົ້ນຜາງກຳລັງສຸກເຫລືອງບົ້ ຕົ້ນເຝືອງກຳລັງເປັນໜ່ວຍນ້ອຍ ຂ້າງຮົ້ວເບື້ອງໃຕ້ໝາກໄຟເປັນພວງຫ້ອຍເຕັ້ມງ່ວນ ໝາກມີ້ມີທັງໜ່ວຍປ້ອມໜ່ວຍບາວ ໝາກພ້າວມີທັງໜ່ວຍຫ້າວໜ່ວຍກະຈາ ແລະໜ່ວຍອ່ອນ ຕົ້ນມ່ວງກຳລັງເປັນໜ່ວຍຂຽວ ໝາກແງວແນວສົ້ມແນວຫວານມີຢູ່ແຄມຮົ້ວເບື້ອງໃຕ້ເບື້ອງເໜືອ.

ຕໍ່ໜ້າບ້ານຂ້ອຍມີສວນຜັກ ທີ່ພວກນ້ອງໆ ພາກັນອອກແຮງຂຸດກົ່ນປູກຝັງແຕ່ເດືອນຈຽງ ດຽວນີ້ຜັກກາດກຳລັງອອກດອກບານເປັນສີເຫລືອງງາມ ນວນແມງພູ່ແມງເຜິ້ງ ແມງກະເບື້ອບິນຕອມດອກນັ້ນດອກນີ້ຢ່າງອິດສະລະ; ໝາກເດັ່ນກຳລັງສຸກແດງ ໝາກແດງເປັນໜ່ວຍເຕັ້ມຄ້າງ ໝາກ

ເຜັດຫມາກເຂືອເຫລືອທືອະນັບ ຂ້າງຮົ້ວມີຫບາບມັນຕົ້ນ ມີເຄືອຫມາກອຶ ຫມາກໂຕ່ນ ຫມາກບອບແລະຫມາກນ້ຳເຕົ້າ ຫລັງບ້ານມີຫບາບມັນດ້າງ ມີກໍ່ຂ່າຕົ້ນສາລີແລະອື່ນໆອີກ.

"ລູກເອີຍ ບ້ານເຮົາມີທຸກຢ່າງ ບໍ່ໄດ້ອຶດໄດ້ຢາກ ແຕ່ວ່າຕອນທີ່ລູກຫນີໄປຢູ່ຕ່າງປະເທດນັ້ນ ເບິ່ງຄືວ່າຄອບຄົວເຮົາຂາດທຸກສິ່ງທຸກຢ່າງ" ພໍ່ເທົ້ານັ່ງຢູ່ເຊັ່ງເຮືອນຮ້ອງມາໃສ່ຂ້ອຍ ຊຶ່ງກຳລັງເລາະລຽບເບິ່ງເຄື່ອງປູກຂອງຝັງ.

"ລູກຜິດໄປ ຄືດວ່າເງິນຄຳໄດ້ແລ້ວຈະຊື້ຄວາມສຸກໄດ້ທຸກຢ່າງ ແຕ່ຄວາມສຸກທີ່ແທ້ຈິງກໍຄືການໄດ້ຢູ່ໃກ້ພໍ່ແມ່ອ້າຍນ້ອງ ເຫັນເຄື່ອງປູກຂອງຝັງເຕັມໄຮ່ເຕັມສວນ ຊຶ່ງແມ່ນເຮົາປູກເອງສ້າງເອງ ບໍ່ມີໃຜມາເປັນນາຍບັງຄັບຂົ່ມເຫັງ ນີ້ແຫລະຄືຄວາມສຸກໃນຊີວິດ."

"ລູກຄຶດດັ່ງນັ້ນກໍດີແລ້ວ ມາໃກ້ໆພໍ່ນີ້ ພໍ່ມີເລື່ອງຊິບອກລູກ".

ຂ້ອຍຍ່າງໄປຫາພໍ່ດ້ວຍຄວາມຕັ້ງໃຈ.

"ຫລຽວເບິ່ງປ່າຫຍ້າເລົາທົ່ວນາເຮົາພຸ້ນ ແຕ່ກ່ອນນາເຮົາມີນ້ອຍດຽວມີຫຍ້າເລົາຫລາຍກວ່າ ດຽວນີ້ເຮົາໄດ້ຂະຫຍາຍດິນກິນເນື້ອທີ່ຫຍ້າເລົາເຂົ້າໄປຍ້ອນແຮງງານຂອງພໍ່ແມ່ ພໍ່ຂອງພໍ່ເລົ່າວ່າສະໄຫມເສິກຫໍ້ ປູ່ໄດ້ຝັງໂອເງິນໂອຄຳໄວ້ທີ່ຫົວ

ບາ ຕໍ່ມາປູ່ໄດ້ຫາຍສາບສູນໄປຈຶ່ງບໍ່ມີໃຜຮູ້ວ່າບ່ອນຝັງໂອເງິນໂອຄຳປູ່ບ່ອນໃດ ພໍ່ເອງກໍ່ໄດ້ລົງມືຂຸດຄົ້ນເປັນຂັ້ນໆ ແລະ ໄດ້ສັບຊ່າວເປັນໄຮ່ນາເພີມຂຶ້ນເລື້ອຍໆ ໃຫ້ລູກລົງມືຂຸດຄົ້ນຕໍ່ໄປບາງທີລູກອາດຈະໂຊກດີໄດ້ພໍ້ຂຸມເງິນຂຸມຄຳ".

ຂ້ອຍຫລຽວໄປທາງຟາກທົ່ງ ເຫັນຖຽງນ້ອຍອັນເປັນຖຽງນາຂອງພວກເຮົາທ່າມກາງປ່າຫຍ້າເລົາ ແລ້ວກໍຮັບປາກກັບພໍ່ວ່າ :

– ລູກຈະສືບຕໍ່ຂຸດຄົ້ນບຸກເບີກແທນພໍ່ຕໍ່ໄປ".

ມື້ຕໍ່ມາ ຂ້ອຍລຸກແຕ່ເຊົ້າ ເອົາຫໍ່ເຂົ້າພ້າຂໍແລະແບກຈົກຍ່າງລັດທົ່ງມຸ່ງຫນ້າໄປສູ່ຖຽງນາດ້ວຍຫົວໃຈຊຸ່ມຊື່ນຂ້ອຍບໍ່ຫວັງດອກວ່າຈະພົບພໍ້ ໄຫເງິນໄຫຄຳ ຖ້າພໍ້ກໍ່ໃຫ້ມັນເປັນຄວາມບັງເອີນ ຄວາມຈິງຂ້ອຍຫວັງຕໍ່ຊັບໃນດິນອື່ນໆຊຶ່ງເມື່ອຂຸດຄົ້ນຖາກຖາງແລ້ວ ຄ່າຂອງມັນຈະມີມາກມະຫາສານຫລາຍກວ່າໂອເງິນໂອຄຳຂອງບັນພະບຸລຸດຫລາຍຕໍ່ ແຕ່ຂ້ອຍກໍບໍ່ປະຕິເສດທີ່ຈະເຊື່ອວ່າມີຊັບສົມບັດຂອງບັນພະບຸລຸດຝັງປູ່ ຂ້ອຍຄິດອີກຢ່າງຫນຶ່ງວ່າ ບາງທີອາດເປັນປລັດຊະຍາຂອງປູ່ຫລືພໍ່ ກໍໄດ້ທີ່ປາກໃຫ້ລູກຫລານສັບຊ່າວດິນດອນດອນຫຍ້າໂດຍບອກວ່າມີໄຫເງິນໄຫຄຳຝັງປູ່ບ່ອນນັ້ນບ່ອນນີ້.

ໃຜກໍຄົງບໍ່ປະຕິເສດວ່າ ປລັດຊະຍາຂອງເຖົ້າແກ່ບູຮານລາວນັ້ນເລິກແລບຂະຫນາດໃດ.

# ດາວລ້ອມເດືອນ

ໂດຍ: ຄຳແພງ ເພັດຊະດາວົງ.

ລົດແລ່ນຕາມຖະໜົນຫລວງພະບາງ ບານແລງເປັນເກີດງສຽງໂທລະໂຄ່ງປະກາດຂ່າວສຽງຮ້ອງເພງຕາມລົດດັງປະສານກັນ ເຮັດໃຫ້ບັນຍາກາດຂອງນະຄອນວຽງຈັນ ປ່ຽນໂສມໜ້າໃໝ່ຈາກຫງ່ອມເຫງົາຄືນມາເປັນຟົດຟື້ນ ທຸກຄົນພາກັນເຮັດວຽກຂະຫຍັນຫ້າວຫັນ ເພື່ອເພີ່ມພູນຜະລິດຜົນໃຫ້ໄດ້ຫລາຍເປັນເຈົ້າຕົນເອງທາງດ້ານເສດຖະກິດ.

ແຕ່ຊີວິດບາງຄອບຄົວກໍຍັງຫາທົນບາງ ເພື່ອເອົາຕົວອອກຈາກນະຄອນຫລວງໄປສູ່ທ້ອງທົ່ງນາ ຊຶ່ງເປັນທິດທາງໃໝ່ອັນດີໃນການສ້າງສາ ປະເທດຊາດບ້ານເມືອງ ໃຫ້ຈະເລີນກ້າວໜ້າເພາະຊາດຖືກປົດປ່ອຍໃໝ່ ສ້າງຕັ້ງລະບອບໃໝ່ຈຶ່ງຕ້ອງອາໃສແຮງງານໃນການສ້າງສາປະເທດຊາດ.

– ລູກ ເອີຍ ມື້ນີ້ປູ່ພ້ອມໜ້າພ້ອມຕາກັນໝົດແລ້ວບໍ?

ສຽງຂອງປ້າກອງມີ ຖາມລູກຊຶ່ງນັ່ງຢູ່ເຊັ່ງເຮືອນຫລັງຈາກກິນເຂົ້າແລງສິ້ນສຸດລົງເພື່ອລໍຟັງຄຳຕັກເຕືອນສັ່ງສອນຂອງແມ່ຜູ້ໃຫ້ກຳເນີດ.

" ປູ່ພ້ອມກັນໝົດແລ້ວ ແມ່ມີວຽກຫຍັງບໍ?

ກອງມີຜູ້ເປັນລູກຊາຍກົກ ຫລຽວເບິ່ງໜ້າແມ່ດ້ວຍທ່າ

ທາງບໍ່ຄ່ອຍສະບາຍໃຈ  ເພາະຄິດວ່າເພິ່ນອາດຊິເປັນຫຍັງ ໄປໄຟຕະກຽງຮຸ່ງແສງນ້ອຍໆຖືກລົມພັດ ວັບແວບໄປມາ ອາໃສແສງໄຟຟ້າຢູ່ເຮືອນຂ້າງ ແລະ ຢູ່ຕາມຫົນທາງສ່ອງແສງເຂົ້າມາຈຶ່ງເຫັນໜ້າກັນໄດ້ໝົດທຸກຄົນ.

" ແມ່ມີວຽກສຳຄັນປຶກສາກັບພວກລູກທຸກຄົນ ".

ປ້າກອງມີທັງເວົ້າແລະຫຍ້ຳໝາກ  ແລ້ວຄາຍລົງໃສ່ກະບັ້ງໄມ້ໄຜ່ ຕາຂອງລາວຫລຽວເບິ່ງລູກທຸກຄົນດ້ວຍຄວາມສົງສານ.

" ເວົ້າໂລດແມ່  ພວກລູກທຸກຄົນຕັ້ງໃຈຟັງແລ້ວ ".

ທຸກຄົນມິດເພື່ອລໍຟັງຄຳເວົ້າຂອງເພິ່ນ  ຊິອອກມາທ່ານອງໃດ  ຫລືວ່າແມ່ມີຄວາມຄັບແຄບໃຈແນວໃດ.

" ກອງມີເອີຍ  ແມ່ມີຄວາມດີໃຈຕໍ່ລູກທີ່ເບິ່ງແຍງລ້ຽງເກືອແມ່ແລະນ້ອງທຸກຄົນດ້ວຍຈິດໃຈອົດທົນເຂັ້ມແຂງ  ເຖິງວ່າຈະຂາດເຂີນແນ່ເລັກນ້ອຍກໍເປັນຂອງທຳມະດາ  ເພາະຄອບຄົວຂອງເຮົາບໍ່ມີນາຍທ້າຍ  ພາຍຫລັງທີ່ພໍ່ຂອງເຈົ້າຖືກທະຫານຫຸ່ນອາເມລິກາຈັບໄປຂ້າຢູ່ປາຍນາ ພວກເຂົາຫາວ່າພໍ່ຂອງເຈົ້າໄປສົ່ງເຂົ້າສົ່ງນ້ຳໃຫ້ພວກອິດສະຫລະກິນ ແມ່ພາລູກເຂົ້າໃນວຽງເພື່ອບໍ່ໃຫ້ເຂົາຂ້າອີກ ເພາະວ່າຕາມແມ່ໄດ້ຍິນເຂົາຊິຂ້າໝົດຄອບຄົວ ສິບສອງປີແລ້ວທີ່ແມ່ຫາເກັບຜັກເກັບນາງຂາຍຢູ່ຕະຫລາດກົກໂພຫາລ້ຽງຊີວິດ ແຕ່ບໍ່ມີຫຍັງ

ດີຂຶ້ນ ນອກຈາກຄວາມຍາກຈົນເທົ່ານັ້ນທີ່ປົກຄຸມຄອບຄົວຂອງເຮົາມາຕະຫລອດ.

ສຽງເວົ້າຂອງລາວຊ້າໆ ເພື່ອທົບທວນເບື້ອງຫລັງໃຫ້ລູກຟັງ ລາວຫັນໃຈໃຫຍ່ໆແລ້ວເລົ່າຕໍ່ອີກ ແມ່ພາລູກອົດທຸກອົດຍາກ ການສຶກສາຮ່ຳຮຽນກໍບໍ່ໄດ້ຮຽນບຳເພັນ ພາໃຫ້ແມ່ເປັນຫ່ວງຕໍ່ອະນາຄົດຂອງລູກທຸກຄົນ.

ລາວຫລຽວເບິ່ງໜ້າລູກ ແລ້ວຈັບເອົາແພມົນມາເຊັດນ້ຳຕາທີ່ໄຫລອອກມາຢ່າງບໍ່ຮູ້ສຶກຕົວ ລູກທຸກຄົນນັ່ງອ້ອມແມ່ກົ້ມໜ້າລົງພື້ນແປ້ນບໍ່ປາກບໍ່ຕົງສຽງສະອື້ນ ຂອງລູກຍິງທັງສາມຄົນດັງຄ່ອຍໆ ເຮັດໃຫ້ຈິດໃຈຂອງແມ່ຍິ່ງໂສກເສົ້າ ແມ່ນແລ້ວລູກຂອງນາງກາຍເປັນລູກຄົນບໍ່ມີພໍ່ ພວກທະຫານຫຸ່ນປະຕິການເອົາພໍ່ຂອງເຂົາໄປຂ້າຢ່າງບໍ່ປານີ.

" ແມ່ຄິດແນວໃດຈິ່ງເວົ້າແນວນີ້ອອກມາ ? "

" ແມ່ວ່າ ດຽວນີ້ບ້ານເມືອງເຮົາກໍສະຫງົບແລ້ວ ພວກບ້າອຳນາດໄດ້ພາກັນໂດນໜີໄປຢູ່ປະເທດໄທໝົດແລ້ວ ແມ່ຄິດວ່າປາກກັບເມືອເຮັດນາຢູ່ບ້ານໂພນເບົ້າຂອງເຮົາຄືນ ພວກລູກຊິວ່າແນວໃດ ".

ກອງມີລູກຫົວແກ້ວຫົວແຫວນຫລຽວເບິ່ງໜ້າແມ່ ແລະນ້ອງທັງສາມຈິ່ງເວົ້າວ່າ.

" ພວກລູກທຸກຄົນກໍ່ເຫັນດີນຳແມ່ ແຕ່ວ່າເຮືອນແລະນາຂອງເຮົາກໍ່ບໍ່ມີຄືແຕ່ເກົ່າ ພວກປະຕິການມັນຍຶດເອົານາຂອງເຮົາແຕ່ຄາວພາລູກມາປູ່ຽງຈັບ ແລ້ວຂາຍເລໃຫ້ລູງຕາແສງໂພນຄຳແລ້ວເດ ".

" ບໍ່ມີກໍຕ້ອງໄປ ເຮືອນບໍ່ມີໄປຢູ່ວັດຊົ່ວຄາວ ໄປສ້າງເອົາໃຫມ່ບໍ່ມີໃຜສ້າງໄວ້ໃຫ້ເຮົາດອກລູກ ".

ສຽງເວົ້າອັນຫນັກແຫນ້ນ ເຕັມໄປດ້ວຍຄວາມເຊື່ອຫມັ້ນໄດ້ຫລຸດອອກຈາກປາກພາໃຫ້ລູກທຸກຄົນ ນຶກຊົມເຊີຍນ້ຳໃຈຂອງແມ່ເດັດດ່ຽວທີ່ສຸດຊຶ່ງບໍ່ເຄີຍມີມາກ່ອນ.

ກອງມີເລີ້ມຄິດເຖິງອະນາຄົດຕໍ່ໄປ ປະກອບກັບນ້ອງທີ່ເປັນເພດຍິງທັງສາມຄົນ ເຂົາອາໄສສອງມືສອງຕີນຫາລ້ຽງນ້ອງ ຈົນພົ້ນໄພສົງຄາມທີ່ຈັກພັດອາເມລິການຳມາເບື້ອເມົາຄົນລາວ ຕໍ່ມາກອງທັບປົດປ່ອຍປະຊາຊົນລາວ ກໍປົດປ່ອຍເອົາພື້ນແຜ່ນດິນລາວໄດ້ທົ່ວທັງປະເທດ ເຮັດໃຫ້ເຂົາມີຄວາມດີໃຈທີ່ສຸດ ຕໍ່ການປະຕິວັດລາວມີຜົນສຳເຫລັດ, ສິບສອງປີແຫ່ງຄວາມຫລັງ ມັນສ້າງຄວາມຂົມຂື່ນທີ່ສຸດສຳຫລັບຊີວິດເຂົາແລະຄອບຄົວ ພາຍໃນມັນສະຫມອງຂອງເຂົາຫວນຄຶດຄຳເວົ້າຈາກນັກຂົນຂວາຍທີ່ກ່າວຊີ້ແຈ່ງແກ່ປະຊາຊົນ ຢູ່ວັດໄດນ້ອຍຫວ່າງສອງມື້ຫລັງນັ້ນວ່າ.

ລະບອບລາຊາ ສັກດີນາຂຸນເສິກ ນາຍທຶນຈຳໜ່າຍ ຖືກໂຄ່ນລົ້ມອອກຈາກພື້ນແຜ່ນດິນລາວ ທັງຮາກທັງເຫງົ້າ ບັນດາພວກປະຕິການ ໄດ້ໂດນໜີຈາກພື້ນແຜ່ນດິນລາວໄປອາໄສຢູ່ຕ່າງປະເທດ ປະຊາຊົນໄດ້ສ້າງຕັ້ງລະບອບໃຫມ່ທີ່ສົດໃສຂຶ້ນ ຄືສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສິດທຸກຢ່າງແມ່ນຂຶ້ນກັບປະຊາຊົນທັງຫມົດ ເປັນເຈົ້າຊະຕາກຳເປັນເຈົ້າຂອງປະເທດຊາດ ໂດຍການຊີ້ນຳຂອງພັກປະຕິວັດປະຊາຊົນລາວ ຜູ້ນຳພາທຸກໄຊຊະນະ.

ຕໍ່ໄປນີ້ປະຊາຊົນລາວທຸກຊົນຊາດຊົນເຜົ່າ ຈະອອກເຫື່ອເຫແຮງຫ້າວຫັນເຮັດວຽກເພື່ອສ້າງສາ ປ້ອງກັນປະເທດຊາດຂອງເຮົາ ເພື່ອເຮັດໃຫ້ປະເທດກ້າວເຂົ້າສູ່ສັງຄົມນິຍົມ ເປັນເຈົ້າຕົນເອງທາງດ້ານເສດຖະກິດແລະທຸກຢ່າງ.

ເຂົາຄິດມາເຖິງຕອນນີ້ ຄວາມສະຫວ່າງສະໄຫວໄດ້ກັບເກີດຂຶ້ນເຂົາເຫັນແຈ້ງທຸກຢ່າງ ເຂົາຍິ້ມອອກມາດ້ວຍຄວາມດີໃຈທຸກຄົນເຫັນກໍດີໃຈນຳ.

" ແມ່ ! ພວກລູກທຸກຄົນຈະຕໍ່ສູ້ກັບທຸກຄວາມລຳບາກ" ກອງມີເວົ້າແລ້ວກໍ່ບົມືທັງສອງຂ້າງ ກຳແຫນ້ນປາງກ້າວກືງ ເຮົາຈະໃຊ້ມັນສະຫມອງແລະສອງມືນີ້ ນີ້ແຫລະຕໍ່ສູ້ສັດຕູຂອງຊາດແລະພານ້ອງທຸກຄົນ ເດີນທາງໄປສູ່ອະນາຄົດອັນແຈ່ມ

ໃສ ເປັນກຳລັງແຮງສ້າງປະເທດບ້ານເມືອງ.

ເຂົາຄິດເຖິງພາບໃນອະດີດຕອນແປດໂມງກາງຄືນ ປີ ໑໙໓໔ ຍາມກຳລັງຖຽນເຣັດນາ ທະຫານຫຸ່ນບ້ານເກີບ ຖືປືນຈໍ້ຂຶ້ນຫົວຂັ້ນໄດສາມຄົນ ແລ້ວດຶງແຂນພໍ່ຂອງເຂົາອອກຈາກພາເຂົ້າ ໃນຂະນະທີ່ພໍ່ກຳລັງຈ້ຳປັ້ນປາຍົກຄຳເຂົ້າໃສ່ປາກ ຄຳເຂົ້າຫລຸດອອກຈາກມືທັນທີ ເພາະແຮງຂອງພວກປະຕິການດຶງຫນັກແຮງ ມີບັກຫນຶ່ງເຕະຫລັງຫນັກແຮງ ພໍ່ຫງາຍຫລັງຄາພາເຂົ້າທັນທີ ເຂົານັດສອກພໍ່ໄຂ່ວຫລັງແລ້ວຕີນຖີບລົງເຮືອນ ສຽງຮ້ອງໄຫ້ຂອງນ້ອງທັງສາມຄົນທີ່ຍັງນ້ອຍແລະຕົວເຂົາເອງພ້ອມດ້ວຍແມ່ດັງຂຶ້ນ ຊາວບ້ານຄົນໃດກໍບໍ່ກ້າມາຊ່ວຍເຫລືອໄດ້, ຂືນມາຕາຍ ສຽງຫົວສຽງຖາມປະສານກັນດ້ວຍຄວາມຂຶ້ນໃຈ ຂອງພວກເຂົາດັງກ້ອງກັງວານ ປານສຽງຍັກສຽງມານປາກກິນຊີ້ນຄົນ.

" ມຶງບອກມາບັກພໍ່ກອງມີພວກອິດສະຫລະມັນຢູ່ໃສ? "

ສຽງທະຫານບັກຫນຶ່ງຖາມຂຶ້ນຢ່າງແຮງ ແລ້ວກໍໃຊ້ຕີນເຕະຫນັກແຮງ ເຂົາໄດ້ຍິນສຽງພໍ່ຮ້ອງໂອຍບາດດຽວ ແລ້ວບໍ່ຕອບຈັກຄວາມ.

" ມຶງບອກກູມາຕີ ມື້ວານນີ້ເຂົາລາຍງານກູວ່າ ມຶງເອົາເຂົ້າໄປສົ່ງອິດສະຫລະຊຸບບໍ? ".

ສຽງເວົ້າແຮງຂຶ້ນຊູ່ ແຕ່ພໍ່ຂອງເຂົາກໍບໍ່ຕອບ ເຂົາຫລຽວລົງເຮືອນເຫັນພໍ່ນອນເໝັບຂວ້ຳໜ້າລົງດິນ ທະຫານບັກໜຶ່ງໃຊ້ຕີນ ປຽບຫລັງ ເຮັດຈັ່ງຈະປູ່ເຂົາເຫັນ ແມ່ນອນສະຫລົບແລະນ້ອງ ນ້ອຍທັງສາມໃຫ້ບໍ່ຮູ້ ຈັກສຽງຂຶ້ນສຽງລົງບຶດໜຶ່ງທະຫານຫຸ່ນຂອງພວກອາເມລິກາບັງຄັບໃຫ້ພໍ່ລຸກຂຶ້ນ ພໍ່ລຸກຂຶ້ນແລ້ວກໍຍ່າງໄຊເຊໄປ.

" ເອົາມັນໄປ! ".

ສຽງເວົ້າຂອງທະຫານຜູ້ມີຮູບຮ່າງສູງໃຫຍ່ ດັງແຜດໄປທົ່ວບໍລິເວນບ້ານ ປະມານດຶກເດິບ ສຽງປືນຄຳລາມດັງກ້ອງຢູ່ປາງນາທັນທີ.

" ປັງ ປັງ ປັງ ".

" ພໍ່. . .! ພໍ່ຕາຍແລ້ວ !"

ພຽງເທົ່ານີ້ ເຂົາສະຫລົບບໍ່ຮູ້ເນື້ອຄີງ ຈົນແຈ້ງຈຶ່ງຮູ້ເນື້ອຄີງອີກ ຊາວບ້ານມາເຕັມເຮືອນ ເຂົາເຫັນແມ່ນັ່ງໃຫ້ມີຄົນເອົາຢາໃຫ້ດົມຢູ່ແຈເຮືອນ ສ່ວນນ້ອງທັງສາມຊາວບ້ານຜູ້ຮັກແພງອູ້ມເອົາຜູ້ລະຄົນ ຕົວຂອງເຂົາເອງແມ່ນຈານເຝືອນເປັນຜູ້ນັ່ງຢູ່ໃກ້ໆ.

ກອງນີຄິດມາເຖິງຕອນນີ້ ນ້ຳຕາໄຫລອອກຢ່າວໆເຂົາຟ້າວເຊັດນ້ຳຕາທັນທີ ເພື່ອບໍ່ໃຫ້ນ້ອງທັງສາມເຫັນ ".

" ແມ່ກັບເຮັດນາປີນີ້ໄດ້ເຂົ້າຫລາຍລູກຂໍໄປເປັນທະຫານປ້ອງກັນຊາດໄດ້ບໍ? ".

ຜູ້ເປັນແມ່ຫລຽວເບິ່ງໜ້າລູກຊາຍ ແລະລູກສາວທີ່ກໍາລັງໃຫຍ່ຂຶ້ນມາທຸກມື້. ລາວຫົວໃຫ້ລໍາລັງໃຈລູກແລ້ວເວົ້າວ່າ.

" ເປັນຫຍັງລູກຄຶດແນວນັ້ນຫືລູກ ".

" ເພື່ອພໍ່ຈັ່ງໃດລະ ນ້ອງເຮົາທັງສາມກໍໃຫຍ່ແລ້ວເດ ຂໍໃຫ້ເຮົາໄປຕອບແທນຕາມທິດທາງຂອງພໍ່ ".

" ກອງມີລູກຂອງແມ່ ລູກຄິດຖືກແລະມີຈິດໃຈເຂັ້ມແຂງ ແມ່ຈະຕາມໃຈລູກທຸກຢ່າງ ຫາກລູກປາດຖະໜາ ໄປທາງດີ ຂໍໃຫ້ແມ່ໄດ້ກັບເມື່ອເຖິງບ້ານກ່ອນ ".

ປ້າກອງມີລາວຄຶດເຖິງຄາວຫລັງສະໄໝປູ່ບ້ານ ປາກອັບໃດກໍໄດ້ກິນບໍລິເວນບ້ານມີໝົດທຸກຢ່າງ ຕົ້ນພ້າວ ຕົ້ນກ້ວຍ ສວນອ້ອຍກົກມ່ວງ ກົກໝາກຂາມ ໝາກມີ້ ມີນ້ຳສ້າງໃສສະອາດ ພາເຂົ້າທຸກຄາບ ອຸດົມສົມບູນດ້ວຍຜັກນານາຊະນິດ ປູປາປູ່ເຕັມນາບໍ່ອຶດ ບຶ່ງດຽວນີ້ແລ້ວອ່ານາດການປົກຄອງໃໝ່ ເພິ່ນຈັດລະບຽບບໍ່ໃຫ້ລົງຕ້ອນປາຂຶ້ນ ແຮງຊື້ຫລາຍກ່ວາເກົ່າເວົ້າແລ້ວເປັນຕາອອນຊອນ.

" ກອງມີເອີຍ ນີ້ອື່ນໃຫ້ລູກໄປຂໍໜັງສືເດີນທາງ ໃບບົກຍ້າງສຳນະໃບຄົວ ບໍ່ຕ້ອງໄປຍູ້ນ້ຳຂາຍດອກ ແມ່ຊື້ກັບປາປູ່

ຮ້ານຄ້າລວມໝູ່ມາໄວ້ແລ້ວ ສ່ວນຄຳສີ ຈັນດີ ແລະວິໄຊ ນ້ອງຂອງເຈົ້າໃຫ້ແຕ່ງເຄື່ອງຖຽມໄວ້. ບາດໄປມັນຈັ່ງບໍ່ຍາກ ເຂົ້າໃຈບໍ? ".

" ເຈົ້າ ພວກລູກເຂົ້າໃຈ ".

" ຄັນຊັ້ນເຮືອນເຮົາຫລັງນີ້ເດ ແມ່ຊິຂາຍບໍ? ".

" ແມ່ບໍ່ຂາຍ ນີ້ວານນີ້ກໍ່ມີຄົນມາຖາມຊື້ ".

" ຊິເຮັດຈັ່ງໃດຊັ້ນນາ "

" ແມ່ຊິມອບໃຫ້ກຳມະການປົກຄອງບ້ານ ໃຫ້ເພິ່ນເອົາໃຊ້ເປັນຂອງສ່ວນລວມ ຕາມແມ່ຄິດແນວນີ້ພວກລູກວ່າຈັ່ງໃດ ".

" ກໍດີແລ້ວເດແມ່ ".

ກອງມີຕອບດ້ວຍຄວາມດີໃຈແລະ ຊົມເຊີຍນ້ຳໃຈຂອງແມ່ຜູ້ໃຫ້ກຳເນີດ ເພາະແຕ່ໃດມາຈິດໃຈຂອງເພິ່ນ ເສັຽສະຫລະທຸກຢ່າງຫາກເພື່ອສ່ວນລວມ.

" ດີຫລາຍລູກເອີຍ ພາກັນເຂົ້ານອນສາ ".

ພວກນ້ອງທັງຫມົດພາກັນເຂົ້ານອນພ້ອມແມ່ ສ່ວນກອງມີຍັງບໍ່ນອນ ເອົາເອື່ອຍພະນັກເຮືອນ ຕາຫລຽວເບິ່ງທ້ອງຟ້າເຫັນເດືອນສ່ອງແສງຂາວນວນແຈ້ງສະຫວ່າງ ຫມູ່ດາວນ້ອຍໃຫຍ່ເຕັມທ້ອງຟ້າລຽງລະດາດອ້ອມດວງເດືອນ ສົ່ງແສງບິບ

ຍັບແວວວາວ ເບິງແລ້ວເປັນໜ້າອອນຊອນ ລົມພັດມາເປັນ
ບາດຮ້າວໆ ເຮັດໃຫ້ອາກາດຍາມເດິກເປັນສະບາຍ ຕາມເສັ້ນ
ທາງມີລົດເຈົ້າໜ້າທີ່ ຮັກສາຄວາມສະຫງົບ ແລ່ນໄປມາທະ
ຫານປ້ອງກັນ ແລະ ທະຫານລາດກອງຫລອນ ລາດຕະເວັນ
ເພື່ອຮັກສາຄວາມສະຫງົບ ຮຽບຮ້ອຍ ບໍ່ໃຫ້ພວກປະຕິການ
ຊຸນເສິກລອດເຂົ້າມາໄດ້ ປະຊາຊົນທຸກຄົນນອນຫລັບຕາສະ
ບາຍ ພົດກັບສະໄຫມພວກປະຕິການປົກຄອງປະຊາຊົນນອນ
ຕາບໍ່ຫລັບ ເພາະໄພອັນຕະລາຍມີຮອບດ້ານຊີວິດການເປັນຢູ່
ບໍ່ໄດ້ຮັບປະກັນ.

ສອງມື້ຕໍ່ມາ ການເຮັດໜັງສືເດີນທາງ ແລະໃບຍົກຍ້າຍ
ຄອບຄົວ ຈາກບ້ານວັດໄຕນ້ອຍ ກຳແພງນະຄອນວຽງຈັນ
ໄປບ້ານໂພນເປົ້າຕາແສງໂພນຄຳ ເມືອງທຸລະຄົມ ໄດ້ສຳ
ເຫລັດ ຂ່າວດັ່ງກ່າວ ໄດ້ແຜ່ໄປທົ່ວບ້ານວັດໄຕນ້ອຍປ້າກອງ
ມີລາວໄດ້ເຮັດໜັງສືມອບເຮືອນໃຫ້ແກ່ ກຳມະການປົກຄອງ
ບ້ານ ເພື່ອເປັນສາທາລະນະປະໂຫຍດສ່ວນຮວມຕໍ່ໄປເຮັດໃຫ້
ທຸກຄົນ ມີຄວາມເຫັນອົກເຫັນໃຈຊາບຊຶ້ງຕໍ່ການມີນ້ຳໃຈເສັຽ
ສະລະຂອງປ້າກອງມີ ທີ່ລາວຈະກັບຄືນບ້ານເຮັດນາຕໍ່ໄປ.

" ປ້າກອງມີຢູ່ບໍ ? "

" ຢູ່ລະບໍລູກເຮີຍ ເຊີນຂຶ້ນມາເທິງເຮືອນພີ້ ເປັນຫຍັງ

ຄືນາຫລາງຄົນແທ້ ຕົກໃຈກໍເປັນໄດ້ ? ".

" ນາປ້ຽມປານລະຕິ ".

ທ້າວເກືງ ຄະນະກໍາມະການບ້ານ ຕອບແບບຄວາມລົ້ງ ເຄີ່ງມາແຕ່ກ່ອນ.

" ພວກລູກມີວຽກຫຍັງບໍ່ ".

ປ້າກອງມີຖາມຂຶ້ນ ເພື່ອປາກຮູ້ເຈດຕະນາເພາະເຫັນມາ ມາກໜ້າຫລາຍຕາສົມຄວນ.

" ມາຫາແມ່ຕູ້ນີ້ແລ້ວ ".

ຕອນເຊົ້ານີ້ ນີ້ຄະນະກໍາມະການປົກຄອງບ້ານວັດໄຕນ້ອຍ ຂອງເຮົາໄດ້ປະຊຸມກັນ ກ່ຽວກັບການເມືອເຮັດນາ ຊຶ່ງເປັນ ການຖືກຕ້ອງຕາມທິດທາງຂອງພັກກໍຄື ລັດຖະບານເພິ່ງໄດ້ ວາງໄວ້ແລ້ວ ແລະເຫັນວ່າ ຄອບຄົວຂອງແມ່ປ້າທຸກຍາກ ແຕ່ມີນໍ້າໃຈເສັຍສະລະເພື່ອບ້ານເມືອງ.

ດັ່ງນີ້ຊາວບ້ານວັດໄຕນ້ອຍ ພ້ອມດ້ວຍຄະນະປົກຄອງສະ ພາຕາແສງປະຈໍາບ້ານໄດ້ພາກັນຊື້ເຄື່ອງອຸປະ ກອນການປູກ ຝັງ ແລະເງິນຈໍານວນໜຶ່ງເປັນຄ່າເດີນທາງ ເພື່ອຕອບສະ ໜອງຕໍ່ການມີນໍ້າໃຈເສັຍສະລະໃນຄັ້ງນີ້ ແລະຖືວ່າເປັນຕົວ ຢ່າງແກ່ຄົນທົ່ວໄປ.

ໂຫ ລູກ ພໍ່ຂອງພວກລູກໄດ້ຕາຍໄປແລ້ວແຕ່ບັດນີ້ ພໍ່

ຂອງລູກໄດ້ມີຂື້ນມາແລ້ວ ລູກຈະໄດ້ຮັບຄວາມອົບອຸ່ນທຸກຢ່າງ ອຳນາດການປົກຄອງທີ່ມີນ້ຳໃຈບໍລິສຸດ ເຮັດວຽກດ້ວຍຄວາມເສັຍສະລະ ບໍ່ເອົາສິນຈ້າງລາງວັນຫຍັງ ເຮົາຮູ້ສຶກຊາບຊຶ້ງດີໃຈຕໍ່ການຈັດຕັ້ງທີ່ມີຄວາມສະຫລາດສ່ອງໃສຂອງພັກຫາທີ່ສຸດ ກະແສຟອງກຳລັງເປັນຄື້ນນ້ອຍໄດ້ກາຍມາເປັນຄື້ນໃຫຍ່ທີ່ຈະຟັນຟ່າ ອຸປະສັກທຸກຢ່າງ ກ້າວໄປສູ່ຄວາມຢູ່ດີກິນດີ ເຮັດໃຫ້ປະເທດມີຄວາມຮັ່ງມີ ເປັນເຈົ້າຕົນເອງໃນທຸກດ້ານຕາມການຊີ້ນຳຂອງຂັ້ນເທິງ ລາວຄຶດຢູ່ໃນໃຈວ່າອາຍຸ ໕໐ ປີແລ້ວກໍ່ຕາມຂໍສະລະອຸທິດປາດເຫື່ອປະກອບສ່ວນເຮັດວຽກທຸກຢ່າງ ເພື່ອຊາດເພື່ອການປະຕິວັດ.

" ຫລານເອີຍ ປະຊາຊົນບ້ານຂອງເຮົາເຫັນດີນຳໝົດທຸກຄົນແລ້ວບໍ່ ".

" ເຫັນດີໝົດທຸກຄົນ ເຂົາເຈົ້າພາກັນຊົມເຊີຍນ້ຳໃຈເສັຍສະລະເດັດດ່ຽວຂອງຄອບຄົວແມ່ປ້າ ທຸກຄົນຈຶ່ງເຫັນອົກເຫັນໃຈ ".

" ຄັນຊັ້ນປ້າກໍ່ຂັດຂືນເຈດຕະນາ ອຳນາດການປົກຄອງ ພ້ອມດ້ວຍປະຊາຊົນໃນບ້ານຂອງເຮົາ ແລະຂໍຂອບອົກຂອບໃຈ ຕໍ່ອຳນາດການປົກຄອງທຸກໆຄົນ ທີ່ມີນ້ຳໃຈຮັກແພງຕໍ່ຄອບຄົວຂອງເຮົາ ".

ປ້າກອງມີພ້ອມດ້ວຍລູກໜົດທຸກຄົນ ຕ່າງກໍມີຄວາມຕື່ນເຕັ້ນດີໃຈ ຕໍ່ອຳນາດການປົກຄອງໃໝ່ ຊຶ່ງຈັດຕັ້ງຂຶ້ນຢ່າງຖືກຕ້ອງຕາມມະຕິຂອງມະຫາຊົນ ຊຶ່ງເປັນອຳນາດການປົກຄອງມີຈິດໃຈເສັຽສະລະ ເບິ່ງແຍງປະຊາຊົນໄດ້ຢ່າງທົ່ວເຖິງ.

" ນີ້ໃດປ້າຊິບົກຄອບຄົວກັບເມືອບ້ານ ".

" ປ້າຄຶດວ່າມື້ອື່ນນີ້ແຫລະ ໜັງສືທຸກຢ່າງທ້າວກອງມີໄປເຮັດຮຽບຮ້ອຍແລ້ວ ".

ທີ່ບ້ານໂພນເບົ້າ ຕາແສງໂພນຄຳ ເມືອງທຸລະຄົມ ອຳນາດການປົກຄອງບ້ານດັ່ງກ່າວ ໄດ້ຮູ້ຂ່າວການຈະກັບຄືນບ້ານເກີດເມືອງນອນ ຂອງປ້າກອງມີພ້ອມດ້ວຍລູກຫມົດທຸກຄົນ ຊາວບ້ານພາກັນດີໃຈ ພາກັນລົງກອງປະຊຸມຄະນະປົກຄອງບ້ານ ເພື່ອກຽມຮັບຕ້ອນເອົາອະດີດສະມາຊິກປະຈຳບ້ານ ຊຶ່ງໜີຈາກມືມານຮ້າຍໄປຢູ່ວຽງຈັນ ໄດ້ສິບສອງປີ ໃນກອງປະຊຸມນັ້ນຕາແສງເກົ່າທີ່ດຕານກໍໄດ້ມາຮ່ວມຟັງນຳ ກ່ອນໜ້ານັ້ນເຂົາໄດ້ແລ່ນເຕັ້ນຫາອຳນາດການປົກຄອງທຸກຂັ້ນ ເພື່ອປ້ອງສິດຜົນປະໂຫຍດທີ່ມັນໄດ້ມາດ້ວຍມືເປື້ອນເລືອດ ແຕ່ກໍບໍ່ມີອຳນາດໃດຊ່ວຍເຫລືອໄດ້ ເພາະອຳນາດການປົກຄອງທີ່ຕັ້ງຂຶ້ນໃຫມ່ເປັນອຳນາດຂອງປະຊາຊົນ ໃນທີ່ສຸດມັນກໍໄດ້ຮັບສາ

ລະພາບຕົວຈິງ ຊ້ອງໜ້າກອງປະຊຸມຊາວບ້ານໃນມື້ນັ້ນ.

ດົນນາຂອງປ້າກອງມີ ໒ ຜັ່ນ ນັບແຕ່ລຸງກອງມີຖືກຈັບ ໄປທໍລະມານຂ້າຕາຍ ດ້ວຍນ້ຳມືຂອງທະຫຸ່ນບ້ານເກີນແຕ່ປີ ໑໙໓໔ ນັ້ນ ຜູ້ບັນຊາການພາກຫ້າ ໄດ້ມອບເປັນກຳມະສິດ ຂອງຂ້າພະເຈົ້າເພື່ອເປັນລາງວັນ ໂດຍເຮັດໜັງສື ຊື້ຂາຍໃສ່ ເຈັ້ຍແລ້ວເຊັນຊື່ປອມຂອງປ້າກອງມີໃສ່ໜັງສື.

ການຮັບສາລະພາບດັ່ງກ່າວ ເມື່ອປະຊາຊົນຟັງແລ້ວທຸກ ຄົນໃຊ້ແສງຕາທີ່ມີເກືອບເປັນພັນໜ່ວຍ ຫລຽວສັກໃສ່ທິດ ຕານຕາແສງປະຕິການເກົ່າ ຄວາມເຈັບແຄ້ນຝັງແໜ້ນໄດ້ ເກີດຂຶ້ນພາຍໃນຈິດໃຈຂອງປະຊາຊົນຫາອັນປຽບບໍ່ໄດ້ບາງຄົນ ອົດບໍ່ໄດ້ຢືນຮ້ອງຂຶ້ນວ່າ ຂ້າຄົນໄດ້ນາສອງຜັ່ນດີຫລາຍ ບັກ ໜ້າພະໃຈມານ ບາງຄົນກໍວ່າ ກູຫາກໍຮູ້ດຽວນີ້ນໍ ບາງຄົນກໍ ບອກໃຫ້ເອົາໄປລົງໂທດຂ້າຖິ້ມ ຄວາມຕື່ນຕົວຂອງຊາວບ້ານຕໍ່ ການກະທຳຂອງອະດີດຕາແສງເກົ່າ ເຮັດໃຫ້ທິດຕານກະວົນ ກະວາຍໃຈຢ້ານປະຊາຊົນລົງໂທດ ມັນນັ່ງຊຸເຂົ່າແລ້ວຍໍມືນົບ ກົ້ມຂາບລົງຂໍໂທດ ອ່ອນປານຜັກໜຶ້ງຕໍ່ໜ້າປະຊາຊົນ.

ອຳນາດການປົກຄອງປະຈຳບ້ານ ຈຶ່ງໄດ້ປັບຄວາມເຂົ້າ ໃຈກັບປະຊາຊົນ ໂດຍຖືເອົາຫລັກສ້າງຄົນຊົ່ວໃຫ້ເປັນຄົນດີ ພ້ອມກັບນັ້ນຂໍໃຫ້ປະຊາຊົນ ຕິດຕາມເບິ່ງພຶດຕິການຂອງຜູ້

ກ່ຽວຕໍ່ໄປຊາວບ້ານຈຶ່ງເຂົ້າໃຈຕໍ່ເຈດຕະນາອັນບໍລິສຸດແລະສະຫລາດສ່ອງໃສຂອງພັກ  ຈຶ່ງພາກັນອົດກັ້ນທີ່ຈະລົງປະຊາທັນໃນຄືນນັ້ນ.

ຕອນທ່ຽງຂອງວັນທີ ໓/໔/໗໓  ອັນເປັນມື້ເດີນທາງກັບຄືນສູ່ທົ່ງນາຄອບຄົວຂອງປ້າກອງມີ  ລົດໂດຍສານສາຍວຽງຈັນບ້ານເກີນ ແລ່ນມຸ່ງໜ້າໄປດ້ວຍຄວາມໄວພໍສົມຄວນ ກອງມີລູກຊາຍຫົວແກ້ວຫົວແຫວນ  ນັ່ງຢູ່ເບາະທາງໜ້າເຂົາຫລຽວເບິ່ງສອງຟາກທາງດ້ວຍຄວາມສົນໃຈ ສິບສອງປີຜ່ານມາເຂົາເຄີຍທ່ຽວທາງເສັ້ນນີ້ແຕ່ນັ້ນມາກໍບໍ່ໄດ້ທ່ຽວ ສອງຂ້າງທາງແຕ່ກ່ອນເຕັມໄປດ້ວຍປ່າຣົກເຮື້ອບໍ່ມີເຄື່ອງປູກຂອງຝັ່ງຫຍັງໝົດ ເພາະທຸກຄົນຢ້ານກົວຕໍ່ອຳນາດມືດຂອງປະຕິການຂາຍຊາດ  ຫາກຜູ້ໃດອອກໄປເຮັດສວນຜູ້ນັ້ນກໍຖືກຂ້າຫາວ່າໄປສົ່ງເຂົ້າໃຫ້ອິດສະຫລະກົນ  ແຕ່ພວກປະຕິການກັບໄປຈັບຈອງຖາກຖາງເອົາດິນດອນປ່າໄມ້ໄດ້ຢ່າງສະບາຍບໍ່ມີໂທດອັນໃດ  ອັນນີ້ແຫລະຄືເລ່ຫລ່ຽມຂອງນາຍຮ້າຍແຜ່ນດິນ.

ບັດນີ້ນາຍຮ້າຍພວກນັ້ນ ໄດ້ຖືກກະແສຟອງປະຕິວັດພັດພວກເຂົາໜີໄປຢ່າງສົມຫົວໃຈຂອງປະຊາຊົນ  ທຸກຄົນໄດ້ຜ່ານຜ່າທຸກອຸປະສັກ  ຕໍ່ສູ້ດ້ວຍຈິດໃຈອັນໜຽວແໜ້ນທົນທານສົມກັບຊາດລາວເປັນຊາດນັກຮົບ  ມາດຽວນີ້ສອງຟາກ

ທາງເຕັມໄປດ້ວຍເຄື່ອງປູກຂອງຝັ່ງ ປະຊາຊົນມີສິດສ້າງສາ ໄດ້ເຕັມກຳລັງໃຈ ພູຜາປ່າໄມ້ຂຽວສົດງົດງາມເປັນໜ້າອອນຊອນ ນົກໜູປູປີກບິນສ່ວາຍສົນໄປມາ ສຽງນົກກົດນົກເຂົາ ນົກໂກບໂດກຮ້ອງປະສານກັນພາໃຫ້ອອນຊອນ ແຕ່ກ່ອນຖ້າ ນົກໂຕໃດສົ່ງສຽງຮ້ອງນົກໂຕນັ້ນກໍຕ້ອງຕາຍ ເຂົາຫລຽວໄປ ຕາມທົ່ງນາເຫັນໝູ່ງົວຄວາຍກິນຫຍ້າອ່ອນໜ້າກັບຄືນບ້ານ ເຫັນເດັກນ້ອຍຜູ້ໃຫຍ່ກຳລັງຍ່າງນຳຫລັງງົວຄວາຍ ບາງຄົນ ໄລ່ຈັບແມງກະເບື້ອຕົບຕັກແຕນ ຊີວິດທ້ອງທົ່ງນາຊ່າງອອນຊອນ ພໍຄຶດເຖິງຕອນນີ້ລົດລ້ຽວທັນທີ ເຂົາແນມເຫັນປ້າຍຂຽນວ່າທາງເຂົ້າບ້ານໂພນເປົ້າ ເຂົາຫງວກຫລຽວຫລັງເບິງແມ່ແລະນ້ອງ ກຳລັງນັ່ງໃຊ້ສາຍຕາເບິງອອກນອກທາງຄືກັນກັບເຂົາ.

ລົດນັ້ນດົງນ້ອຍໆຕົກໃສ່ທົ່ງນາ ເຂົາຍົກແຂນຂຶ້ນເບິງໂມງ ບ່າຍ ໖ ໂມງພໍດີ ຫລຽວຜ່ານທົ່ງນາກ້ວາງເຫັນໝູ່ບ້ານປາຍກັນເດັຍລະດາດ ສຳຫລັບບ້ານຂອງເຂົາຢູ່ໃນສູງ ແນມຈາກທົ່ງໄປເປັນຈຸ່ມກຸ່ມ ສາມາດຫລຽວເຫັນຕົ້ນພ້າວສາມກົກ ຢູ່ຫົວເຮືອນຕົ້ນຕານສອງກົກຢູ່ຕີນຕາກ້າ ພາບທີ່ເຫັນນັ້ນເຮັດໃຫ້ນ້ຳຕາຂອງເຂົາໄຫລອອກມາຢ່າງບໍ່ຮູ້ສຶກຕົວ ເຂົາກືນນ້ຳລາຍລົງຄໍຢ່າງແຄ້ນໃຈ ພາບເຫດການຂອງຄືນ

ນີ້ນັ້ນກັບມາຜ່ານສາຍຕາອີກ. . .

" ໂທ ! ພໍ່. . .".

ກອງນີ ຫລຽວຮ້ອງອອກມາຈົນເຮັດໃຫ້ໃຊເຟີລົດຫລຽວເບິ່ງເຂົາ ເຂົາຍົກແພນີ້ນທີ່ກຳໄວ້ເຊັດນ້ຳຕາຢ່າງຂົມຂື່ນທີ່ສຸດ.

" ກອງນີລົງລົດແນຣອດແລ້ວແດ ".

ເຂົາງວາກຫນ້າໄປ ເຫັນແມ່ລົງລົດໄປຢືນເບິ່ງພະນັກງານກຳລັງຂົນເຄື່ອງໂດຍມີຊາວບ້ານຫຸ້ມເຕັ້ນບາງຄົນກໍພາຍປືນມີສອງສາມຄົນບຸ່ງເຄື່ອງແບບຂອງກອງທັບມາຂົນຊ່ວຍ.

" ກອງນີຫລານພາແມ່ກັບມາແລ້ວບໍ ".

ສຽງຖາມປູ່ທາງຫລັງ ເຂົາງວາກຫນ້າໄປເບິ່ງເຫັນລຸງຈານເຝືອນພາຍປືນປືນທົວໃສ່ເຂົາ.

" ເຈົ້າ ຫລານພາແມ່ແລະນ້ອງກັບມາແລ້ວ ".

"ດີຫລາຍຫລານເອີຍກັບມາຢູ່ຮ່ວມກັນສ້າງສາເພີ້ມພູນຜະລິດຜົນ.

" ເຈົ້າ ຫລານກໍຄິດຈັ່ງຊັ້ນແຫລະ "

ເຄື່ອງຂອງກໍຖືກຂົນໄປໄວ້ ດ້ວຍການຊ່ວຍເຫລືອຂອງຊາວບ້ານທີ່ມາຕ້ອນຮັບ ກອງນີ ແມ່ແລະນ້ອງຍ່າງຕາມຫລັງລຸງຈານເຝືອນໄປ ທຸກຄົນຕ້ອງຕົກສະເງີ້ທັນທີ ເຂົາ

ຝັນໄປຫລືວ່າຈິງແທ້ ເຂົາຫລຽວເບິ່ງເຮືອນນ້ອຍໆສອງຫ້ອງພໍຢູ່ຄອບຄົວໜຶ່ງ ປຸກດ້ວຍເສົາໄມ້ໄຜ່ປູດ້ວຍຟາກໄມ້ໄຜ່ມຸງຫຍ້າມີເຮືອນຄົວເກາະອອກອີກ ເຂົາເຫັນບັນດາອ້າຍເອື້ອຍນ້ອງນັ່ງຢູ່ເທິງເຮືອນແລະໃຕ້ລ່າງ ລຸງຈານເພື່ອນກັວກມີເອົາເຂົາພ້ອມດ້ວຍແມ່ແລະນ້ອງໄປນັ່ງຢູ່ເດີ່ນບ້ານ.

ການກັບຄືນບ້ານເກີດເມືອງນອນ ຂອງຄອບຄົວປ້າກອງມີ ຊາວບ້ານທຸກຄົນມີຄວາມດີໃຈທີ່ສຸດ ພໍໄດ້ຍິນຂ່າວການຈະກັບມາແນ່ນອນ ຈາກໄທບ້ານເຮົາທີ່ໄປຂາຍຂອງຢູ່ວຽງທຸກຄົນພາກັນຕົກລົງຈັດຫາທີ່ຢູ່ຊົ່ວຄາວຕ້ອນຮັບດ້ວຍຈິດໃຈສາມັກຄີດັ່ງທີ່ເຫັນຢູ່ນີ້.

ສຳຫລັບບ່ອນເຮັດກິນ ຄືນາ ຊາວບ້ານພາກັນວາງໂຄງການເຮັດນາລວມໝູ່ຕາມທິດທາງນະໂຍບາຍຂອງພັກຊີ້ນຳສຳຫລັບດິນນາເກົ່ານັ້ນ ດາແສງຈາງວາງເກົ່າທີ່ດານໄດ້ສົ່ງຄືນໃຫ້ປ້າກອງມີ ເຮັດຢູ່ສ້າງກິນ:

ສຽງດົນຕີດັງສະນັ່ນຫວັ່ນໄຫວໄປທົ່ວບໍລິເວນບ້ານ ສ້າງຄວາມຕື່ນຕັນໃຈໃຫ້ທ້າວກອງມີແມ່ ແລະ ນ້ອງຈົນປາກບໍ່ອອກນ້ຳຕາແຫ່ງຄວາມດີໃຈໄດ້ໄຫລອອກມາໝົດທຸກຄົນກອງມີພື້ນພຳຢູ່ໃນໃຈວ່າ ເຮົາກຳລັງຢູ່ອ້ອມອົກການປະຕິວັດອັນອົບອຸ່ນ ຊຶ່ງໃຫ້ຄວາມອຸປະການະເຮົາທຸກຢ່າງຄືກັນກັບເຮົາ

ມີພໍ່ປູ່ໃນຄອບຄົວ  ສຽງດົນຕີວັນນະຄະດີປະຈຳບ້ານຕົນກອງ ຮ້ອງເພງດັງຟົດຟື້ນທົ່ວບໍລິເວນບ້ານເຮັດໃຫ້ບັນຍາກາດສົດຊື້ນແຈ່ມໃສ  ໃນຊີວິດໃຫມ່.

# ບ້ານນາທີ່ຮັກ

ໂດຍ . ພ. ພວງສະບາ

ບ້ານເວີນໄຊຕັ້ງຢູ່ແຄມຝັ່ງແມ່ນ້ຳຂອງ ທາງຝັ່ງຈຳປາສັກ ຢູ່ຫ່າງຈາກເມືອງປາກເຊໄປທາງທິດຕາເວັນຕົກ ປະມານຊາວປາຍຫລັກ ບຸນຄ້ຳໄດ້ຖືກຳເນີດເກີດຂຶ້ນໃນໝູ່ບ້ານດັ່ງກ່າວນີ້ ທ່ານກາງສາຍລົມແສງແດດແລະສາຍຝົນທ່າມກາງກິ່ນດິນສາບຄວາຍ ທ່ານກາງການຖືຖືກຖືຜິດຂອງຜູ້ຮັ່ງຜູ້ມີໃນບ້ານດຽວກັນ ເພາະຄອບຄົວຂອງເຂົາທຸກຈົນພໍ່ຂອງເຂົາບໍ່ມີສົມບັດແນວໃດຄອບຄົວຂອງເຂົາມີພຽງນານ້ອຍເອາະເຈາະທີ່ງດຽວກັບຄວາຍຕູ້ຂີ້ຕາໂຕໜຶ່ງ ເຖິງແມ່ນວ່າຄອບຄົວຂອງເຂົາຈະບໍ່ມີສົມບັດພາຍນອກກໍຈິງແຕ່ຄອບຄົວຂອງເຂົາມີສົມບັດພາຍໃນ ຄືເປັນຄອບຄົວທີ່ມີນ້ຳໃຈຮັກຊາດຮັກຄວາມບຸກທຳ ຮັກການປະຕິວັດ ມີຄຸນທຳແຫ່ງການປະຕິວັດຝັງເລິກຢູ່ໃນຫົວໃຈ.

ຄ່ຳມື້ນັ້ນ ຫລັງຈາກວົງພາເຂົ້າຂອງສອງແມ່ລູກ ຊຶ່ງມີແກງໜໍ່ໄມ້ໃສ່ຜັກຂະປະສົມກັບຜັກຂະແຍງ ແລະ ຕຳແຈ່ວແມງດາ ໄດ້ຜ່ານພົ້ນໄປແລ້ວ ແມ່ຂອງເຂົາກໍເອີຍປາກຂຶ້ນເໜືອນມີລາງສັງຫອນ ຫລືເວົ້າຕາມພາສາພື້ນບ້ານເຮົາກໍວ່າຜີບ່ອງປາກນັ້ນເອງ.

"ລູກເອີຍ . . . ດຽວນີ້ແມ່ນັບມື້ເຖົ້າ ປຽບຄືກົກໄມ້ໃກ້ຝັ່ງຄອງຖ້າແຕ່ຈະລົ້ມ ແມ່ຂໍຮ້ອງໃຫ້ລູກຕັ້ງໃຈຮຽນຫນັງສືໃຫ້ເກັ່ງໆ ຢ່ານ້ອຍໃຈໃນຄວາມທຸກ ຄວາມທຸກບໍ່ໄດ້ເປັນອຸປະສັກໃນການຮ່ຳຮຽນຂອງລູກແຕ່ຢ່າງໃດ ການຮ່ຳຮຽນເທົ່ານັ້ນຈະສ້າງອະນາຄົດຂອງລູກໃຫ້ກ້າວຫນ້າ ແລະໄດ້ກູ້ເອົາກຽດຂອງຄອບຄົວເຮົາ ທີ່ເຄີຍຖືກພວກຮັ່ງມີຖືຖືກຖືຜິດ".

ບຸນຄ້ານັ່ງຟັງບໍ່ປາກ ແຕ່ຈັບປຶ້ມບົດຮຽນມາພິເບິ່ງຊ້າໆແລ້ວກໍເວົ້າຕັດຄວາມຂອງແມ່ຂຶ້ນທັນທີ:

"ອີແມ່ນີ້ . . . ! ຈັກເວົ້າຫຍັງໄປນໍ . . . ບາດແນວເຮົາປາກຮູ້ ແນວເຮົາສົນໃຈ ຄືນາບໍ່ເວົ້າໃຫ້ຟັງແນ່ "

ແມ່ເຖົ້າແນມເບິ່ງຫນ້າລູກຊາຍ ແລ້ວນ້ຳຕາຂອງລາວກໍໄຫລຊຶມອອກມາ ເພາະລາວຮູ້ດີແກ່ໃຈວ່າ ສິ່ງທີ່ລູກຊາຍສົນໃຈປາກຮູ້ນັ້ນ ມັນບໍ່ແມ່ນເລື່ອງອື່ນເລື່ອງໄກ ມັນແມ່ນເລື່ອງຂອງພໍ່ນັ້ນເອງ ເພາະນັບແຕ່ຮູ້ຄວາມຄິດມາ ບຸນຄ້າໄດ້ເຫັນແຕ່ພຽງແມ່ເຖົ້າໆຜູ້ດຽວເປັນຜູ້ນຳພາຊີວິດໃນຄອບຄົວເຂົາຍັງບໍ່ຮູ້ວ່າໃບຫນ້າພໍ່ຂອງເຂົາຄືໃຜ ແລະ ບໍ່ຮູ້ວ່າພໍ່ຂອງເຂົາໄປຢູ່ໃສ ແມ່ນແຕ່ຮູບນ້ອຍໆແຜ່ນດຽວ ພໍ່ຂອງເຂົາກໍບໍ່ເຄີຍຖ່າຍຕິດໄວ້ຝາເຮືອນ ໃຫ້ເຂົາໄດ້ເຫັນເປັນອະນຸສອນໃນຊີວິດ ເພາະພໍ່ຂອງເຂົາບໍ່ເຄີຍຢືນຢູ່ຫນ້າກ້ອງຖ່າຍຮູບຈັກເທື່ອ

ເຄີຍປີ້ນຢູ່ແຕ່ກາງທົ່ງນານ້ອຍ ແລະ ຍ່າງຕາມກົ້ນຄວາຍຕູ້ຂີ້ຕາໂຕນັ້ນ ພໍ່ຂອງເຂົາບໍ່ເຄີຍໄດ້ຟັງດົນຕີ ເຄີຍຟັງແຕ່ສຽງກົບສຽງຂຽດສຽງຈີ້ຫລ່ແມງຊອນຮ້ອງ ບາງເທື່ອເຂົາໄດ້ເຫັນພວກຍາແມ່ຍານາງເພີນທາປາກແດງ ໆ ໄວ້ເລັບມືຍາວ ໆ ຍ່າງກາຍທົ່ງນານ້ອຍຂອງເຂົາໄປ ... ແຕ່ແມ່ເຖົ້າລາວກໍເຮັດໃຈແຂງແກ້ງຖາມອອກໄປວ່າ.

" ອັນໃດບໍ ...ທີ່ລູກສົນໃຈ ? ".

ບຸນຄ້ຳເຮັດຕາຕັ້ງໄປໃສ່ແມ່ ພ້ອມທັງບອກໃຫ້ແມ່ຮູ້ວ່າ :

" ກໍເລື່ອງອີພໍ່ນັ້ນເດ ...! ລາວໄປຢູ່ທາງໃດເກາະ?"

ແມ່ເຖົ້າໄດ້ຟັງແລ້ວ ກໍນັ່ງມິດງຽບຢູ່ດົນເຕີບ ແລ້ວເວົ້າອອກມາບາດຊ້າໆ ຕາມວາດຊົງຂອງຜູ້ເຖົ້າ.

" ພໍ່ຂອງເຈົ້າຊື່ເພີນວ່າອ້າຍພາ ຫນ້າຕາຂອງລາວຄືກັບອາວເປ້ນ້ອງຊາຍຂອງລາວນັ້ນແຫລະ ຕ່າງແມ່ກໍແຕ່ວ່າອາວເປ້ເຈົ້ານັ້ນ ລາວເປັນຄົນຫົວລ້ານແບ່ນ້ອຍຫນຶ່ງ "

ບຸນຄ້ຳຫົນຫວາຍໃຈເມື່ອຟັງແມ່ເວົ້າເລີຍເວົ້າຕັດບົດຂອງແມ່ອອກໄປວ່າ.

"ຈັກເວົ້າແນວໃດບຸ ...ພັນລະນາໄປເຖິງຮອດຫົວລ້ານຫົວເຖິ ຍັງວ່າອີພໍ່ລາວຢູ່ໃສດຽວນີ້ ?"

ແມ່ເຖົ້າຫາຍໃຈບາດຍາວໆ ພ້ອມທັງແນມເບິ່ງຫນ້າ

ລູກຕື່ມອີກ ແລ້ວຈຶ່ງຕອບອອກໄປແຕ່ພຽງສັ້ນໆວ່າ.

" ພໍ່ເຈົ້າຕາງດົນແລ້ວ ...!".

" ຫະ ... ລາວຕາຍດົນແລ້ວຫວະ ?".

ບຸນຄ້ຳຫລຸບເຂົ້າຕັກແມ່ ທຳທ່າຈະຮ້ອງໄຫ້ອອກມາ ແລະ ກໍຖາມແມ່ອອກໄປເພື່ອຄວາມແນ່ໃຈວ່າ.

" ລາວເປັນໄຂ້ບໍລາວຈຶ່ງຕາງ ?".

" ອື ...".

ແມ່ເຖົ້າຕອບພ້ອມທັງແກ່ວງຫົວໄປມາ ເປັນການປະຕິເສດຄວາມສົງໄສຂອງລູກຊາຍ ແລ້ວກໍຕອບອອກໄປວ່າ

" ລາວຖືກຍິງຕາຍ ...".

ບຸນຄ້ຳໄດ້ຟັງເທົ່ານັ້ນ ກໍລຸກພູດຂຶ້ນກຳກ່ຳປັ້ນທຳທ່າຂະໜັງຂະໜໍ ພ້ອມທັງກັດແຂ້ວ ຕາຂອງເຂົາແດງຄືແປວໄຟ ແລ້ວກໍເປັ່ງສຽງເວົ້າອອກມາດັງໆ ແລະ ຫນັກແຫນ້ນ.

" ໃຜເອີຍ... ມັນຍິງພໍ່ເຮົາຕາຍ ມັນກໍຈະຕາຍຄືກັນກັບພໍ່ຂອງເຮົາ ຕົນຕິດກໍຕ້ອງຕົນລ້າງ".

ແມ່ເຖົ້າຍິ້ມອອກມາເລັກນ້ອຍ ທີ່ໄດ້ເຫັນລູກຊາຍເປັນຫີ່ມີຄວາມກະຕັນຍູຕໍ່ຜູ້ໃຫ້ກຳເນີດ ແລ້ວກໍເລົ່າຄວາມຈິງໃຫ້ຟັງຕໍ່ໄປວ່າ:

" ໃຜຍິງໃຜຂ້ານັ້ນແມ່ບໍ່ຮູ້ດອກ ແມ່ຮູ້ແຕ່ວ່າຕອນນັ້ນແມ່ນ

ທະຫານຝະລັ່ງເສດ ເຂົ້າມາເຮັດເສິກໃນປະເທດເຮົາ ພວກ
ນີ້ມັນໄດ້ບີບບີ້ຂົ່ມເຫັງຄົນລາວ ແທບວ່າເລືອດຈະໄຫລອອກ
ຕາ ເວລານັ້ນຄອບຄົວຂອງເຮົາທີ່ທຸກຈົນຢູ່ແລ້ວ ບໍ່ມີເງິນຈະ
ໄປເສັຍສ່ວຍຄ່າຫົວໃຫ້ພວກມັນ ແລ້ວພວກມັນກໍຈັບພໍ່ຂອງ
ເຈົ້າໄປຂັງທໍລະມານ ແຕ່ເປັນຈັ່ງບຸນພໍ່ຂອງເຈົ້າໄດ້ເອົາຕົວ
ຫລົບຫນີຈາກທີ່ຄຸມຂັງຂອງພວກຝະລັ່ງເສດມາໄດ້ ແລະ ໃນ
ເວລານັ້ນກໍໄດ້ມີຄົນລາວຈຳນວນຫນຶ່ງ ທີ່ມີຈິດໃຈຮັກປະເທດ
ຊາດຮັກບ້ານເກີດເມືອງນອນຂອງຕົນບໍ່ຍອມກົ້ມຫົວໃຫ້ຝະລັ່ງ
ເສດຈຶ່ງໄດ້ພາກັນອອກໄປທຳການຕໍ່ສູ້ເພື່ອຫວັງປົດປ່ອຍຊາດ
ຖ້າແມ່ຈື່ບໍ່ຜິດແລ້ວໃນຕອນນັ້ນ ແມ່ໄດ້ຍິນພໍ່ຂອງເຈົ້າເລົ່າສູ່ຟັງ
ວ່າ ທ່ານສຸພານຸວົງ ເປັນຜູ້ນຳພາຕັ້ງຊື່ວ່າລາວອິດສະຫລະ
ພໍ່ຂອງເຈົ້າອອກໄປຮ່ວມການຕໍ່ສູ້ນຳເພິ່ນຫລາຍປີ ".

ແມ່ເຖົ້າເລົ່າມາເຖິງຕອນນີ້ ໄດ້ສັງເກດເຫັນວ່າລູກຊາຍມີ
ສີຫນ້າຊື່ນບານ ແລະສະແດງຄວາມສົນໃຈໃນເຫດການຂອງ
ພໍ່ແມ່ເຖົ້າຈັບເອົາໂບກຫມາກມາຕຳສຽງດັງຈົກໆແລ້ວເລົ່າຕໍ່
ໄປອີກວ່າ.

" ຕອນນັ້ນ ພໍ່ຂອງເຈົ້າໄດ້ຖືກມອບຫມາຍໃຫ້ນຳກຳລັງ
ມາຕີກັບພວກທະຫານແດງຂອງຝະລັ່ງ ຢູ່ທາງເຂດວັງເຕົ່າ
ຊ່ອງເມັກ ຕິດກັບແດນໄທທາງດ້ານຈັງຫວັດອຸບົນ ພໍ່ຂອງ

ເຈົ້າໄດ້ເສັຍຊີວິດຢູ່ສະຫນາມຮົບບ່ອນນີ້ເອງ "

ບຸນຄ້ານັ່ງຟັງບໍ່ປາກ ມີແຕ່ດອດຫົວງຶກໆ ສະແດງວ່າເຂົ້າໃຈໃນຄວາມເວົ້າຂອງແມ່ໄດ້ດີ ກ່ອນສອງແມ່ລູກຈະພາກັນກົ້ມຫົວລົງນອນ ແມ່ເຖົ້າໄດ້ຢ້ຳຄືນອີກເທື່ອຫນຶ່ງວ່າ.

" ຖ້າລູກຮຽນຫນັງສືເກັ່ງ ໄດ້ໄປເຮັດວຽກເຮັດການຢູ່ໃສກໍຢ່າລືມທົ່ງນານ້ອຍເຮົາເນີ ເພາະມັນໄດ້ລ້ຽງຊີວິດຂອງລູກມັນມີຄຸນຄ່າອັນມະຫາສານ ສຳລັບຄອບຄົວຂອງພວກເຮົາ" ຈາກນັ້ນສຽງໂອ້ລົມຂອງສອງແມ່ລູກ ກໍຄ່ອຍມິດງຽບໄປທ່າມກາງສາຍຝົນເດືອນແປດແຮມ ກຳລັງຕົກລົງມາໂຮຍຣຳທົ່ງນາສຽງເມັດຝົນທີ່ຕົກຖືກໄພຫຍ້າຄາມຸງຖຽງນານ້ອຍດັ່ງຄ້າຍກັບສຽງລະນາດ ສຽງກົບສຽງຂຽດສຽງອຶ່ງທີ່ຮ້ອງລະງົມໄປທົ່ວທົ່ງນາ ດັ່ງຄ້າຍກັບດົນຕີວົງໃຫຍ່ ກ່ອມໃຫ້ສອງແມ່ລູກໄດ້ພາກັນນອນຫລັບສະບາຍ.

ດ້ວຍປາດເຫື່ອ ທີ່ແມ່ຂອງເຂົາໄດ້ຮັບຈ້າງຕັດຟືນຂາຍປູກຫນາກສາລີທີ່ດອນຫົວນານ້ອຍຂາຍ ໄດ້ເກັບຫອມລອມລີ້ເງິນໄວ້ປີລະເລັກລະນ້ອຍ ຈົນເປັນທຶນເປັນຮອນໃຫ້ບຸນຄ້າໄດ້ຂຶ້ນມາຮຽນຫນັງສືຕໍ່ທີ່ວຽງຈັນເມື່ອປີ ໑໙໖໐ ໂດຍອາໃສວັດເປັນທີ່ພັກເຊົາ ເຂົາລ້ຽງຊີວິດດ້ວຍເຂົ້າກົ້ນບາດຂອງຄູບາມື້ໃດເປັນມື້ພັກໂຮງຮຽນ ເຂົາກໍໄປຮັບຈ້າງເຮັດການກໍ່ສ້າງ

ເພື່ອສ້າງເງິນເພື່ອໃຫ້ແມ່ເຖົ້າຢູ່ທາງບ້ານ  ເຂົາເປັນຄົນຕັ້ງອົກຕັ້ງໃຈຮຽນຫນັງສືຕາມຄຳແມ່ສັ່ງ  ການສອບເສັງອີກຊັ້ນຫນຶ່ງໄປຫາອີກຊັ້ນຫນຶ່ງຂອງເຂົາໄດ້ຕາມຄວາມຄາດຫມາຍ.

ເວົ້າເຖິງດ້ານອຸປະນິໄສໃຈຄໍແລ້ວ  ບຸນຖ້າເປັນທີ່ຮັກແພງຂອງຫມູ່ນັກຮຽນດ້ວຍກັນເປັນຢ່າງດີ  ແຕ່ເຂົາເປັນຄົນຫນຸ່ມທີ່ມີແນວຄິດ ໄຝ່ຝັນໃນສັງຄົມນິຍົມເປັນຊີວິດຈິດໃຈ  ເຂົາຮູ້ວ່າສັງຄົມນິຍົມນັ້ນບໍ່ມີຄົນກົດຂີ່ຄົນ  ບໍ່ມີການແບ່ງຊັ້ນວັນນະ ບໍ່ມີການເຫັນແກ່ຕົວ ບໍ່ມີການເອົາປຽບເອົາລັດກັນ ບໍ່ມີການດູດເລືອດກັນ  ບໍ່ເຫມືອນລັດທິລ່າຫົວເມືອງຂຶ້ນ  ພວກສັກດິນາປະຕິການ  ຊຶ່ງເຕັມໄປດ້ວຍການຂູດເນື້ອເຖືອຫນັງ ບໍ່ມີຄວາມບຸຕິທຳໃນສັງຄົມ  ເຕັມໄປດ້ວຍການສ້າງຮັ່ງຄູນມີແກ່ສ່ວນຕົວແລະພັກພວກ  ປະເທດຊາດປະຊາຊົນຈະຕົກຢູ່ໃນພາວະໃດກໍຕາມ ເຂົາມີແຕ່ກົ້ມຫນ້າກອບໂກຍ ສໍ້ຫລວງບັງລາດສໍ້ລາດບັງຫລວງ  ຜູ້ທຸກແມ່ນຖືກແບ່ງແຍກຕ່າງໆ ນາ ນາ ເຂົາເຄີຍໄດ້ປຸກລຸກໃຫ້ຫມູ່ນັກຮຽນແລະປະຊາຊົນ ມີການຕື່ນຕົວເຫັນໂທດກຳຂອງພວກນັກລ່າຫົວເມືອງຂຶ້ນ  ໃຫ້ທຸກຄົນມີຄວາມຮັກຊາດ . . . ເວລານັ້ນສົງຄາມໃນອິນດູຈີນ  ຊຶ່ງແມ່ນນັກລ່າຫົວເມືອງຂຶ້ນ  ຜູ້ທີ່ສອງຄືຈັກກະພັດອະເມລິກາໄດ້ກໍ່ຂຶ້ນ ໂດຍສະເພາະແມ່ນສານຊາດອ້າຍນ້ອງຄືລາວ ຫວຽດ

ບານ ແລະ ກຳພູຊາ ເຂົາເຄີຍຖືກສັກດີນາປະຕິການຂຸນເສິກ ລູກນີ້ຂອງຈັກກະພັດອາເມລິກາຊູ່ຈະເອົາຊີວິດຫລາຍເທື່ອ ......

" ບັກຫົວຄອມມຸຍນິດ ໃຫ້ມຶງດົ້ນຕໍ່ໄປເທາະ ຖ້າມຶງປາກໄປອາບນ້ຳແກ້ງບາງ ...! "

ແຕ່ເຂົາບໍ່ໄດ້ເຄີຍຕື່ນ ຄຳຂູ່ຂອງພວກປະຕິການແຕ່ລະເທື່ອເຫມືອນປາວິເສດ ເຮັດໃຫ້ຄວາມຮັກຊາດຂອງເຂົາຮ້ອນແຮງຂຶ້ນໄປເລື້ອຍໆ ... ເມື່ອປີ ໑໙໗໒ ເຂົາສອບເສັງນັດທະບິນພາກຕົ້ນໄດ້ເປັນຜົນສຳເຫລັດ ເຂົາດີໃຈ ແລະ ພູມໃຈໃນຕົວເອງທີ່ໄດ້ປະຕິບັດຕາມຄຳສັ່ງຂອງແມ່ ແລະ ຈະໄດ້ຮັບໃຊ້ປະເທດຊາດຕໍ່ໄປ ແຕ່ເຂົາກໍແສນເສັຍໃຈແລະຄຽດແຄ້ນເມື່ອໄດ້ຮັບຈົດຫມາຍສະບັບຫນຶ່ງທີ່ສົ່ງມາຈາກທາງບ້ານ ...!

" ບຸນຖ້າ . . ກ່ອນອື່ນອາວຄິດວ່າຫລານສະບາຍ ພ້ອມດ້ວຍການຮ່ຳຮຽນ ອາວໄດ້ຂຽນຈົດຫມາຍ ສະບັບນີ້ມາຫາຫລານ ດ້ວຍປົດນ້ຳຕາດ້ວຍຄວາມຄຽດແຄ້ນທີ່ສຸດເພາະແມ່ຂອງຫລານຖືກທະຫານຂອງພວກປະຕິການຈັບໄປ ອາວເສັຍໃຈແທ້ໆ ເພາະແມ່ຂອງຫລານຖືກພວກມັນຈັບໄປ ໂດຍທີ່ພວກມັນອ້າງເຫດຜົນພຽງນ້ອຍໆ ວ່າແມ່ຂອງຫລານລ້ຽງດູແນວລາວຮັກຊາດ ອາວຍັງໄດ້ຍິນພວກມັນຂູ່ວ່າ ຄອບຄົວສຸ

ມັນຫົວແຂງລູກຊາຍຂອງມຶງກໍເກັ່ງ.. ອາວເຊື່ອວ່າແມ່ຂອງຫລານຕ້ອງຖືກຍິງຕາຍ ເພາະຕາມລຸງທິດສາລາວບອກວ່າໄດ້ຍິນສຽງປືນດັງຂຶ້ນຫລາຍບາດປູ່ທາງຊີງນາໄຜ່ ...!

(ຈາກອາວເປ້)

ຈົດຫມາຍສະບັບນີ້ ເຂົາອ່ານດ້ວຍຄວາມເຈັບແຄ້ນທີ່ສຸດ ຫົວໃຈຂອງເຂົາລຸກຂຶ້ນເປັນໄຟກອງໃຫຍ່ ພໍ່ຂອງເຮົາອອກໄປຕໍ່ສູ້ປົດປ່ອຍຊາດ ກໍ່ຖືກທະຫານຫຸ່ນຂອງຝະລັ່ງຍິງຕາຍໃນສະໜາມຮົບ ແຕ່ເຂົາກໍພູມໃຈທີ່ພໍ່ຂອງເຂົາໄດ້ສະລະຊີວິດເພື່ອປະເທດຊາດ ແຕ່ແມ່ຂອງເຂົາເຖົ້າໆຊ້ຳພັດຖືກພວກປະຕິການ ທະຫານຫຸ່ນຂອງອາເມລິກາຫາເລື່ອງຫາລາວໃສ່ຈັບເອົາໄປຂ້າຖິ້ມຢ່າງບໍ່ມີຄວາມຜິດ ເຂົາຫລິງຮ້ອງອອກມາບາດດັງໆ...

" ແມ່ຂອງກູ ... ບໍ່ໄດ້ໄປຍາດຕອບຊີ້ນກັບພວກສູ ຖ້າພວກສູຕ້ອງການກິນບ້ານກິນເມືອງ ສູກໍພາກັນຫລັບຕາກິນຕໍ່ໄປດີ ແຕ່ພວກສູຈະຖືກປະຊາຊົນຜູ້ຮັກຊາດລົງໂທດໃນບໍ່ຊ້ານີ້".

– ເວລານັ້ນແປວໄຟແຫ່ງການປະຕິວັດ ຂອງປະຊາຊົນສາມຊາດກຳລັງລຸກຂຶ້ນຢ່າງແຮງ ບໍ່ມີອຳນາດປະຕິການໃດໆຈະມອດລົງໄດ້ ບຸນຄ້າໄດ້ເຂົ້າຮ່ວມທຸກການຕໍ່ສູ້ ເພື່ອໂຄ່ນລົ້ມ

ພວກຈັກກະພັດອາເມລິກາ ແລະ ພວກລູກສະໝຸນຂອງ ພວກເຂົາຄືພວກປະຕິການຂາຍຊາດ ໃນທີ່ສຸດກຳລັງປະຊາຊົນຜູ້ຮັກຊາດ ກໍໄດ້ລຸກຂຶ້ນປົດປ່ອຍທົ່ວປະເທດ ສຽງເພງປະຕິວັດດັງກ້ອງໄປທົ່ວປະເທດ ສຽງຂັບ ສຽງລຳສຽງໂຊໂຍໂຮ່ຮ້ອງ ເປັນການຕ້ອນຮັບໄຊຊະນະຄັ້ງປະຫວັດສາດ ດັງຟົດສະນັ່ນຢູ່ໃຕ້ຟ້າເມືອງລາວ ຊື່ສຽງຂອງບຸນຄ້ຳຜູ້ນຳຂະບວນການຊາວໜຸ່ມ ດັງກ້ອງຍິ່ງກວ່າສຽງຟ້າຮ້ອງ ... ແຕ່ເຂົາກໍບໍ່ຫວັງເອົາຊັ້ນອັນໃດ ໃນການນຳພາຂະບວນການຊາວໜຸ່ມເຮັດການປະຕິວັດ ເຂົາເຮັດເພື່ອຊາດເພື່ອປະຊາຊົນ ເພື່ອໃຫ້ລາວມີສັນຕິພາບເອກະລາດ ເພາະຄຳສັ່ງແມ່ຂອງເຂົາເມື່ອສິບປີກ່ອນວ່າ :

" ລູກຢ່າລືມທົ່ງນານ້ອຍຂອງເຮົາເນີ "

ມັນຍັງດັງກ້ອງຢູ່ໃນຮູຫູຂອງເຂົາຕະຫລອດມາເຂົາຮູ້ດີວ່າ ກະດູກສັນຫລັງອັນສຳຄັນ ທາງດ້ານເສດຖະກິດຂອງຊາດນັ້ນ ກໍຄືຊາວນາ ຫລັງການປົດປ່ອຍອຳນາດທຸກຢ່າງຕົກມາມື ຂອງປະຊາຊົນແລ້ວ ສຽງເພງປຸກໃຈຊາວນາ ໄດ້ກັງວານຂຶ້ນໃນທົ່ວສາລະທິດ ເຮັດໃຫ້ໃບໜ້າຂອງຊາວນາເບີກບານມ່ວນຊື່ນກັບເສັ້ນທາງຂອງຊີວິດອັນເປັນທຳຂອງເຂົາເຈົ້າ.

ບຸນຄ້ຳອຳລາວຽງຈັນກັບຄືນສູ່ບ້ານນາ ເຂົາກັບໄປເປັນ

ແມ່ພິມໃຫ້ກັບຊາວກະສິກອນ ເຂົາກັບເຖິງບ້ານເວີນໄຊດ້ວຍຫົວໃຈທີ່ອ້າງວ້າງ ເຂົາຂາດແມ່ທີ່ເຄີຍໃຫ້ຄວາມອົບອຸ່ນ ... ແຕ່ເຂົາກໍດີໃຈທີ່ໄດ້ເຫັນທົ່ງນານ້ອຍຂອງເຂົາ ບັງເປັນຂອງເຂົາ ພວກປະຕິການບໍ່ກ້າແຕະຕ້ອງ ເຂົາບໍ່ໄດ້ເຫັນຫນ້າແມ່ກໍຈິງ ແຕ່ເຂົາກໍໄດ້ເຫັນສີໄມ້ລາຍມື ຂອງແມ່ທີ່ສ້າງໄວ້ເປັນອະນຸສອນ ເຂົາເຫັນຕົ້ນກ້ວຍອັນດົກຫນາ ເຫັນຕົ້ນຫມາກມ່ວງທີ່ແສນງາມ ເຫັນສູນມັນຕົ້ນມັນກໍ ທີ່ດອນຫົວນາຊຶ່ງແມ່ຂອງເຂົາປູກໄວ້.

ບຸນຄ້າໄດ້ເປັນຜູ້ນຳພາຊາວບ້ານທຸກວຽກການ ຢ່າງຫ້າວຫັນ ເຂົາເປັນຄົນທີ່ຮູ້ຈັກການເສັຍສະລະ ຮູ້ຈັກການສ້າງປະໂຫຍດແກ່ສັງຄົມແລະປະເທດຊາດ ໂດຍສະເພາະແມ່ນດ້ານການເພີ້ມພູນຜະລິດຜົນ ເຂົາໄດ້ແນະນຳຊາວບ້ານເວີນໄຊໃຫ້ຮູ້ຈັກການອອກແຮງງານ.

" ຊາວນາທຸກຄົນເປັນພະລັງທີ່ສຳຄັນ ໃນການເພີ້ມພູນເສດຖະກິດໃຫ້ແກ່ຊາດ ຕາມທິດທາງທີ່ພັກໄດ້ວາງອອກນັ້ນທຸກຄົນຈົ່ງພາກພູມໃຈ ໃນພາລະກິດອັນມີກຽດຂອງຊາວນາເຮົາເອົາໄວ້"

ເຂົາຊີ້ແຈ້ງໃຫ້ຊາວນາລວມກຸ່ມຟັງ.

" ເອີ ... ວ່າຄືແນວນີ້ໃດແນ່ເນາະ ບາດວ່າພວກປະຕິ

ການມັນໂລດຖືວ່າພວກເຮົາຄືກັບໝູກັບໝາ ມັນປາກຢຽບ
ນີ້ໃດກໍປຽບໂລດ ບໍ່ໃຫ້ກຽດຊາວນາຈັກດີ "

ຈານທອງດີເວົ້າເສີມຂຶ້ນ ເພື່ອນຊາວນາພາກັນຕົບມືສຽງ
ດັງລັ່ນໆ ...

" ປາສາທບັງສ່ານີ້ສູງຈານ ອັນເຮົາເຮັດນາຊິຕາຍແລ້ວ
ພວກປະຕິການມັນສົ່ງນາຍທຶນຫນ້າເລືອດ ມາຫາກວນຊື້
ເຂົ້າໄປກັກຕຸນໄວ້ແລ້ວຂາຍໃຫ້ພວກເຮົາກິນ ລາຄາມັນໂກ່ງ
ເອົາປານຄ່າດອງລູກສາວມັນພຸ້ນຕວາ ... "

ເວົ້າສຸດອ້າຍສິນດີກໍເອົາຝາຕີນຫມູນຈັດໆ ກັດແຂ້ວຈົນ
ແບນເຫັນຜົງແກ້ມພົງຄືປາກັດເຫັນຄູ່ຕໍ່ສູ້.

" ເອີ ... ນັ້ນແຫລະຄວາມຊົ່ວຊ້າຂອງພວກປະຕິການ
ພວກເຮົາຈຶ່ງພ້ອມກັນ ຄຽດແຄ້ນມັນ ດຽວນີ້ລະບອບໃຫມ່
ພວກເຮົາເປັນເຈົ້າຕົນເອງຮັບຜິດຊອບທຸກວຽກງານ ເຮັດໄດ້
ຫລາຍ ເມື່ອເຫລືອປູ່ເຫລືອກິນແລ້ວສົ່ງຂາຍໃຫ້ລັດຖະບານ
ເພື່ອເພິ່ນຈະໄດ້ເກັບໄວ້ຂາຍໃຫ້ພວກເຮົາກິນໃນຍາມອຶດປາກ
ໃນລາຄາທີ່ຖືກຕ້ອງກັບຈິດໃຈຂອງປະຊາຊົນ "

ບຸນຄ້ຳອະທິບາຍຕໍ່ທຸກຄົນນັ່ງຟັງດ້ວຍຄວາມຕັ້ງໃຈ.

" ດຽວນີ້ລັດຖະບານມີນະໂຍບາຍ ປາກໃຫ້ຊາວນາພາ
ກັນເຮັດນາ ແບບລວມສູນຫລືລວມກຸ່ມ ເພາະເຫັນວ່າໄດ້ຜົນ

ດີ " ເຂົາອະທິບາຍຕື່ມອີກ.

" ແມ່ນຄວາມ ... ປີກາຍນີ້ຖ້າເຮັດໃພເຮັດມັນ ຂ້ອຍແມ່ນບໍ່ໄດ້ຮອດຫ້າສິບຫມື່ນຊ້ຳ ນາຂ້ອຍ ມັນກະຕ່າຍແລ່ນເຫັນຫາງ".

ອ້າຍສົມດີເຫັນພ້ອມ ແລະ ທຸກໆຄົນອອກສຽງເປັນທຳນອງດຽວກັນວ່າ:

" ເຫັນດີລວມກຸ່ມ ".

ທຸກປີໃດເມື່ອເຖິງເດືອນຫ້າຄ້ອຍ ໄປຫາເດືອນຫົກແລ້ວໃນຫມູ່ບ້ານເວີນໄຊ ຈະພົບແຕ່ຄຳຂວັນປຸກໃຈຊາວນາຢູ່ທຸກຈອກທຸກແຈ ...

" ເຮັດນາໃຫ້ທັນລະດູການ ແລະໄດ້ຮັບຜົນດີ "

ຊຶ່ງບຸນຄ້ຳໄດ້ຂຽນຕິດໄວ້ໃນຫມູ່ບ້ານຂອງເຂົາ ... ພ້ອມໆກັນກັບການປຸກລະດົມຊາວບ້ານ ໃຫ້ຮູ້ອອກແຮງງານນອກນີ້ເຂົາຍັງໄດ້ມີການຈັດຕັ້ງ ກຳລັງປ້ອງກັນຫມູ່ບ້ານຂອງເຂົາປ່າງຮອບດ້ານ ເພື່ອຮັບປະກັນຄວາມປອດໄພໃຫ້ແກ່ຊາວນາດ້ວຍກັນ ພວກປະຕິການທີ່ເຄີຍໃຊ້ຫມູ່ບ້ານນີ້ ເປັນບ່ອນຂູດເນື້ອເຫັ້ນກະດູກຊາວນາ ແລະ ເຄີຍອາຄາດຫມາດຫມາງຫມູ່ບ້ານນີ້ ວ່າເປັນໃຈອ້າຍນ້ອງແນວລາວຮັກຊາດນັ້ນ ... ແຕ່ຫລັງຈາກປະເທດໄດ້ຮັບການປົດປ່ອຍ ບຸນຄ້ຳໄດ້ກັບໄປເປັນ

ຜູ້ນໍາພາແລ້ວພວກປະຕິການຂາຍຊາດນັ້ນ ບໍ່ວ່າແຕ່ເຂົາຈະລັກລອບເຂົ້າມາຍ່າງຜ່ານບ້ານ ແມ່ນແຕ່ກິ່ນກຸຍຂອງເຂົາລົມກໍຍັງບໍ່ກ້າພັດມາຜ່ານບ້ານນີ້ອີກ ... ຊີວິດຊາວນາໃນໝູ່ບ້ານເວີນໄຊ ນັບມື້ ຄືນໜ້າຂະຫຍາຍຕົວ ບ້ານນາກໍຍັງເປັນທີ່ຮັກແລະຫວງແຫນຂອງທຸກໆຄົນ ບໍ່ມີປະຕິການໃດຈະກ້າເອີ່ຍປາກເຖິງ ຍ້ອນການຈັດຕັ້ງອັນແໜ້ນໜາ ຈຶ່ງມີຫລາຍໝູ່ບ້ານໄດ້ຖອດຖອນບົດຮຽນນໍາ.

# ບ້ານເກີດເຮົາ

ໂດຍ: ພ. ພວງສະບາ

ຄືນນັ້ນເດືອນເພັງ ສິບຫ້າຄ່ຳ ສ່ອງແສງແຈ້ງ ເຕັມດວງ ເຮັດໃຫ້ບັນຍາກາດໃນພື້ນໂລກມະນຸດ ສະຫວ່າງສະໄຫວແຕ່ ຄວາມງຽບສະຫງັດໄດ້ປົກຄຸ້ມໄປທົ່ວບໍລິເວນ((ເນີນພະເນົາ)) ຊຶ່ງເປັນຈຸດທີ່ພັກ ຂອງອົບພະຍົບລາວ ຕັ້ງຢູ່ຫ່າງຈາກຕົວ ເມືອງໜອງຄາຍເລັກນ້ອຍ, ບັນຍາກາດ ມັນງຽບຍິ່ງກ່ວານັ່ງຢູ່ ກາງປ່າຊ້າຜີດິບ. ສາຍລົມເປັນພັດຜ່ານມາຄ່ອຍໆສະຫັລບກັບ ສຽງໄກ່ຂັນເດິກເປັນການບອກເວລາ ແກ່ຊາວບ້ານ ປະສົມກັບ ສຽງຖອນລົມຫາຍໃຈ ສຽງກົນສຽງຄາງ ຂອງຊາວອົບພະຍົບ ທີ່ພາກັນນອນຂວ້າທ້ອງດ້ວຍຄວາມອຶດຫິວ ດັງມາກະທົບຫູ ມັນເຕືອນໃຫ້ຮູ້ວ່າ ຊີວິດຂອງທຸກຄົນໃນທີ່ນີ້ ກຳລັງຢືນຢູ່ທາງ ສາຍປ່ຽວທີ່ອ້າງວ້າງວ່າເວ່...!

ວິໄຊຍົກໂມງຢູ່ແຂນ ຂອງເຂົາຂຶ້ນມາເບິ່ງ ເປັນເວລາບ່າຍ ໜຶ່ງໂມງກາງຄືນແລ້ວ ເຂົາແນມເບິ່ງດວງເດືອນໄຕ້ທ້ອງຟ້າ ກຳລັງເຄື່ອນບ່າຍໄປເລື້ອຍໆ ແຕ່ເປືອກຕາຂອງເຂົາທັງສອງ ຍັງບໍ່ໄດ້ພັບລົງປະສານກັນເລີຍ ເຂົານອນພິກຊ້າຍ ພິກຂວາ ພະຍາຍາມຈະໃຫ້ມັນຫລັບ ແຕ່ມັນກໍ່ບໍ່ໄດ້ດັ່ງຈິດໃຈຄິດ ເພາະແນວຄິດມັນສະໝອງຂອງເຂົາກຳລັງຖືກກະວົນກະວາຍ

ເໝືອນຄົນໄຂ້ທີ່ຂາດໝໍຮັກສາ   ເຂົາຄິດເຖິງອາດີດປະຈຸບັນ ແລະ ອະນາຄົດເຂົາພົບແຕ່ຄຳຖາມ ແຕ່ບໍ່ມີຄຳຕອບ...! ເຂົາແນມເບິງສະຖານທີ່ເຂົາຊຸກຫົວນອນແຕ່ລະຄືນ   ດ້ວງຫົວໃຈທີ່ແສນທົດທູ່ເພາະຈະເອີ້ນວ່າ  ເຮືອນກໍ່ບໍ່ແມ່ນຈະວ່າຖຽງນາຮ້າງກໍ່ບໍ່ຖືກເພາະມັນເປັນແຕ່ພຽງ ທີ່ພັກຊົວຄາວ  ຂອງອົບພະຍົບລາວທີ່ເນີນພະເນົາເທົ່ານັ້ນ ເບົ້າຕາຂອງເຂົາທັງສອງປຽກຊຸ່ມໄປດ້ວຍຄາບນ້ຳຕາ   ເຂົານັ່ງໃຈໃນຊີວິດຂອງເຂົາທີ່ຕົກຢູ່ໃນສະພາບອ້າງວ້າງເໝືອນຄົນບໍ່ມີຊາດບໍ່ມີຕະກຸນ ເຂົາຄິດຢາກຮ້ອງໄຫ້ອອກມາດັງໆ  ເພື່ອລະບາຍຄວາມອຶດອັດໃຈ ແຕ່ມັນຈະມີປະໂຫຍດຫຍັງ...!

ແນ່ນອນເຂົາກຳລັງຫລົງເດີນທາງຜິດ ເຂົາເປັນຄົນຫູເບົາໃຈນໍ່ເຂົາຖືກຫລອກລວງມາ ຫວັງຈະເຫັນທາງເດີນ  ຂອງຊີວິດຢ່າງຮຸ່ງເຮືອງແຕ່ແລ້ວ ມັນກໍບໍ່ພົດໄປຈາກຄຳພະ ທີ່ທ່ານໄດ້ສອນໄວ້ວ່າອາໄສນ້ຳບ່ໜ້າບ່ອນອຶດຕາຍ!

(( ຊີວິດເຮົາບໍ່ຕ່າງຫຍັງ ກັບນົກຢູ່ໃນຕຸ້ມ ຖ້າມື້ໃດຜູ້ລ້ຽງດູເກີດຄວາມບໍ່ພໍໃຈ ບໍ່ຍອມໃຫ້ເຂົ້າໃຫ້ນ້ຳ ກິນມື້ນັ້ນຫລືວັນນາທີນັ້ນກໍຕ້ອງພົບກັບຈຸດຈົບຂອງຊີວິດ ເໝືອນໝາທີ່ຕາຍຢູ່ກາງຖະໜົນ)).

(( ນີ້ຫວະ..! ອິດສະລະພາບເສລີພາບທີ່ເຮົາໄດ້ເຕັ້ນໂຕນ

ໂບບໜີ ຈາກບ້ານເກີດເມືອງນອນຂອງຕົນມາຫວັງຈະໄດ້ຮັບຕາມຄຳໂຄສະນາຊວນເຊື່ອ ຂອງພວກເຂົາ...ແຕ່ດຽວນີ້ມັນກົງກັນຂ້າມ ໄປເສຽແລ້ວ ເຮົາກໍລັງເດີນທາງຜິດເຮົາ ກຳລັງຫັນຫລັງໃຫ້ກັບຄວາມມີອິດສະລະພາບເສລີພາບເຮົາກຳລັງກ້າວເດີນໄປສູ່ຄວາມ ຫາຍະນະແປວໄຟ ກອງໃຫ່ຍກຳລັງ ຈະເຜົາຜານເຮົາໃຫ້ດັບສູນໃນອີກບໍ່ຊ້ານີ້))

ເຂົາກຳລັງລະເມີຄິດ ມາເຖິງພຽງນີ້ ເຂົາກໍສະເດີດຕື່ນຂື້ນປ່າງແຮງ ເພາະສຽງຮ້ອງຂໍຄວາມຊ່ວຍເຫລືອ ຂອງຜູ້ບົງຄົນໜຶ່ງໄດ້ດັງມາກະແທກຮູຫູຂອງເຂົາ ເປັນສຽງຮ້ອງ ທີ່ປະສົມດ້ວຍສຽງໄຫ້..!

(( ໂອຍ..!ພີ່ນ້ອງເອີຍ..ຊ່ວຍແນ່..ຊ່ວຍຊີວິດລູກຂອງຂ້ຍໄວງແນ່ເທາະ ))

ວິໄຊພູດລຸກຂື້ນແລ່ນໄປຫາເຈົ້າຂອງສຽງ ທີ່ຮ້ອງຂໍຄວາມຊ່ວຍເຫລືອໃນທັນທີ ແລະກໍແມ່ນເຂົາຜູ້ດຽວທີ່ໄປຮອດກ່ອນໝູ່ພາບທີ່ປາກົດຕໍ່ຕາ ຂອງເຂົາກໍແມ່ນເອື້ອຍສີ ທີ່ເປັນອົບພະຍົບດ້ວຍກັນ ກຳລັງໂຊນລູກຊາຍນ້ຍຂອງລາວ ອາຍຸພຽງແຕ່ປີປາງບ່າງ ຫ່ວນໄປຫ່ວນມາທັງຜ່ອງຮ້ອງໄຫ້ວ້ອງ ຄວາມເສຽອົກ ເສຽໃຈ ຫາອັນໃດປຽບບໍ່ໄດ້...! ແຕ່ມັນກໍ່ຊ້າເກີນ ໄປເສຽແລ້ວທີ່ທຸກຄົນ ຈະຊ່ວຍເຫລືອ ໄດ້ເພາະທ້າວແອນ້ຍລູກຂອງ

ເອື້ອງສີ ໄດ້ຂາດໃຈໄປເສຽແລ້ວ ຍ້ອນທ້າວ ແອບັງ ໄດ້ລົ້ມວປ່ຽ ເປັນໂຣກຂາດອາຫານມາ ໄດ້ຫລາຍວັນແລ້ວ ແມ່ນກະທັງນໍ້າ ນົມ ຂອງເອື້ອງສີເອງຈະໃຊ້ລ້ຽງລູກກໍຍັງຫ່ຽວແຫ້ງ...!

ເຊົ້າຂອງມື້ນັ້ນ ແສງຕາເວັນໄດ້ຄ່ຽງ ເຄື່ອນຂຶ້ນພົ້ນຂອບ ຟ້າສີຄາມເປ່ງລັດສະໝີ ໃຫ້ແສງສະຫວ່າງ ແກ່ມວນມະນຸດ ໃຫ້ເບີກບານມີຊີວິດຊີວາ ແຕ່ບໍລິເວນເນີນພະເນົາກຳລັງເຕັ້ມ ໄປດ້ວຍຄວາມໂສກເສົ້າສະຫລົດໃຈ ໃພງ ກໍພາກັນລັ້ງໄຫລໄປ ຢື້ຢາມການຂ່າວ ເອື້ອງສີ ສະແດງຄວາມເສຽອົກ ເສຽໃຈນຳ ເອື້ອງສີທີ່ລາວໄດ້ສູນເສຽ ລູກຮັກກ້ອນເລືອດ ອັນປະເສີດ ຂອງ ລາວໄປ...!

ວິໄຊໄດ້ເຫັນສະພາບດັ່ງກ່າວ ຍິ່ງເກີດມີຄວາມກະວົນກະ ວາຍໃຈ ເຂົາຍ່າງອ້ອມໄປວຽນມາ ໃນບໍລິເວນ ເນີນພະເນົາ ເໝືອນຄົນທີ່ມີຄວາມຄິດທີ່ເລື່ອນລຽເຂົາຄິດໃນໃຈວ່າ..

(( ມັນເປັນມື້ສຸດທ້າຍ ທີ່ເຂົາຈະເຂົ້າແຖວປືນ ລໍຖ້າຮັບ ຂອງແຈກຢາຍ ມັນເປັນມື້ສຸດທ້າຍທີ່ເຂົາຈະຊຸກຫົວນອນເນີນ ພະເນົາ ມັນເປັນມື້ສຸດທ້າຍທີ່ເຂົາຈະທົນນັ່ງເບິ່ງ ຄວາມອ້າງ ວ້າງວ່າເວ່ຄວາມບໍ່ມີມະນຸດ ສະທຳແລະຄວາມ ສົກກະປົກເຣີ ຣ້າງຕ່າງໆໃນເນີນພະເນົາ ))

ວິໄຊໃຫ້ຄຳໝັ້ນສັນຍາ ກັບຕົນເອງ ຢ່າງເດັດຂາດວ່າຈະ

ທົນໃຊ້ຊີວິດຢູ່ຢ່າງຄົນຂໍທານລ້ຽງຊີວິດອີກຕໍ່ໄປບໍ່ໄດ້.

((ບ້ານເກີດເຮົາຍັງມີຄວາມອຸດົມສົມບູນບ້ານເກີດເຮົາຍັງຄຽງໃຫ້ຄວາມເປັນທຳ ແກ່ຊີວິດຂອງເຮົາຢູ່ສະເໝີ ເຮົາເປັນຄົນມີຊາດມີແຜ່ນດິນ ເຮົາຍັງມີບີ່ຫົ້ວດຕົວຂອງເຮົາວ່າ ເຮົາຄືຄົນລາວ ເຮົາຍັງມີເລືອດຮັກຊາດ ຮັກບ້ານເກີດ ເມືອງນອນຂອງຕົນ)) ເຂົາຄິດຕໍ່ໄປອີກວ່າ.

((ຄົນທີ່ຫລົງເດີນທາງຜິດຢ່າງ ເຮົາກໍວ້ອງມີໂອກາດສ້າງຕົວເອງ ໄດ້ທີ່ຜ່ານມາຄືວ່າ ມັນເປັນຄວາມຝັນຮ້າຍ ຊົ່ວລະຍະໜຶ່ງຂອງຊີວິດເຮົາຈະກັບເມືອຕາຍຢູ່ບ້ານເກີດເຮົາດີກວ່າ ))

ເຊົ້ານັ້ນເອງເຂົາໄດ້ຕັດສິນໃຈອຳລາເນີນພະເນົາດົນແດນແຫ່ງຄວາມອຶດປາກ ທໍລະມານເຂົາຍ່າງ. ຊັດເຊພະເນຈອນອອກຈາກເນີນພະເນົາ ດ້ວຍຄວາມຫິວໂຫຍ ມຸ່ງໜ້າສູ່ແດນຂອງແຫ່ງໜຶ່ງ ຊຶ່ງເປັນບັນໄດ ຂັ້ນສຸດທ້າຍ ທີ່ເຂົາ ຈະຍ່າງອອກຈາກມູມມືດ ຂອງຊີວິດກ້າວເດີນ ມາສູ່ແສງສະຫວ່າງຂອງຊີວິດໃໝ່ບົນເສັ້ນທາງແຫ່ງການປະຕິວັດ.... ມັນເປັນເວລາ ໑໒ ໂມງທ່ຽງວັນພໍດີທີ່ເຂົາໄດ້ເອົາຊີວິດລອດມາເຖິງແດນຂອງ ດ້ວຍຄວາມອິດລ້າ ແຕ່ເຂົາກໍດີໃຈ ພູມໃຈທີ່ໄດ້ເຫັນແມ່ນ້ຳຂອງກຳລັງໄຫລເຢັນ ເຫັນປາກຳລັງບ້ອນ ແນມເຫັນວຽງຈັນບ້ານເກີດເຂົາໄດ້ເຫັນດອກຝາງກຳລັງບານເຮືອງເຮືອເຫັນ

ຫາດຊາຍດອນຈັນຂາວງາມ ຕ້ອງແດດເປັນລະບິບໆເຂົາເລີ່ມ
ຄິດເຫັນຫນ້ານະໄລພອນ ທີ່ເຄີຍໄດ້ຮັກກັບເມື່ອຄາວກ່ອນ ເຂົາ
ຄິດຢາກຮ້ອງຝາກມາກັບສາຍລົມ ເພື່ອບອກໃຫ້ນະໄລພອນຢູ່
ທາງວຽງຈັນພີ້ວ່າ:

(( ນະໄລພອນ... ອ້າຍກຳລັງຈະກັບມາຫານ້ອງ... ອ້າຍ
ຢາກເຫັນຫນ້ານ້ອງ ອ້າຍຢາກຢູ່ໃກ້ໆນ້ອງ ອ້າຍຈະລະບາຍ
ຄວາມໃນໃຈໃຫ້ນ້ອງຟັງ ອ້າຍເປັນຄົນຫລົງຜິດ ຄົວໝ່ນະໄລ
ພອນນ້ອງຢ່າຖືໂທດໂກດເຄັ້ນອ້າຍເທາະ ດຽວນີ້ອ້າຍຈະກັບມາ
ຫານ້ອງແລ້ວ ວິນາທີໃດທີ່ອ້າຍໄດ້ຢຽບດິນວຽງຈັນອ້າຍຈະມາ
ຫານ້ອງເປັນຄົນທຳອິດ ອ້າຍເປັນຄົນກຳພ້າ ອ້າຍເປັນຄົນບໍ່ມີ
ພໍ່ບໍ່ມີແມ່ ອ້າຍມີນະໄລພອນຄົນດຽວ ເປັນເພື່ອນຊີວິດໃນບານ
ບາກ))

(( ນະໄລພອນດຽວນີ້ ດອກຝາງກຳລັງບານ ອີກບໍ່ດົນກໍ່
ຮອດມື້ບຸນບັ້ງໄຟ ວັດກາງອ້າຍຈະກັບມາ ພານ້ອງໄປທ່ຽວຄື
ທຸກໆປີ...ແຕ່ມື້ນີ້ນະໄລພອນຄົງຈະຄອງອ້າຍບ່າວຈີກໂກະໄປ
ເບິ່ງຫນັງແລ້ວໝໍ່ ເພາະມື້ນີ້ເປັນວັນອາທິດຖ້າຫາກອ້າຍບ່າວ
ຈີກໂກະ ຜູ້ນັ້ນ ຖາມ ເຖິງອ້າຍນະໄລພອນ ຄົງຈະເຮັດໃຈດຳໆ
ຕອບເຂົາວ່າອ້າຍຕາຍໄປເສຍແລ້ວ))

ເຊົ້າມື້ນັ້ນ ບັນຍກາດທົ່ວ ບາະຄອນຫລວງວຽງຈັນ ປອດ

ໂປ່ງແຈ່ມໃສແສງແດດສີອ່ອນຕ້ອງກັບດອກໄມ້ ນານາຊະນິດທີ່ກຳລັງເບັ່ງບານ ຊາວນະຄອນວຽງຈັນ ກຳລັງພາກັນອອກຈາກບ້ານ ເພື່ອປະກອບພາລະກິດ ວຽກງານໃຫ້ແກ່ປະເທດຊາດ... ວິນາທີທຳອິດທີ່ວິໄຊໄດ້ປຽບຍ່າງເຂົ້າມາເຖິງວຽງຈັນ ເຂົາໄດ້ຖືກຮັບຕ້ອນ ຈາກທາງອຳນາດການປົກຄອງ ປະຕິວັດເປັນຢ່າງດີ ເຂົາຊາບຊຶ້ງໃນຈິດໃຈ ຂອງເຂົາຫາອັນປຽບບໍ່ໄດ້ຄວາມກັງວົນ ສົນໃຈທີ່ເຂົາເຄີຍໄດ້ຍິນ ພວກປະຕິການໂຄສະນາຊວນເຊື່ອປູ່ເປີ່ນພະເນົາວ່າ:

(( ຖ້າໃຜກັບເມືອເມືອງລາວ ຈະຖືກອຳນາດການປົກຄອງລົງໂທດຫລືຂ້າຖິ້ມ))

ແຕ່ຄຳເວົ້າດັ່ງກ່າວ ມັນເປັນພຽງ ການໂຄສະນາ ໃສ່ຮ້າຍປ້າຍສີຂອງພວກປະຕິການເທົ່ານັ້ນ.

ໃນທົ່ວນະຄອນວຽງຈັນ ກໍຄືໃນທົ່ວປະເທດ ວິໄຊໄດ້ເຫັນສະພາບການທຸກຢ່າງມີການຫັນປ່ຽນແບບຫນ້າມືເປັນຫລັງມືຕາມຖະນົນຫົນທາງການສັນຈອນໄປມາ ຂອງບານພາຫານະ ແລະ ຜູ້ຄົນເຕັມໄປດ້ວຍຄວາມມີລະບຽບຮຽບຮ້ອຍ ພວກຈິກໂກະ ຈິກກິ່ນຸ່ງໂສ້ຂາບານ ນຸ່ງກະໂປ່ງເຂີນໆ ໃສ່ແຫ່ວນຕາຄວາງໄວ້ຜົມຍາວຂີ່ລົດຈັກເປີດທໍ່ເກັບສຽງແລ່ນແຂ່ງກັນໄປສູ່ຄວາມຕາຍຄວາມຈິບຫາຍ ຄວາມວາງວອດຄືລະບົບເກົ່າແມ່ນ

ບໍ່ມີອີກແລ້ວ ຕາມຮົ້ວການກຳແພງກໍເຕັມໄປດ້ວຍຄຳຂວັນ ທີ່ປຸກໃຈໃຫ້ຮັກຊາດ ຮັກບ້ານເກີດ ເມືອງນອນຂອງຕົນ ຊຶ່ງບໍ່ເໝືອນແຕ່ກ່ອນ ເຕັມໄປດ້ວຍປ້າຍໂຄສະນາ ສິນຄ້າຂອງພວກນາຍທຶນຈຳໜ່າຍ ເຕັມໄປດ້ວຍປ້າຍເປີດ ບາເປີດຊ່ອງໂສເພນີ ຕາມສະຖານທີ່ລັດຖະການ ແລະຕາມໜ້າບ້ານ ເຕັມໄປດ້ວຍສວນຜັກສວນນາງປະຊາຊົນຊາວນະຄອນວຽງຈັນແຂ່ງຂັນກັນປູກຝັງເປັນການອອກກຳລັງ ກາງໃນຕອນເຊົ້າ ຊຶ່ງຜິດຈາກໃນລະບົບເກົ່າພວກຍາພໍ່ຍາແມ່ຍານາງທັງຫລາຍ ພາກັນອອກກຳລັງກາງດ້ວຍການຫລິ້ນເບັ້ງເຈັ້ງໄພ້ຫລິ້ນຫວຍເຫງບີແລະໄດ້ເຫັນທຸງປະຕິວັດ ກຳລັງປິວສະບັດຢູ່ເທິງຍອດເສົາທົ່ວນະຄອນວຽງຈັນ...

ພາບທຸກຢ່າງ ທີ່ວິໄຊໄດ້ເຫັນນັ້ນເປັນການເຕືອນໃຈ ໃຫ້ເຂົາໄດ້ຮູ້ວ່າ ປະເທດລາວທີ່ຮັ່ງມີ ແລະ ສວຍງາມກຳລັງກ້າວເດີນໄປສູ່ ຄວາມສີວິໄລ ເປັນເຈົ້າຕົນເອງ ເປັນເຈົ້າປະເທດຊາດ... ເຂົາຜ່ອງຍ່າງ ຜ່ອງຄິວ ເພື່ອມຸ່ງໜ້າໄປສູ່ຄຸ້ມທາດຫລວງ ຊຶ່ງເປັນບ້ານຂອງມະໄລພອນ ໃນຈິດໃຈຂອງເຂົາຄິດວ່າຈະໄປພົບແລະບອກໃຫ້ມະໄລພອນຮູ້ວ່າ.

(( ເຂົາໄດ້ກັບມາບ້ານເກີດເມືອງນອນຂອງຕົນແລ້ວ ຢູ່ໃນອ້ອມແຂນທີ່ນາແໜ້ນແກ່ນແຂງຂອງອຳນາດການປົກຄອງ

ປະຕິວັດ ຊີວິດຂອງເຂົາ ເໝືອນກັບຢູ່ໃນກຳແພງເພັດ ທີ່ມີຄວາມປອດໄພຮອບດ້ານ))

ແຕ່ກໍເໝືອນວິນຍານ ຂອງເຂົາຫລຸດອອກ ໄປຈາກຮ່າງກາຍເມື່ອໄປເຖິງບ້ານ ນະໄລພອນ ແລະ ໄດ້ຮັບການບອກເລົ່າຈາກພໍ່ແມ່ຂອງນາງວ່າ:

(( ນະໄລພອນ ໄປຢູ່ດອນນາງແລ້ວ ເພື່ອຮັບການອົບຮົມດັດສ້າງແນວຄິດໃໝ່ ຍ້ອນວ່ານະໄລພອນຍັງບໍ່ມີການຕື່ນຕົວວ່າງຍັງມີການມົວເມົາກັບເສດເຫລືອຂອງລະບົບເກົ່າທີ່ເປື່ອຍເນົ່າລັດຖະບານຊຶ່ງເພິ່ນມີນະໂຍບາຍ ສ້າງຄົນໃຫ້ເປັນຄົນຈຶ່ງໄດ້ສົ່ງນາງໄປຮັບການອົບຮົມທີ່ດອນນາງ))

ເຂົາໄດ້ຟັງເທົ່ານັ້ນຫົວໃຈຂອງເຂົາເຕັ້ນແຮງເປັນຈັງຫວະເຂົາຄິດວ່າ ຄວາມຫວັງຂອງເຂົາ ໄດ້ກາຍເປັນຄວາມຝັນ ເສຍແລ້ວແຕ່ເຂົາຄິດຊົມເຊີຍໃນໃຈຢູ່ວ່າ...

(( ປານນີ້ນະໄລພອນຄົງຄຶ້ມຈິດເກົ່າໃຈຫລັງ ຄົງເປັນຄົນກ້າວໜ້າເປັນຜູ້ຍິງທີ່ດີໃຫ້ແກ່ປະເທດຊາດຜູ້ໜຶ່ງແລ້ວນໍ ))

ແຕ່... ວິໄຊກໍບໍ່ວາງໃນໃຈທີ່ຈະໄປຫານະໄລພອນໃຫ້ຈົນໄດ້ມື້ຕໍ່ມາເຂົາໄດ້ເຂົ້າສະເໜີຕົວຕໍ່ອຳນາດການປົກຄອງ ເພື່ອຂໍອະນຸຍາດເດີນທາງໄປຢ້ຽມຢາມນະໄລພອນທີ່ດອນນາງ.

ລົດໂດຍສານສາຍວຽງຈັນ-ໂພນໂຮງທ່າລາດຄ່ຽງ ເຄື່ອນ

ອອກຈາກນະຄອນວຽງຈັນ ມຸ່ງໜ້າໄປຕາມຖະໜົນ ເລກທີ ໑໓ ເຖິງແມ່ນວ່າ ຜູ້ຂັບຈະເລັ່ງຄວາມໄວປານໃດແຕ່ກໍ່ຍັງບໍ່ພໍໃຈຂອງວິໄຊເຂົາຢາກຫຍໍ້ລະຍະທາງເຂົ້າໃຫ້ສັ້ນໆ... ລົດ ໂດຽສານແລ່ນມຸ່ງໜ້າໄປເລື້ອຽໆ ຜ່ານທິວທັດປ່າດົງພົງໄພ ອັນຂຽວສະອຸ່ມຕາມສອງຟາກທາງທ່າມກາງສຽງນົກສຽງກາທີ່ສົ່ງສຽງເຈີດແຈ້ວ ເຂົາພາກພູມໃຈໃນຊີວິດທີ່ໄດ້ຫວນກັບຄືນມາເຫັນຄວາມງາມ ຂອງທຳມະຊາດ ບ້ານເກີດ ເມືອງນອນຂອງຕົນ ເຂົາໄດ້ເຫັນເພື່ອນຮ່ວມຊາດກຳລັງພາກັນອອກແຮງງານພັດທະນາເສດຖະກິດເພີ່ມພູນຜະລິດຜົນໜຸ່ມສາວບາງກຸ່ມທັງອອກແຮງງານ ທັງມ່ວນຊື່ນ ສົ່ງສຽງຮ້ອງລຳທຳເພງທີ່ມີລັກສະນະຊາດລັກສະນະກ້າວໜ້າລັກສະນະມະຫາຊົນ.

- ໃກ້ຄ່ຳຂອງມື້ນັ້ນແສງຕາເວັນຄ່ຽງໆ ຫຍັບລົງສູ່ຂອບຟ້າສີຄາມ ສົ່ງລັດສະໝີສີທອງ ຕ້ອງກັບທິວທັດ ດອນນາງສາຽ ລົມເປັນຄ່ຽ ພັດຜ່ານມາເປັນບາງຄັ້ງບາງຄາວ ຝູງນົກກາກຳລັງ ພາກັນບິນກັບຄືນສູ່ຮວງຮັງ ສຽງປອກລ້ມ່ວນຊື່ນ ຂອງເອື້ອຽນ້ອງທີ່ດອນນາງດັ່ງປະສົມກັບສຽງຮ້ອງ ຂອງສັດປ່ານານາຊະນິດເຮັດໃຫ້ບັນຍາກາດທີ່ດອນນາງມີຊີວິດຊີວາຂຶ້ນ...

- ຂະນະທີ່ມະໄລພອນ ກຳລັງນັ່ງລວມກຸ່ມແລກປ່ຽນບົດຮຽນຢູ່ນັ້ນ ກໍໄດ້ຍິນສຽງບາດຕີນຂອງນາງບຸນມີ ຊຶ່ງເປັນເອື້ອຽ

ລ້ຽງປະຈຳປູ່ວອນນາງຍ່າງມາຫາທຸກຄືນພາກັນ ອ່ວງໜ້າແນມໄປເບິ່ງນາງບຸນມີເປັນຈຸດດຽວກັນ.

(( ມະໄລພອນ...ມະໄລພອນ)).

ສຽງຂອງນາງບຸນມີຮ້ອງມາ ໃສ່ນາງມະໄລພອນ ຮີບຟ້າວລຸກຂຶ້ນທັງຫົວໃຈ ຂອງ ນາງເຕັ້ນຕຶກໆ ແລ້ວຈຶ່ງ ຕອບນາງບຸນມີອອກໄປວ່າ.

(( ປູ່ )).

ແລ້ວນາງກໍຢືນມິດງຽບຄືຄົນບໍ່ມີວິນຍານ ແຕ່ແສງຕາອັນແຫລມຄົມ ຂອງນ າງຍັງຈັບປູ່ທີ່ເຮືອນ ຮ່າງຂອງນາງບຸນມີດ້ວຍຄວາມສົງໄສ...!

(( ມີພີ່ນ້ອງ ມາຈາກວຽງຈັນ ເພິ່ນປາກພົບ ກັບມະໄລພອນ )).

ແຕ່ນາງຍັງບໍ່ທັນໄດ້ຕອບ ແນວໃດເທື່ອ ນາງບຸນມີກໍເວົ້າສອດຂຶ້ນຕື່ມອີກວ່າ.

(( ອ້າງນັ້ນລາວບອກວ່າລາວຊື່ວິໄຊ )).

ຄຳເວົ້າທີ່ຫລຸດອອກຈາກປາກຂອງນາງບຸນມີມັນໄດ້ແລ່ນເຂົ້າຕຳຂົ້ວຫົວໃຈຂອງມະໄລພອນ ເໝືອນ ກັບແສງຟ້າທີ່ຜ່າລົງກາງໃຈນາງບໍ່ຕອບແນວໃດຮິມສົບຂອງນາງເຫນັ່ງບຸບບັບໃບຫນ້າອັນຂາວນວນຂອງນາງ ປ່ຽນເປັນສີະສ້າງ ນ້ຳຕາອັນ

ເປັນເພື່ອນຊີວິດ ທີ່ຊື່ສັດຂອງລູກຜູ້ຍິງ ກຳລັງຈະເລີ່ມປະກົດ
ອອກມາບາງພະບາບາມອົດກັ້ນເອົາໄວ້ ບາງກັດຮີມສົບເບື້ອງ
ລຸ່ມຂອງນາງໄວ້ແຫນ້ນບາງບໍ່ປາກເຊື່ອຄຳເວົ້າ ຂອງນາງບຸນ
ມີທີ່ບອກວ່າ ມີຄົນຊື່ວິໄຊປາກພົບ ເພາະນາງຮູ້ແກ່ໃຈດີວ່າວິ
ໄຊນັ້ນເຖິງຈະເຄີຍຮັກກັນກໍຈິງແຕ່...

((ວິໄຊເຂົາໄດ້ໂດບຫນີໄປຢູ່ປະເທດໄທນຳພວກປະຕິການ
ແຕ່ດົນແລ້ວ ວິໄຊຈະກັບມາຫານາງອີກນັ້ນ ມັນເປັນເລື່ອງທີ່
ເຫລືອເຊື່ອ)) ນາງຄິດໃນໃຈແລະຄິດວ່າໄປອີກວ່າ:

(( ວິໄຊເຂົາເປັນຄົນໃຈດຳເຂົາລືມໄດ້ແມ່ນກະທັ້ງປະເທດ
ຊາດບ້ານເກີດເມືອງນອນຂອງຕົນ ເປັນຄົນທີ່ເນລະຄຸນກໍບ້ານ
ເກີດ))

(( ໄປແມ... ນະໄລພອນ ຢ່າເຮັດເປັນຄົນໃຈແຂງ ຄືຫີນ
ຫລາຍຕີເຫັນວ່າມີຄົນປາກພົບກະລາງ ))

ນາງທອງຄຳ ເວົ້າຂຶ້ນເປັນການທຳລາຍຄວາມງຽບ ເອື້ອງ
ນ້ອງທີ່ນັ່ງລວມກຸ່ມ ແລະ ນາງບຸນມີພາກັນຫົວຂຶ້ນບາດດຽງ
ພ້ອມທັງພາກັນຕົບມື ເປັນການຊົມເຊີຍ ນະໄລພອນ ບໍ່ປາກ
ເພວໃດ ແຕ່ເຮັດຫນ້າແດງຄືໝາກຝາງສຸກ ແລ້ວນາງກໍຍ່າງ
ຕາມຫລັງຂອງນາງບຸນມີອອກຈາກກຸ່ມໄປ...

– ວິນາທີນັ້ນມັນເຕັມໄປດ້ວຍຄວາມຕື່ນຕັນໃຈ ຫາອັນປຽບ

ບໍ່ໄດ້ ທັງສອງໄດ້ພົບກັນ ເທື່ອນີ້ເໝືອນວາງແລ້ວ **ເກີດ** ໃໝ່ ເພາະເຂົາເຄີງຄິດວ່າຊາດນີ້ທັງຊາດຄົງຈະບໍ່ມີໂອກາດໄດ້ພົບກັນອີກແຕ່ໃນທີ່ສຸດພວກເຂົາທັງສອງກໍ່ໄດ້ໝູນມາພົບກັນຈົນໄດ້ເພາະໂລກມັນກົມ ເມື່ອໄດ້ພົບກັນໃນວິນາທີນັ້ນ ເຂົາທັງສອງເກືອບຈະຮ້ອງອອກມາພ້ອມໆກັນ.

((ອ້າງວິໄຊ..!))

((ແມ່ນແລ້ວ... ນະໄລພອນອ້າງກຳລັງມາຫານ້ອງອ້າງດີໃຈທີ່ໄດ້ເຫັນຫນ້ານ້ອງ))

– ພຽງແຕ່ເທົ່ານັ້ນ ບັນຍາກາດທີ່ຫ້ອງຮັບແຂກ ທີ່ດອນບາງກໍມີດງງຽບໄປ ທັງສອງຢືນແນມເບິ່ງຫນ້າກັນ ດ້ວຍຄວາມດີໃຈ ພາກພູມໃຈ ແສງຕາຂອງທັງສອງແນມໄປປະສານກັນຢ່າງບໍ່ລົດລະແຕ່ປາສະຈາກຮຽຍິ້ມຢົດນ້ຳຕາ ຂອງແຕ່ລະຄົນຄ່ຽງ ໄຫລຊຶມອອກມາພ້ອມໆ ກັບສຽງຖອນລົມຫາຍໃຈຂອງແຕ່ລະຄົນດັງແຮງຂຶ້ນໆ ທັງສອງແລ່ນເຂົ້າຈັບມືກັນ ດ້ວຍສັດທາຮັກດືງດູດວິໄຊກຳຝາມືອັນສ້ວງ ແລະ ບອບບາງຂອງນາງໄວ້ແໜ້ນ ແລະ ເຕັ້ນໄປດ້ວຍອາງອຸ່ນແຕ່ແສງຕາຂອງເຂົາຍັງຈັບຢູ່ທີ່ໃບຫນ້າຂອງກັນ ແລະກັນຫນ່ວຍຕາຂອງແຕ່ລະຄົນມີສີແດງປະກົດອອກເພາະມັນອາບດ້ວຍຢົດນ້ຳຕາຂອງຄວາມດີໃຈ...!

((ອ້າງວິໄຊ...ນ້ອງບໍ່ເຄີຍຄິດວ່າ ໃນຊົ່ວຊີວິດນີ້ພວກເຮົາຈະໄດ້ພົບກັນອີກ ເພາະພວກເຮົາໄດ້ແຍກທາງກັນເດີນນ້ອງເດີນບົນເສັ້ນທາງປະຕິວັດ ແຕ່ອ້າງກັບໄປເດີນເສັ້ນທາງສາງປ່ງວບໍ່ມີຈຸດທີ່ໝາງ ))

((ນະໄລພອນ... ອ້າງເສຽໃຈອ້າງຍອມຮັບຜິດ ທີ່ອ້າງຕ້ອງເຮັດໃຫ້ຄວາມຮັກຂອງພວກເຮົາ ຂາດຫາງໄປຊົ່ວລະຍະໜຶ່ງ ອ້າງເປັນຄົນຜິດທຸກຢ່າງ ອ້າງໜີໄປໂດຍບໍ່ມີເຫດຜົນ ແລະ ບໍ່ໄດ້ບອກແມ່ນກະທັ້ງຄຳວ່າ ລາກ່ອນນະໄລພອນ )) ເຂົາຢຸດຄິດນັ່ງໜຶ່ງແລ້ວກໍເວົ້າຂຶ້ນຕື່ມວ່າ.

(( ອ້າງຈື່ໄດ້ວ່າຫລັງຈາກປະຊາຊົນລາວຜູ້ຮັກຊາດໃນທົ່ວປະເທດໄດ້ມີການລຸກຮືຂຶ້ນ ຂັບໄລ່ຈັກກະພັດອາເມລິກາ ແລະພວກປະຕິການຂາຍຊາດ ໃຫ້ໜີອອກຈາກປະເທດລາວແລ້ວ ອ້າງໄດ້ຖືກກົນລວງ ຂອງພວກມັນ ອ້າງໄດ້ໜີຈາກບ້ານເກີດເມືອງນອນຂອງຕົນ ໄປກັບພວກມັນແຕ່ໃນທີ່ສຸດກໍບໍ່ມີຫຍັງດີນອກຈາກ ພົບກັບຄວາມທົນທຸກ ທໍລະມານ ທີ່ແສນສາຫັດດຽວນີ້ທຸກໆ ຄົນທີ່ຫລົງໄປກັບພວກມັນ ຕ່າງກໍເອົາຫົວເຂົ່າເຊັດນ້ຳຕາອ້າງທົນຢູ່ກັບພວກມັນອີກບໍ່ໄດ້ອ້າງຈຶ່ງໄດ້ຕັດສິນໃຈກັບຄືນມາບ້ານເກີດເຮົາ ເພື່ອປະກອບສ່ວນ ສ້າງສາປະເທດຊາດໃຫ້ກ້າວໜ້າ ຕາມນະໂຍບາຍຂອງລັດຖະບານຊຶ່ງເປັນຜູ້

ນຳພາ ທີ່ສະຫລາດສ່ອງໃສ... ມະໄລພອນ ເຮົາມາເລີ່ມຕົ້ນຊີວິດຮັກຂອງພວກເຮົາອີກເທື່ອຫນຶ່ງເທາະ ແລະ ຂໍໃຫ້ຄວາມຮັກຂອງພວກເຮົາອະມະຕະຕໍ່ໄປ. ))

ມະໄລພອນຍິ້ມອອກມາ ດ້ວຍທ່າທາງສີອາຍໆ ວາດໃດວາດຫນຶ່ງ ແລ້ວກໍ່ຕອບດ້ວຍນ້ຳສຽງສີເສົ້າໆ ...

"ນ້ອງຍິນດີຕາມຄຳສະເຫນີຂອງອ້າຍນ້ອງດີໃຈທີ່ໄດ້ເຫັນວ່າອ້າຍມີການຕື່ນຕົວ ມີຈິດໃຈຮັກຊາດ ຮັກບ້ານເກີດເມືອງນອນຂອງຕົນຕັດສິນໃຈກັບຄືນມາເປັນພົນລະເມືອງດີ ໃຫ້ແກ່ປະເທດຊາດລັດຖະບານ ໄດ້ຮຽກຮ້ອງປູ່ສະເຫນີໃຫ້ທຸກຄົນທີ່ຫລົງຜິດກັບຄືນມາ ລັດຖະບານໃຫ້ອະໄພທຸກຢ່າງ ເພາະລະບອບນີ້ແມ່ນລະບອບສ້າງຄົນ ໃຫ້ເປັນຄົນ ໃຫ້ຮູ້ຈັກຮັກປະເທດຊາດຂອງຕົນເຫນືອກວ່າຊີວິດຈິດໃຈ".

" ອ້າຍດີໃຈຫາລຶງປຽບບໍ່ໄດ້ທີ່ໄດ້ກັບຄືນມາປະເທດຊາດ ແລະໄດ້ເຫັນນ້ອງເຂົ້າມາຮັບການອົບຮົມດັດສ້າງແນວຄິດຈິດໃຈໃຫມ່ ອ້າຍຂໍຊົມເຊີຍຕໍ່ຄວາມກ້າວຫນ້າຂອງນ້ອງ ອ້າຍຍອມຮັບວ່າເວລານີ້ ນ້ອງໄດ້ເດີນຕາມເສັ້ນທາງແຫ່ງການປະຕິວັດ ໄປກ່ອນອ້າຍໄດ້ຫລາຍກ້າວແລ້ວ ອ້າຍຂໍສາບານຕໍ່ນ້ອງວ່າອ້າຍຈະບໍ່ຂໍເດີນທາງຜິດອີກ ອ້າຍຮູ້ດີແກ່ໃຈແລ້ວວ່າ ເສັ້ນທາງນັ້ນມັນເຕັມໄປດ້ວຍຂວາກແລະຫນາມ ອ້າຍ

ຈະຂໍອຸທິດຊີວິດແລະເລືອດເນື້ອ ເຂົ້າຮັບໃຊ້ຢູ່ໃນກອງທັບປົດປ່ອຍປະຊາຊົນລາວ ອ້າຍຈະຂໍກໍາປືນ ຢືນປົກປ້ອງແຜ່ນດິນບ້ານເກີດເຮົາ ນີ້ໃຫ້ສະຫງົບເພື່ອໃຫ້ເກີດສັນຕິພາບ ເອກະລາດປະຊາທິປະໄຕເອກະພາບວັດທະນາຖາວອນ ແລະ ກ້າວຫນ້າທາງສັງຄົມຕໍ່ໄປ ".

ທັງສອງຢືນຕໍ່ກັນຢ່າງມີຄວາມສຸກສົດຊື່ນເພາະຕົ້ນດອກຮັກຂອງເຂົາທັງສອງ ກໍາລັງຖືກສາຍຝົນໂປຍລົງ ຮໍາໃຫ້ຊຸ່ມຊື່ນ ...

ນ້ອງຍິນດີທີ່ສຸດ ຖ້າອ້າຍຈະເຂົ້າຮັບໃຊ້ຢູ່ໃນກອງທັບປົດປ່ອຍ ນ້ອງພ້ອມແລ້ວທີ່ຈະໃຫ້ກໍາລັງໃຈແກ່ອ້າຍທີ່ເປັນຮົ້ວປ້ອງກັນຊາດ ນ້ອງຢູ່ແນວຫລັງຈະຊື່ສັດສຸດຈະລິດຕໍ່ຄວາມຮັກຂອງພວກເຮົາ ຈົນກ່ວາວັນແຕ່ງດອງຈະມາເຖິງ "

ຄືນນັ້ນທັງສອງໄດ້ເລົ່າເຖິງອະດີດທີ່ຜ່ານມາ ເປັນການແລກປ່ຽນແນວຄິດ ແລະ ໂອ້ລົມກັນແບບນັກປະຕິວັດ ... ເຊົ້າຂອງວັນຕໍ່ມາ ທັງສອງໄດ້ຈັບມືອໍາລາກັນໄປປະກອບພາລະກິດ ໃນການປົກປັກຮັກສາປະເທດຊາດ ທ່າມກາງສຽງເພງທີ່ລອຍອອກມາຈາກ ຄື້ນວິທະຍຸ ໃນຫ້ອງຮັບແຂກທີ່ດອນນາງ ...

" ເຮົາຄົນລາວບໍ່ແມ່ນໃຜອື່ນ "

ທັງສອງໃບກໍ່ອຳລາກັນ ປະສົມກັບຮອຍຍິ້ມອັນລະທຶກໃຈແລ້ວ ພາບຂອງເຂົາທັງສອງກໍຄ່ອຍໆ ລັບຈາກສາຍຕາຂອງກັນແລະກັນໄປຈົນສຸດສາຍຕາ.

# ຄືນສູ່ບ້ານນາ

ໂດຍ ... ປ່ຽມ ຈຸນລະມຸນຕຣີ

ສາຍຝົນເດືອນຫົກໄດ້ສາດເທລົງມາສູ່ຫມູ່ບ້ານນາ ຢ່າງບໍ່ຂາດສາຍ ອັນເປັນປາກົດການໃຫມ່ທີ່ເຮັດໃຫ້ຊາວບ້ານນາ ພາກັນຊົມຊື່ນຍິນດີ ໄດ້ມີໂອກາດຮັບເອົາຄວາມຊຸ່ມຊື່ນຂອງທຳມະຊາດພ້ອມທັງຍັງເຮັດໃຫ້ດິນດອນຕອນຫຍ້າ ດົງດອນທີ່ຖືກແຜດເຜົາດ້ວຍຄວາມຮ້ອນຈາກແສງແດດກ້າ ຕົ້ນໄມ້ຕາຍຫ່ຽວແຫ້ງແລ້ງມາແລ້ວນັ້ນ ກັບກາຍເກີດມີຄວາມຊຸ່ມເຢັນ ອັນເປັນນິມິດຫມາຍບອກໃຫ້ຊາວບ້ານນາກຽມຕົວກຽມໃຈລົງມືທຳການປູກຝັງກັນຕໍ່ໄປ ...

– ຕາມທຳມະດາຕະຫລອດໄລຍະ ສິບກວ່າປີຜ່ານມາແລ້ວ ຊາວບ້ານນາ ບໍ່ເຄີຍໄດ້ຮັບສາຍຝົນແຕ່ຫົວປີຄືແນວນີ້ຈັກເທື່ອ ບ້ານນາເປັນພຽງແຕ່ຊື່ເທົ່ານັ້ນ ເຊິ່ງໄດ້ຮັບຄວາມແຫ້ງແລ້ງ ຍາກແກ່ການຫາຢູ່ຫາກິນ ຈົນເຮັດໃຫ້ຊາວບ້ານບາງສ່ວນທີ່ບໍ່ສາມາດທົນຢູ່ກັບຄວາມອຶດຢາກແຫ້ງແລ້ງນັ້ນໄດ້ ຕ້ອງພາກັນຖົກຖອນຕົວຫນີອອກຈາກບ້ານນາ ໄປຊອກຢູ່ຊອກກິນຢູ່ບ່ອນອື່ນ ເພື່ອໃຫ້ຊີວິດຂອງຕົນແລະຄອບຄົວເອົາຕົວລອດໄປໄດ້ວັນຫນຶ່ງເທົ່ານັ້ນ ບ້ານນາບໍ່ແມ່ນວ່າຈະຖືກແຕ່ໄພທຳມະຊາດເຮັດໃຫ້ໄດ້ຮັບກັບຄວາມທຸກຍາກ ເດືອດຮ້ອນເທົ່ານັ້ນ

ແຕ່ອຳນາດອາດຍາສິດປົກຄອງ ຂອງພວກສັກດີນາປະຕິການ ກໍ່ໄດ້ມາສ້າງເວນກໍ່ກຳບີບຣັດກົດຂີ່ຂົ່ມເຫັງໃຫ້ຢູ່ໃນສະພາບ ຕົກຢູ່ໃນຫມໍ້ນາຣົກທັງເປັນຕະຫລອດເວລາ.

" ພວກເຈົ້າເປັນພວກອິດສະຫລະແມ່ນໃຜຈະມາສ້າງຊ່ວຍ ເຫລືອພວກເຈົ້າໄດ້ ການລ້ຽງງູເຫົ່າໄວ້ນັ້ນ ມີແຕ່ເຮັດໃຫ້ຜູ້ ລ້ຽງຈະຖືກງູພິດຕອດໃນວັນຫນຶ່ງ ".

ສຽງເວົ້າອາຍາສິດສັກດີນາປະຕິການປະໂຫຍກນີ້ ຍັງກ້ອງ ຢູ່ໃນຫູຂອງຊາວບ້ານຕະຫລອດໄປ ເຖິງແມ່ນວ່າຫມູ່ບ້ານ ຂອງຕົນ ເກືອບຈະຖືກຕັດຂາດຈາກອຳນາດການປົກຄອງ ຂອງພວກສັກດີນາປະຕິການໄປແລ້ວກໍຕາມ ແຕ່ມັນບໍ່ໄດ້ເຮັດ ໃຫ້ມານະຈິດອັນກ້າແຂງ ຂອງຊາວບ້ານນາອິດເມື່ອຍທໍ້ຖອຍ ບຳຊະຕາຊີວິດຂອງພວກຕົນລົງແມ່ນແຕ່ນ້ອຍ ມີແຕ່ຈະເຮັດ ໃຫ້ເກີດຄວາມກ້າແກ່ນ ບຶກບືນໃຊ້ເຫື່ອແຮງຂຸດຄົ້ນຕໍ່ສູ້ກັບ ຄວາມແຫ້ງແລ້ງ ແລະ ອົດທົນພົບພໍ້ກັບຄວາມອະຍຸຕິທຳ ທີ່ອຳນາດການປົກຄອງສັກດີນາປະຕິການຍື່ນໃຫ້ ຈົນເກືອບ ເວົ້າໄດ້ວ່າບໍ່ມີຊາຍຫນຸ່ມເຫລືອໄວ້ຄ້າງບ້ານ ໃນເມື່ອຄວາມ ເດືອດຮ້ອນ ໄດ້ພັດໂຫມທັບຈິດໃຈເຫລືອທີ່ຈະອົດກັ້ນໄວ້ໄດ້ ແນວນັ້ນແລ້ວ ໄດ້ມີຊາວບ້ານນາທີ່ມີຫົວກ້າວຫນ້າບາງສ່ວນ ພາກັນສົ່ງລູກສົ່ງຫລານຂອງຕົນໄປຢູ່ນຳກອງທັບປົດປ່ອຍປະ

ຊາຊົນລາວ ເພື່ອຫວັງໃຫ້ລູກຫລານຂອງຕົນໄດ້ມີ ໂອກາດ ແກ້ແຄ້ນສັດຕູທາງໃຈ ຄືພວກອຳນາດສັກດີນາປະຕິການ ແລະສັດຕູເດັ່ນທີ່ສຸດກໍຄືຈັກກະພັດນິຍົມອາເມລິກາ.

ມາບັດນີ້ ສັດຕູຮ້າຍສອງໂຕນັ້ນ ໄດ້ຖືກປະຊາຊົນລາວ ຂັບໄລ່ໄສສົ່ງອອກຈາກພື້ນແຜ່ນດິນລາວໄປແລ້ວ ເມັດຝົນທີ່ ສາດເທລົງມາຈາກຟ້າຢ່າງຫນັກນັ້ນເປັນຄືກັບວ່າໄດ້ລ້າງສິ່ງ ເປື້ອນເປິ ເຫນົ່າເຫມັນອອກຈາກແຜ່ນດິນລາວ ໃຫ້ເຫລືອ ໄວ້ ແຕ່ຄວາມສະອາດບໍລິສຸດສົດໃສ ເພື່ອເຮັດໃຫ້ປະຊາຊົນ ລາວສະຫນຸກມ່ວນຊື່ນເບີກບານໃຈ ໃນການສ້າງລາປະເທດ ຊາດ ກ້າວໄປບົນເສັ້ນທາງໃນການສ້າງສາສັນຕິພາບ, ປະ ຊາທິປະໄຕ ແລະ ຄວາມກ້າວຫນ້າທາງສັງຄົມ ເຊິ່ງໄຂອະນາ ຄົດອັນສະຫວ່າງແຈ້ງໃນການສ້າງສັງຄົມນິຍົມໃຫ້ແກ່ປະຊາ ຊົນລາວ.

ທ່ານກາງຄວາມຮູ້ສຶກອຸ່ນອຸ່ນປົກຄຸມຫມູ່ບ້ານນາຢູ່ແລ້ວ ທຸກຄົນກໍຍິ່ງມີຄວາມຕື່ນເຕັ້ນຍິນດີເຫລືອທີ່ສຸດ ເມື່ອຮູ້ຂ່າວວ່າ ທ້າວສົມແພງ ພຸດທະວົງສາ ໄດ້ຈາກບ້ານໄປຮ່ວມຢູ່ກັບກອງ ທັບປົດປ່ອຍປະຊາຊົນລາວເປັນເວລານານເຖິງສິບປີ ກໍຫາ ໄດ້ມີໂອກາດມາຢ້ຽມຢາມບ້ານນາໂດຍສະເພາະແມ່ນປ້າກອງ ມີ ແມ່ນດີໃຈຢ່າງສຸດຂະຫນາດ ປານຕາຍແລ້ວເກີດໃຫມ່

ເມື່ອໄດ້ເຫັນລູກຊາຍຂອງຕົນກັບຄືນມາຫາໃນເທື່ອນີ້ ແຕ່ແລ້ວປ້າກອງມີກໍມີອາລົມຄຽດແຄ້ນຂຶ້ນມາທົດແທນ ເມື່ອໄດ້ຍິນສຽງຂອງລູກຊາຍຖາມຂຶ້ນວ່າ.

" ແມ່ ... ພໍ່ເພິ່ນໄປໃສ ? ".

" ...... ? ".

ເມື່ອບໍ່ໄດ້ຮັບສຽງຕອບຈາກແມ່ ກໍຍິ່ງເຮັດໃຫ້ຊາຍໜຸ່ມມີຄວາມສົນໃຈຍິ່ງຂຶ້ນ ຈຶ່ງຖາມຕື່ມອີກວ່າ.

" ພໍ່ເພິ່ນໄປໃສ ... ເປັນຫຍັງແມ່ຈຶ່ງບໍ່ຕອບລູກ ? ".

ຜູ້ເປັນແມ່ເງີຍໜ້າຂຶ້ນເບິ່ງລູກຊາຍຊຶ່ງຢູ່ໃນຊຸດເຄື່ອງແບບກອງທັບປົດປ່ອຍປະຊາຊົນລາວ ແຕ່ນ້ຳຕາມັນໄດ້ມາບົດບັງໜ່ວຍຕາທັງສອງຂ້າງໄວ້ ຍ້ອນຄວາມຄຽດແຄ້ນແໜ້ນໃຈເມື່ອຄຶດເຖິງເຫດການໃນຄາວອະດີດ ຕອນຜົວຂອງຕົນຖືກທະຫານປະຕິການຈັບໄປຂ້າຖິ້ມຢູ່ກາງປ່າ ໂດຍກ່າວຫາວ່າເປັນໃຈອິດສະຫລະພ້ອມດ້ວຍຊາວບ້ານນາອີກສີຄົນ, ຄວາມຈິງທີ່ເກີດຂຶ້ນທັງໝົດນັ້ນ ປ້າກອງມີໄດ້ເລົ່າໃຫ້ຊາຍໜຸ່ມຟັງຢ່າງສຸດກົກສຸດປາຍ.

" ພວກມັນ ຈັ່ງແມ່ນຊົ່ວຊ້າຊາດໝາເອົາແທ້ເອົາວ່າພວກມັນຂາຍຊາດຍັງບໍ່ພໍ ມັນຍັງມາຂ້າປະຊາຊົນປານໂຕເປັດໂຕໄກ່ ! " ເວົ້າສຸດຊາຍໜຸ່ມກໍກັດແຂ້ວຂອງຕົນດ້ວຍ

ຄວາມຮູ້ສຶກຄຽດແຄ້ນ ຕໍ່ການກະທຳຂອງສັດຕູຫລາຍຍິງຂຶ້ນທັງທີເຂົາເຄີຍຜ່ານບັ້ນຣົບຫລາຍບ່ອນ ດັບສູນສັດຕູເປັນຈຳນວນບໍ່ຫນ້ອຍ ພໍຮູ້ຂ່າວການຕາຍຂອງພໍ່ແບວນີ້ ແລ້ວຄວາມເຊື່ອຫມັ້ນປ່າງຕາຍໃຈ ກໍຖືກລະເບີດເປັນຄວາມເວົ້າອອກມາ.

" ເດັດຂາດ ... ບໍ່ອ່ອນຍອມ ພວກປະຕິການແລະພວກຈັກກະພັດນິຍົມອາເມລິກາຈະຢູ່ຮ່ວມໂລກນຳກັນບໍ່ໄດ້ເລີຍ ".

ຂະນະທີ່ສອງແມ່ລູກ ກຳລັງຖາມຄວາມເປັນຢູ່ທຸກສຸກຕໍ່ກັນຢູ່ນັ້ນ ຊາວບ້ານນາອ້າຍນ້ອງ ທີ່ພ້ອມພາກັນມາສະແດງຄວາມຊົມຊື່ນຍິນດີນຳການກັບຄືນມາຂອງ ທ້າວສົມແພງຊຶ່ງຖືວ່າເປັນລູກຮັກຫລານແພງຂອງພວກຕົນ ເພື່ອນບ້ານຄົນຫນຶ່ງໄດ້ຫລຸດຄວາມເວົ້າຖາມຂຶ້ນວ່າ:

" ສົມແພງ ... ຫລານມາເທື່ອນີ້ແມ່ນມາຢູ່ບ້ານເຮົາເລີຍບໍ ?"

" ຍັງບໍ່ແນ່ນອນພໍ່ລຸງ ເພີນກຳນົດໃຫ້ຢູ່ນານປານໃດນັ້ນລູກກໍຍັງບໍ່ທັນຮູ້ເທື່ອ ຮູ້ແຕ່ວ່າການກັບມາບ້ານເຮົາເທື່ອນີ້ອາດອ່າວຢູ່ນານແດ່ ພວກເຮົາຕ້ອງບໍ່ລືມການຟົດຟື້ນປະຕິວັດໄລຍະນີ້ພວກເຮົາຕ້ອງອອກເຫື່ອເທແຮງສ້າງສາ ຜະລິດຜົນໃຫ້ຫລາຍພ້ອມທັງມີສະຕິລະວັງຕົວຫລາຍຍິ່ງຂຶ້ນ ຍ້ອນຈັກກະພັດອາເມລິກາຍັງບໍ່ປ່ອຍປະກົນອຸບາຍຂອງພວກມັນ ຕົນ

ນີ້ຂອງພວກສັກດີນາປະຕິການ ບັງລີ້ຊ່ອນຢູ່ ເພື່ອຕ້ານອຳນາດການປົກຄອງປະຕິວັດຂອງປະຊາຊົນລາວພວກເຮົາ ຈຳເປັນພວກເຮົາຕ້ອງປາບປ່າງເດັດຂາດ !".

"ພວກເຮົາຈະເອົາຫຍັງໄປສູ້ກັບພວກມັນ ?" ຊາວບ້ານຄົນໜຶ່ງຖາມຂຶ້ນດ້ວຍຄວາມສົງໃສ.

" ບໍ່ມີສັດຕູຕົວໃດດອກຈະມາອາດຫານສູ້ກັບກຳລັງຂອງປະຊາຊົນພວກເຮົາຜູ້ເປັນກຳມະກອນຊາວໄຮ່ຊາວນາ ຍ່ອມມີກຳລັງກ້າແຂງ ພຸ່ງພົ້ນຢູ່ສະເໝີໃນການຕໍ່ສູ້ກັບຄວາມອະຍຸຕິທຳ ພວກເຮົາຖືກຂູດຮີດຫນີບເຕັງຈາກພວກອາຍາສິດສັກດີນາປະຕິການ ແລະ ອຳນາດລັດທິລ່າເມືອງຂຶ້ນທັງເກົ່າແລະໃຫມ່ມາເປັນເວລາຍາວນານ ພວກເຮົາຈະບໍ່ຍອມໃຫ້ອຳນາດອັນຊົ່ວຊ້ານັ້ນ ກັບຄືນມາເປັນນາຍເໜືອຂີ້ຄໍຂອງພວກເຮົາອີກຕໍ່ໄປ " ຊາຍໜຸ່ມເວົ້າດ້ວຍນ້ຳສຽງເດັດດ່ຽວ ແລະກ້າຫານ ພ້ອມທັງມີຄວາມໜັກແໜ້ນ ຈົນເຮັດໃຫ້ພໍ່ແມ່ອ້າຍນ້ອງທີ່ຢູ່ບໍລິເວນເຮືອນ ພາກັນມີຄວາມເຊື່ອໝັ້ນດ້ວຍຄວາມຈັບຈິດຈັບໃຈ ຕໍ່ສຽງເວົ້າຂອງເຂົາ ຊຶ່ງເຕັມໄປດ້ວຍຄວາມອາດຫານ ໜຽວແໜ້ນທົນທານບໍ່ຄ່ອຍຍອມກັບສັດຕູ.

" ພໍ່ແມ່ອ້າຍເອື້ອຍນ້ອງຢາກຕົກເປັນຂ້ອຍຂ້າຂອງພວກໃຈດຳອຳມະຫິດຫນ້າຍັກໃຈມານນັ້ນອີກບໍ ?"

" ບໍ່ແຫລວ!" ສຽງຊາວບ້ານຕອບພ້ອມກັນຂຶ້ນ ເກືອບເປັນສຽງດຽວກັນ.

" ດັ່ງນັ້ນເຮົາຕ້ອງປະຕິບັດຕາມຄຳຊີ້ນຳຂອງພັກ ແລະ ລັດຖະບານເຊິ່ງຈະພາປະຊາຊົນລາວທັງຊາດໄປສູ່ຄວາມຈະເລີນກ້າວຫນ້າຢ່າງແທ້ຈິງພວກເຮົາຕ້ອງຊ່ວຍເປັນຫູເປັນຕາປ້ອງກັນ ແລະ ປາບປາມທຸກກົນອຸບາຍຂອງສັດຕູທີ່ມາຕ້ານການປະຕິວັດຂອງພວກເຮົາມີທາງດຽວເທົ່ານັ້ນ ປະເທດຂອງເຮົາຈຶ່ງຈະປອດໄພ ແລະ ມີຄວາມກ້າວຫນ້າທາງສັງຄົມ".

ນັບຕັ້ງແຕ່ມື້ນັ້ນມາ ສົມເພງຊາຍຫນຸ່ມຜູ້ຖືກຫລໍ່ຫລອມດ້ວຍເຊື້ອຂອງການປະຕິວັດ ມີນ້ຳໃຈຕໍ່ສູ້ອົດທົນ ຕໍ່ຄວາມທຸກຍາກ ຟັນຜ່າອຸປະສັກທີ່ມາຂວາງກາງກັ້ນເສັ້ນທາງໃຫ້ມຸ່ນທະລາຍໄປ ເຂົາຮູ້ດີວ່າບ້ານນາ ອັນເປັນບ້ານເກີດຂອງຕົນນັ້ນ ຖືກພວກສັກດີນາປະຕິການປ່ອຍປະລະເລີຍ ໃຫ້ເປັນໄປຕາມບຸນຕາມກຳ ເຮັດໃຫ້ຊາວບ້ານອ່ອນທາງດ້ານວັດທະນະທຳເຖິງແມ່ນວ່າ ມີການປົດປ່ອຍທົ່ວປະເທດ ແລ້ວກໍຕາມການສ້າງບ້ານໃຫມ່ເມືອງໃຫມ່ ຍ່ອມພົບພໍ້ກັບຄວາມຫຍຸ້ງຍາກເປັນຂອງທຳມະດາ ຊາຍຫນຸ່ມໄດ້ຫາໂອກາດຕິດແທດກັບຊາວບ້ານນາເປັນປະຈຳ ເພື່ອຈະໄດ້ສຶກສາຮຽນຮູ້ນຳປະຊາຊົນແລ້ວ ຈຶ່ງນຳບົດຮຽນມາຖອດຖອນນຳພາປະຊາຊົນໃຫ້

ກ້າວໄປຕາມເສັ້ນທາງທີ່ພັກແລະລັດຖະບານກຳນົດໄວ້ ເຊິ່ງເຫັນວ່າຍາມໃດພັກກໍໄດ້ຮຽກຮ້ອງໃຫ້ທຸກຄົນ ເຮັດຫຍັງກໍໃຫ້ຖືກກັບວິທະຍາສາດ ຖືກກັບລັກສະນະຂອງຊາດ ແລະ ຖືກກັບຈິດໃຈຂອງປະຊາຊົນ.

ໃນໄລຍະການປົດປ່ອຍໃຫມ່ ບ້ານນາກໍຄືບ່ອນອື່ນການຈັດຕັ້ງຍັງບໍ່ເຫມັ້ນຫນາເທື່ອ ຄວາມຫຍຸ້ງຍາກໃນດ້ານນີ້ມີຢູ່ຫລວງຫລາຍພາຍມາກ ແຕ່ມັນກໍບໍ່ໄດ້ເຮັດໃຫ້ຊາຍຫນຸ່ມທໍ້ຖຽກຳລັງໃຈລົງໄປແມ່ນແຕ່ນ້ຽ ບັນນີ້ມີແຕ່ບຶກບືນຢ່າງຕັ້ງຫນ້າປຸກກຳລັງໃຈຊາວບ້ານນາໃຫ້ຕື່ນຕົວ ສົນໃຈ ຮ່ຳຮຽນການເມືອງແລະດັບສູນຄວາມກົກຫນັງສື ຈາກການເຮັດວຽກທັງເວັນແລະຄືນການພັກຜ່ອນກໍບໍ່ພຽງພໍ ເຮັດໃຫ້ປ້າກອງມີອົດເປັນຫ່ວງເປັນໃຍນຳບໍ່ໄດ້.

" ລູກຢ່າເຮັດວຽກຫລາຍເທາະ ແມ່ສັງເກດເຫັນລູກຈ່ອຍລົງຫລາຍແລ້ວເວລານີ້ ".

" ບໍ່ເປັນຫຍັງດອກແມ່ ລູກຍັງສະບາຍແຂງແຮງດີຢູ່ດອກ ວຽກການປະຕິວັດຫຍັງມີຢູ່ຫລາຍທີ່ຈະຕ້ອງເຮັດເວລານີ້ການປູກຝັງໃນບ້ານເຮົາ ໃຫບ້ານເຂົາເຈົ້າກໍຕັ້ງຫນ້າກ້າກັບກັບເປັນຢ່າງດີ ການລ້ຽງເປັດລ້ຽງໄກ່ຕ້ອງຕື່ມຄວາມຫ້າວຫັນຫລາຍກວ່ານີ້ອີກ ນີ້ອົນລູກອ່ອນພໍ່ແມ່ອ້າຍເອື້ອຍນ້ອງ

ໄປຂຸດສະສ່ວນໂຮມ ເພື່ອປະກັນໃຫ້ພໍ່ແມ່ອ້າຍເອື້ອຍນ້ອງມີຢູ່ມີກິນກັນຕະຫລອດປີ, ສິ່ງສຳຄັນກໍຄືເຮັດໃຫ້ທຸກຄົນມີຄວາມສາມັກຄີກັນ ຮູ້ຈັກຊ່ວຍເຫລືອຊຶ່ງກັນແລະກັນ ".

ປ້າກອງມີອົດທີ່ຈະງຶມຊຶບບໍ່ໄດ້ ຕໍ່ຄວາມສະຫລາດຫລັກແຫລມຂອງລູກຊາຍໂຫນລາວ ມີຄວາມສຸກໃຈເຫລືອທີ່ສຸດທີ່ໄດ້ເຫັນລູກຊາຍໄດ້ຮັບການອົບຮົມບົ່ມນິໄສ ຈາກກອງທັບປົດປ່ອຍປະຊາຊົນລາວ ເຊິ່ງແຕ່ກ່ອນລາວບໍ່ເຄີຍຄິດຝັນວ່າລູກຂອງຄົນທຸກຄົນຍາກປາກຫມອງຈະໄດ້ຮັບການເບິ່ງແຍງໃຫ້ເປັນຄົນສະຫລາດແລະມີຫົວກ້າວຫນ້າ ແຕ່ສິ່ງທີ່ປະກົດຕໍ່ສາຍຕາຂອງລາວເວລານີ້ ແມ່ນທ້າວສົມແພງ ພຸດທະວົງສາຜູ້ເປັນລູກຊາຍຂອງຕົນຢ່າງແທ້ຈິງຊາຍຫນຸ່ມະເປັນຄົນເອົາວຽກເອົາການ, ໜັກະອົາເບົາສູ້ບໍ່ເຄີຍຈົ່ມອິດຈົ່ມເມື່ອຍຕໍ່ຄວາມທຸກຍາກໃຊ້ຊີວິດຄວາມເປັນຢູ່ແບບງ່າຍໆ ຮັກຊາວບ້ານມີນ້ຳໃຈເສຍສະຫລະໂດຍແທ້ຖ້າພໍ່ສົມແພງຍັງມີຊີວິດຢູ່ແລ້ວກໍຈະໄດ້ເຫັນສິ່ງທີ່ປະທັບໃຈຄືລາວເຫັນຢູ່ໃນເວລານີ້ຢ່າງແນ່ນອນ.

ນັບຕັ້ງແຕ່ຊາຍຫນຸ່ມມາຢູ່ບ້ານນານີ້ແລ້ວ ມີສິ່ງທີ່ປ້າກອງມີຄຳຖາມຕົວເອງຢູ່ໃນໃຈຫລາຍເທື່ອ ເພື່ອຕັດສິນໃຈຖາມລູກຊາຍໂຫນ ໃຫ້ມັນແຈ້ງແຈບໃຈຄັກແນ່ ແຕ່ກາລະໂອກາດບໍ່ຄ່ອຍສູ່ອຳນວຍ ບ້ອນຊາຍຫນຸ່ມເປັນຄົນຕື່ນເຊົ້າ

ນອນເດິກ ເຮັດວຽກເຮືອນການຊານແລ້ວກໍໄປເຮັດວຽກຮ່ວມ
ຫມູ່ຢູ່ນຳຊາວບ້ານໂດຍບໍ່ເຫັນແກ່ຄວາມອິດເມື່ອຍ ເມື່ອເຫັນ
ວ່າຊາຍຫນຸ່ມມີອາລົມດີ ບໍ່ມີວຽກຫຍຸ້ງຄາມືປ້າກອງມີຈຶ່ງ
ໄດ້ຖາມຂຶ້ນວ່າ.

" ສົມເພງ ... ເວລານີ້ອາຍຸຂອງລູກໄດ້ຈັກປີແລ້ວ ຕາມ
ທີ່ແມ່ຈື່ໄດ້ຕອນທີ່ລູກອອກຈາກບ້ານນີ້ໄປ ລູກມີອາຍຸໄດ້ ໑໙
ປີເຕັມໄປຢູ່ນຳການປະຕິວັດໄດ້ສິບປີ ກໍຫມາຍຄວາມວ່າເວລາ
ນີ້ລູກອາຍຸໄດ້໒໙ ປີແລ້ວ ແມ່ນບໍ່ລະ ?"

" ແມ່ນແລ້ວແມ່ " ຊາຍຫນຸ່ມຕອບແມ່ໄປຕາມຊື່ ໂດຍ
ບໍ່ຮູ້ວ່າແມ່ຈະເວົ້ານາໄມ້ໃດໃສ່ໂຕ.

" ຄັນຊັ້ນ ເວລາລູກຢູ່ເຂດປົດປ່ອຍເກົ້າພຸ້ນກໍມີຄອບຄົວ
ແລ້ວແມ່ນບໍ່ລະ ເປັນຫຍັງຈຶ່ງບໍ່ພາລູກເມັຍມາຢ້ຽມຢາມ
ແມ່ແນ່ ".

ພໍໄດ້ຍິນສຽງເວົ້າຂອງແມ່ຖາມອອກມາແນວນັ້ນ ຊາຍ
ຫນຸ່ມກໍຫົວຂຶ້ນທັນທີ ພ້ອມກັບເວົ້າວ່າ.

" ລູກຍັງບໍ່ທັນເອົາເມັຍດອກແມ່ ຕະຫລອດເວລາຈາກ
ບ້ານເຮົາໄປ ລູກໄດ້ເຂົ້າຮ່ວມການປະຕິວັດ ຈົນບໍ່ມີເວລາຄິດ
ເຖິງເລື່ອງນີ້ ຕ້ອງເຄື່ອນຍ້າຍໄປບ່ອນນັ້ນບ່ອນນີ້ເລື້ອຍໆ ".

" ບາດຕີໂທ ...! " ປ້າກອງມີສະແດງອາການແປກປະ

ລາດໃຈແລ້ວ ເວົ້າຕໍ່ອີກວ່າ " ອາຍຸເຖົ້າແກ່ປານນີ້ແລ້ວຍັງບໍ່ຄຶດມີຄອບຄົວ ".

"ຍັງບໍ່ທັນຫລ້າສວາຍດອກແມ່ ຊີວິດຂອງຄົນເຮົາຝືນກົດທຳມະຊາດໄປບໍ່ໄດ້ດອກ ເດືອນຄູ່ກັບຕາເວັນ ຜູ້ຊາຍກໍ່ຕ້ອງຄູ່ກັບຜູ້ຍິງອັນນີ້ແມ່ນຫລີກບໍ່ພົ້ນແທ້ ຂໍໃຫ້ລູກເຮັດຫລ້ອນຫນ້າທີ່ການປະຕິວັດເສັຍກ່ອນ ຈຶ່ງຄ່ອຍມາປຶກສາກັບແມ່ " ເວົ້າສຸດຊາຍຫນຸ່ມກໍປ່ອຍສຽງຫົວອອກມາ ຢ່າງບຸກຄົນໄດ້ຮັບຄວາມສຸກຢ່າງແທ້ຈິງ.

" ຫມາຍຄວາມວ່າລູກໄດ້ຫມັ້ນຫມາຍຜູ້ຍິງທີ່ຈະນຳມາເປັນເມັຍຂອງລູກແລ້ວຊັ້ນຫວະ ?" ປ້າກອງມີຖາມອີກ.

" ຈັກຈັ່ງໃດບຸແມ່ນີ້ກະດາຍ "ຊາຍຫນຸ່ມເວົ້າອອກມາດ້ວຍຄວາມຫົນຫວາຍໃຈ ພ້ອມທັງລຸກຂຶ້ນຍ່າງເຂົ້າໄປໃນເຮືອນຄົວ ສຽງເວົ້າຂອງແມ່ຍັງໄດ້ຍິນຕາມຫລັງມາອີກວ່າ.

" ລູກມາບ້ານກໍໄດ້ໄປຢ້ຽມຢາມ ນາງວັນນີແດ່ບໍ່ລະ ? ຫລັງຈາກພໍ່ເຈົ້າຕາຍແລ້ວ ກໍມີແຕ່ນາງວັນນີຫັ້ນແລ້ວມາເບິ່ງແຍງແມ່ ໃຫ້ລູກໄປຂອບອົກຂອບໃຈນຳນາງແນ່ເນີ "... ປານຊິ້ຮູໃຫ້ກະຣອກ.

ສຽງເວົ້າຂອງແມ່ໃນຕອນທ້າຍ ໄດ້ເຮັດໃຫ້ຊາຍຫນຸ່ມຢືນຊຶງປູ່ຊົ່ວລະຍະຫນຶ່ງ ຂະນະດຽວກັນໃບຫນ້າຂອງວັນນີຍິງ

ສາວຜູ້ບໍລິສຸດແຫ່ງບ້ານນາ ກໍເກີດມະໂນພາບໃຫ້ເຫັນຢ່າງຈະແຈ້ງ ຄວາມຈື່ຈຳໃນອະດີດໄດ້ຄ່ອຍຟູຂຶ້ນມາ ໃຫ້ຊາຍໜຸ່ມໄດ້ເຫັນອີກເທື່ອໜຶ່ງ.

ເວລານັ້ນວັນນີກໍຫາຂຶ້ນສາວອາຍຸສິບຫ້າປີ ນາງເປັນຄົນຜິວເນື້ອສີດຳແດງມີໃບໜ້າມົນຄືຮູບໜ່ວຍໄຂ່ ຕາທັງສອງຄົມໃສ ມັກຈະມີຮອຍຍິ້ມປະກົດໃຫ້ເຫັນຢູ່ເທິງຮີມສົບຢູ່ສະເໝີນາງເປັນຄົນທີ່ມີນິໄສສະຫງົບສະຫງ່ຽມຮຽບຮ້ອຍ ແລະດຸໝັ່ນຕໍ່ການເຮັດວຽກເຮືອນການຊານ ບໍ່ເຄີຍອວດອົງທະນົງຕົວ ອັນຖືໄດ້ວ່າເປັນລັກສະນະຂອງສັດຕີລາວ ສົມແພງ ພຸດທະວົງສາ ໃຫ້ຄວາມສົນໃຈແລະກ່ອນທີ່ຈະອອກໄປສະໝັກເປັນນັກຣົບ ຢູ່ໃນຖັນແຖວກອງທັບປົດປ່ອຍປະຊາຊົນລາວນັ້ນຊາຍໜຸ່ມກໍໄດ້ຖືໂອກາດໄປສັ່ງລາຍິງສາວ ດ້ວຍຄວາມຮັກແພງວ່າ.

" ນີ້ນ້ອ້າຍຂໍຖືໂອກາດມາສັ່ງລານ້ອງໄປສະໝັກເປັນນັກຣົບ"

" ອ້າຍຈະໄປເປັນທະຫານ ! " ຍິງສາວຫລຸດຄຳເວົ້າອອກມາດ້ວຍຄວາມຕົກໃຈ ຍ້ອນຄວາມຄິດວ່າ ການເປັນທະຫານຂອງພວກປະຕິການນັ້ນ ນາງບໍ່ເຫັນດີນຳເລີຍ ທະຫານປະຕິການມັນບໍ່ແຕກຕ່າງຫຍັງກັບພວກນັກປຸ້ນ ທີ່ພາກັນສ້າງຄວາມເດືອດຮ້ອນໃຫ້ແກ່ປະຊາຊົນ.

" ນ້ອງຄົງແປກໃຈທີ່ອ້າຍໄດ້ຕັດສິນໃຈໄປເປັນທະຫານ ທັງທີ່ອ້າຍໄປລີ້ເຊື່ອງຕົວຫນີຈາກການໄລ່ຈັບໄປເປັນທະຫານ ເຊິ່ງມີຫມູ່ຄູ່ອ້າຍຫລາຍຄົນໄດ້ຖືກຈັບຕົວໄປແລ້ວ ອ້າງຄຶດແລ້ວຄຶດອີກວ່າ ເຖິງແມ່ນຈະໄປຊອກລີ້ຢູ່ບ່ອນໃດມັນກໍບໍ່ພົ້ນກຳມືຂອງພວກພີຍັກພີໂພງໄປບໍ່ໄດ້ດອກ ".

" ພວກເຂົາຈະບໍ່ຈັບອ້າຍໄປໃສ່ຄຸກບໍລະ ? ".

" ແມ່ນແທ້ ... ຖ້າອ້າຍໄປຫາພວກພີຍັກພີໂພງນັ້ນ ຕ້ອງຖືກຈັບວ່າຫນີທະຫານແທ້ ແຕ່ອ້າຍຈະບໍ່ໄປຫາມັນຢ່າງເດັດຂາດ ຈະບໍ່ຍອມໄປຕາຍແທນພວກມັນ " ຊາຍຫນຸ່ມເວົ້າອອກມາດ້ວຍນ້ຳສຽງອັນຫນັກແຫນ້ນ ເມື່ອເຫັນວ່າຍິງສາວກຳລັງຕັ້ງໃຈຟັງຄວາມເວົ້າຂອງຕົນຢູ່ແລ້ວ ຊາຍຫນຸ່ມຈຶ່ງເວົ້າຕໍ່ອີກວ່າ.

" ນ້ອງຄືຈະເຫັນດ້ວຍຕາຂອງຕົວເອງ ພວກຍັກພວກໂພງນັ້ນ ມັນສ້າງຄວາມເດືອດຮ້ອນໃຫ້ພໍ່ແມ່ອ້າຍເອື້ອຍນ້ອງຂອງພວກເຮົາພໍປານໃດ ຫມູ່ບ້ານເຮົາອຶດປາກແຫ້ງແລ້ງ ແຕ່ສວນຂອງພວກມັນ ພຽງບໍ່ເທົ່າໃດຄົນຢູ່ອ້ອມຂ້າງບ້ານເຮົານັ້ນມີຄວາມອຸດົມສົມບູນທຸກຢ່າງອັນນີ້ມັນບໍ່ມີຄວາມຍຸຕິທຳເລີຍອ້າຍຕ້ອງໄປຕໍ່ສູ້ກັບຄວາມອະຍຸຕິທຳ ເພື່ອນຳຄວາມຍຸຕິທຳມາສູ່ພໍ່ແມ່ອ້າຍນ້ອງຂອງພວກເຮົາ ບ່ອນໃດມີການກົດຂີ່

ຂູດຣີດບ່ອນນັ້ນຕ້ອງມີການຕໍ່ສູ້ ອ້າຍເຊື່ອຢ່າງຕາຍໃຈວ່າຜູ້ທີ່ຕໍ່ສູ້ກັບຄວາມອະຍຸດຕິທຳ ຕໍ່ສູ້ກັບການກົດຂີ່ຂູດຣີດນັ້ນ ຕ້ອງໄດ້ຮັບໄຊຊະນະຢ່າງແນ່ນອນ ".

" ນ້ອງບໍ່ເຂົ້າໃຈວ່າອ້າຍຈະໄປຮ່ວມຕໍ່ສູ້ກັບໃຜ ? " ຍິງສາວຖາມຢ່າງສົງໄສ.

" ອ້າຍຈະໄປຢູ່ກັບຝ່າຍຮັກຄວາມເປັນທຳ ຮັກປະຊາຊົນ ເສັຽສະຫລະເພື່ອປະຊາຊົນ ແລະ ຕໍ່ສູ້ປົດປ່ອຍຊາດອອກຈາກແອກກົດຂີ່ຂູດຣີດ ແລະເຮັດໃຫ້ປະເທດຊາດຂອງເຮົາຫລຸດພົ້ນຈາກການເປັນຫົວເມືອງຂຶ້ນ ແບບໃໝ່ຂອງຈັກກະພັດອາເມລິກາ ເລື່ອງນີ້ອ້າຍໄດ້ຄອບພໍ່ແມ່ແລ້ວແລະຂໍມາບອກນ້ອງໃນຄວາມຄິດນີ້ຄືກັນ... ແຕ່ວ່າອ້າຍຍັງ... " ຊາຍໜຸ່ມເຊົາເວົ້າຊົ່ວລະຍະໜຶ່ງ ແລ້ວເງີຍໜ້າຂຶ້ນເບິ່ງໜ້າຍິງສາວດ້ວຍຄວາມຄິດອັນສັບສົນ ຈົນບອກກັບຕົນເອງບໍ່ຖືກ ສາຍຕາຂອງໜຸ່ມສາວທັງສອງ ໄດ້ພົບພໍ້ກັນ ດ້ວຍຄວາມຕັ້ງໃຈ ແລະມີຄວາມໝາຍເຂົ້າໄປໃນສ່ວນເລິກຂອງຂົ້ວຫົວໃຈ... ໃນທີ່ສຸດ ຊາຍໜຸ່ມກໍຫລຸດຄວາມເວົ້າອອກມາກ່ອນວ່າ.

" ອ້າຍຍັງມີຄວາມເປັນຫ່ວງຢູ່ກັບພໍ່ແມ່ເທົ່ານັ້ນ... ອ້າຍເປັນລູກຊາຍໂທນເມື່ອ ໜີຈາກເພິ່ນໄປແລ້ວ ຍ່ອມບໍ່ມີໃຜເບິ່ງ

ແບງເພິນ ເວລານີ້ອ້າຍຫລຽວເບິ່ງໃຜບໍ່ເຫັນອີກແລ້ວ ບອກຈາກນ້ອງພຽງຄົນດຽວຂໍໃຫ້ນ້ອງຮັບພາລະນີ້ແທນອ້າຍແນ່.. ອ້າຍຈະມີຄວາມສຸກເຫລືອທີ່ສຸດ ຖ້ານ້ອງຫາກຍິນດີປະຕິບັດດ້ວຍຄວາມເຕັມໃຈ ".

ຍິງສາວຄຶດຄ້ອຍອາໄລຊາຍຄົນຮັກຢູ່ໃນໃຈ ແຕ່ບໍ່ກ້າຈະອອກຄວາມຄິດເຫັນຫັກຫ້າມການຕັດສິນໃຈ ຂອງຊາຍໜຸ່ມໄດ້ ຍ້ອນວ່າເປັນການຕັດສິນໃຈທີ່ມີເຫດຜົນແລະເປັນການຖືກຕ້ອງແລ້ວ ສິ່ງທີ່ຊາຍໜຸ່ມຂໍຮ້ອງນັ້ນມັນກໍບໍ່ໄດ້ໜັກໜາຫຍັງ ຕາມທຳມະດາໝູ່ບ້ານນາ ກໍມີພື້ນຖານການຊ່ວຍເຫລືອຊຶ່ງກັນແລະກັນຢູ່ແລ້ວ ຄວາມທຸກຍາກປາກໝອງແລະຄວາມແຫ້ງແລ້ງທີ່ໄດ້ຮັບ ຈາກທຳມະຊາດ ຕະຫລອດເຖິງໄດ້ຮັບການກົດຂີ່ຂູດຮີດ, ຈາກອຳນາດອະທຳຂອງພວກອາບາສິດສັກດິນາປະຕິການ ໄດ້ເຮັດໃຫ້ຈິດໃຈຂອງຊາວບ້ານມີຄວາມຮັກແພງສາມັກຄີກັນໄດ້ເປັນຢ່າງດີ.

" ສິ່ງທີ່ອ້າຍສົມແພງຮ້ອງຂໍກັບນ້ອງນັ້ນ ໄທບ້ານເຮົາພວກເພິ່ນກໍໄດ້ເບິ່ງແຍງກັນຢູ່ແລ້ວ ບໍ່ເຫັນມີຫຍັງຈະຕ້ອງມາເປັນຫ່ວງ ສຳຫລັບນ້ອງມີຫຍັງທີ່ຈະເຮັດຕື່ມອີກ."

" ບາງເທື່ອອາດເປັນການລົບກວນເຄີກວຽກຂອງນ້ອງກໍເປັນໄດ້".

" ບໍ... ບໍດອກອ້າຍສົມເພງ ສິ່ງໃດທີ່ອ້າຍຕ້ອງການແລ້ວ ນ້ອງຈະບໍ່ຍອມເຮັດໃຫ້ອ້າຍໄດ້ຮັບກັບຄວາມຜິດຫວັງເລີຍ ".

ການຮັບຂັ້ນອາສາຂອງຍິງສາວ ເປັນຄືກັນກັບປາບໍາລຸງຫົວໃຈຂອງຊາຍໜຸ່ມ ເຮັດໃຫ້ມີມານະຈິດອັນກ້າແກ່ນຫລາຍຍິ່ງຂຶ້ນ ໂດຍສະເພາະການໂອ້ລົມສັ່ງລາໃນຕອນທ້າຍນີ້ນັ້ນຊາຍໜຸ່ມໄດ້ເຫັນຮອຍຍິ້ມອັນປະທັບໃຈພ້ອມກັບສຽງເວົ້າອັນມ່ວນຫູທີ່ຫລຸດອອກມາຈາກປາກຂອງຍິງສາວວ່າ.

" ນ້ອງຈະລໍຖ້າວັນກັບຄືນມາຂອງອ້າຍ...ຈະບໍ່ມີອໍານາດໃດໆທີ່ຈະມາດຶງແຍກ ຫົວໃຈຜູກພັນຂອງເຮົາທັງສອງອອກຈາກກັນໄດ້ ນອກຈາກຄວາມຕາຍເທົ່ານັ້ນ ".

ຕະຫລອດລະຍະສິບປີທີ່ຈາກໄປ ວັນເວລາໄດ້ໝູນວຽນປ່ຽນໄປຢ່າງໄວວາເອົາແທ້ເອົາວ່າ ຂະນະທີ່ຊາຍໜຸ່ມນັ່ງຊຶງຄຶດເຖິງຄວາມຫລັງປູ່ນັ້ນ ຫູຂອງເຂົາໄດ້ຍິນສຽງໜຶ່ງດັງກ້ອງເຕືອນສະຕິຂຶ້ນວ່າ.

" ໜ້າທີ່ຂອງອໍານາດການປົກຄອງປະຊາທິປະໄຕຂອງປະຊາຊົນ ແມ່ນຈັດຕັ້ງປະຕິບັດແນວທາງ ແຜນນະໂຍບາຍ ແລະນະໂຍບາຍຂອງພັກ ປະຕິບັດການຜະເດັດການຕໍ່ສັດຕູ ຮັບປະກັນປະຊາທິປະໄຕຕໍ່ປະຊາຊົນ ຄຸ້ມຄອງແລະກໍ່ສ້າງ

ເສດຖະກິດ ຄຸ້ມຄອງທຸກການເຄື່ອນໄຫວຂອງສັງຄົມແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນຢ່າງບໍ່ຢຸດຢັ້ງ ".

ເຖິງແມ່ນວ່າໄດ້ມີຄວາມຮູ້ສຶກທາງໃຈເກີດຂຶ້ນກໍ່ຕາມເມື່ອຄິດເຖິງພາລະຫນ້າທີ່ຂອງນັກປະຕິວັດແລ້ວ ຍ່ອມຖືວຽກການປະຕິວັດເປັນວຽກໃຫຍ່ເປັນຂອງສ່ວນລວມຖ້າຂາດສະຕິລະວັງຕົວໄປແລ້ວ ຍ່ອມເປັນການຍາກທີ່ຈະເຮັດຫລ້ອນຫນ້າທີ່ວຽກການປະຕິວັດໄປໄດ້.

ຮຸ່ງເຊົ້າຂຶ້ນມານີ້ໃຫມ່...

ສົມແພງພຸດທະວົງສາ ໄດ້ໄປມີຫນ້າຢູ່ທີ່ສວນຂຸນເສິກປະຕິການ ຊຶ່ງເຈົ້າຂອງສວນດັ່ງກ່າວຖືກປະຊາຊົນຂັບໄລ່ໄສສົ່ງ ເຕັ້ນໂຕນໂຍນຫນີອອກຈາກປະເທດໄປ ສວນນີ້ບໍລິເວນອັນກວ້າງໃຫຍ່ໄພສານ ທີ່ຂຸນເສິກປະຕິການໄດ້ປຸ້ນເອົາທຳມະຊາດຂອງຊາດມາເປັນສົມບັດຂອງ ຕົນ ແລ້ວປະກາດຫວງຫ້າມບໍ່ໃຫ້ຊາວບ້ານນາ ເຂົ້າໄປຫາຢູ່ຫາກິນໃນບໍລິເວນນັ້ນເປັນບ່ອນທີ່ຊາວບ້ານເຫັນດີເຂົ້າໄປປູກຝັງລ້ຽງສັດ ຮ່ວມເຫື່ອແຮງສາມັກຄີກັນອອກແຮງງານ ຊຶ່ງແຕ່ກ່ອນເປັນປ່າຮົກໄມ້ຢືນຕາຍຍ້ອນຖືກແດດເຜົາ ແຕ່ເວລານີ້ປ່າຮົກດັ່ງກ່າວນັ້ນໄດ້ຖືກຊາວບ້ານຖາກຖາງ ເຮັດສວນປູກພືດຜັກຕ່າງໆ ກຳລັງອອກເບັ້ຍງາມຢ່າງສຸດຫູສຸດຕາ.

" ຕໍ່ໄປນີ້ບ້ານເຮົາແມ່ນພົ້ນຈາກຄວາມອຶດປາກແລ້ວລະ ຫລານເອີຍ " ພໍ່ຕູ້ເວົ້າພ້ອມກັບຍື່ນຈົກໃຫ້ແກ່ຊາຍໜຸ່ມ ເພື່ອຂຸດໜອງປາ.

" ເຮົາຍັງບໍ່ພໍໃຈເທື່ອດອກພໍ່ຕູ້ ໃຫ້ບ້ານເຮົາຍັງຈະຕ້ອງ ຕື່ມຄວາມຂະຫຍັນຫ້າວຫັນ ໃນການອອກແຮງງານຢ່າງຕັ້ງ ໜ້າອີກຫລາຍແລະຊອກວິທີທຸກຢ່າງ ເພື່ອເຮັດໃຫ້ພໍ່ແມ່ ອ້າຍເອື້ອຍນ້ອງຂອງພວກເຮົາຢູ່ດີກິນດີ ການຂຸດໜອງປາ ມື້ນີ້ກໍຄືກັນ ແມ່ນນອນຢູ່ໃນແຜນການເສດຖະກິດເພື່ອກຸ້ມ ຕົນເອງ ".

ພໍ່ວ່ານັບຕັ້ງແຕ່ລູກມານໍາພາຊາວບ້ານເຮົາ ມີຄວາມ ຕື່ນຕົວຢ່າງຮອບດ້ານຢູ່ນີ້ ໄດ້ເຮັດໃຫ້ບ້ານນາທັງໝົດມີການ ປ່ຽນແປງໄປໃນທາງດີຢ່າງເພິ່ງພໍໃຈ...ຈັ່ງຊັ້ນຈຶ່ງແມ່ນລູກ ບ້ານຫລານເມືອງແທ້ງ " ພໍ່ຕູ້ເວົ້າຍ້ອງຍໍຊົມເຊີຍຊາຍໜຸ່ມ ດ້ວຍຄວາມບໍລິສຸດໃຈ.

" ຄວາມຈິງແລ້ວບໍ່ແມ່ນເກີດມາຈາກຫລານດອກພໍ່ຕູ້" ຊາຍໜຸ່ມຫາທາງບ່າຍບ່ຽງ ຢ່າງຖ່ອມຕົວແລ້ວເວົ້າຕື່ມອີກ ວ່າ " ສິ່ງທີ່ເຫັນຕໍ່າຫູຕໍ່າຕາເປັນໝາກຜົນໃຫ້ພໍ່ແມ່ອ້າຍ ນ້ອງໄດ້ຮັບທຸກມື້ນີ້ນັ້ນ ແມ່ນມາຈາກການຊີ້ນໍາອັນສະຫລາດ ສ່ອງໃສຂອງພັກແລະລັດຖະບານ ອັນເປັນຫລັກຖານຕົວຈິງ

ຢືນຢັນໃຫ້ພໍ່ແມ່ອ້າຍເອື້ອຍນ້ອງໄດ້ເຫັນວ່າ ພານໃດພັກແລະລັດຖະບານກໍ່ມີຄວາມເປັນຫ່ວງ ນໍາຄວາມເປັນຢູ່ຂອງປະຊາຊົນຢູ່ຕະຫລອດມາ...".

– ພໍເວົ້າສຸດຊາຍຫນຸ່ມກໍ່ຕັ້ງຫນ້າຂຸດດິນຢ່າງບໍ່ເຫັນແກ່ຄວາມອິດເມື່ອຍ ເດັດດ່ຽວອົດທົນຕໍ່ຄວາມທຸກຍາກ ບາກບັ່ນສູ້ຊົນຢ່າງບໍ່ທໍ້ຖອຍ... ຜົນທີ່ໄດ້ຮັບກໍ່ຄືໄຊຊະນະເຊິ່ງນໍາຄວາມພາກພູມມາໃຫ້ຊາຍຫນຸ່ມ ທີ່ໄດ້ຍອມເສັຍສະລະແຮງຈິດແຮງກາຍ ໃຫ້ການປະຕິວັດຢ່າງສຸດກົກສຸດປາຍ...ດ້ວຍເຫດນີ້ຈຶ່ງເປັນທີ່ຮັກແພງ ຂອງປະຊາຊົນຫມົດບ້ານນາ... ຈາກນໍ້າໃຈຂອງຊາວບ້ານ ທີ່ມີຕໍ່ຊາຍຫນຸ່ມແນວນີ້ເອງຈຶ່ງເຮັດໃຫ້ວຽກການທຸກຢ່າງ ພົບພໍ້ກັບຄວາມສໍາເຫລັດໄປໄດ້ໂດຍງ່າຍ...ບ້ອນຊາວບ້ານທຸກຄົນພ້ອມໃຈກັນອອກເຫື່ອເທແຮງຢ່າງຕັ້ງຫນ້າ...ພວກຜູ້ຊາຍຂຸດດິນ...ເອື້ອຍນ້ອງຜູ້ຍິງບາງສ່ວນແບກຫາມດິນ ບາງສ່ວນກໍ່ໄປເບິ່ງສວນແລະເຮັດຢູ່ເຮັດກິນ...

" ອ້າຍສົມແພງກິນເຂົ້າໃຫ້ຫລາຍໆແດ່ ແກງຫນໍ່ໄມ້ແຊບແທ້ໄດ ເອື້ອຍວັນນີເຮັດຢ່າງສຸດຝີມືເລີຍ " ຄວາມເວົ້າທີ່ຫລຸດອອກຈາກປາກຂອງກຸ່ມເອື້ອຍນ້ອງປະໂຫຍກນີ້ ໄດ້ຮັບສຽງຕົບມືຢ່າງນັນນອງຕິດຕາມມາພ້ອມ ກັບສຽງຫົວທີ່ມ່ວນຊື່ນ

ລືມຄວາມອຶດເມື່ອຍທີ່ພາກັນເຮັດມາ.

ຊາຍໜຸ່ມຍືນຕໍ່ສຽງລ້ຽນດັ່ງກ່າວ ແລ້ວຈຶ່ງເວົ້າຢ່າງ ຖ່ອມຕົນວ່າ...

" ບັນດາພໍ່ແມ່ອ້າຍເອື້ອຍນ້ອງເຮົາວຽກມາເມື່ອຍແລ້ວ ຂໍໃຫ້ການກິນເຂົ້າສາມັກຄີຂອງພວກເຮົາໃນມື້ນີ້ ຈົ່ງເປັນພື້ນ ຖານໃຫ້ພວກເຮົາມີຄວາມສາມັກຄີ ຕັ້ງໃຈຢ່າງໜຽວແໜ້ນ ເພື່ອປະກອບສ່ວນເຮັດຫລ້ອນໜ້າທີ່ວຽກງານຂອງການປະຕິ ວັດອັນເປັນພາລະກິດຫຍຸ້ງຍາກສັບສົນ ແລະລຳບາກແຕ່ສູງ ສົ່ງແລະມີກຽດນັບຮຽກຮ້ອງໃຫ້ນັກປະຕິວັດຕ້ອງມີຈິດໃຈເຂັ້ມ ແຂງເດັດດ່ຽວ ມີພະລັງກາຍແລະໃຈໜຽວແໜ້ນທົນທານມີ ຄວາມທະນົງອົງອາດທີ່ສາມາດຜ່ານຜ່າທຸກອຸປະສັກໄດ້ ມີ ຄວາມກ້າເສັຍສະລະ ມີຄວາມວັດສິນໃຈທີ່ບໍ່ມີສິ່ງໃດມາສັ່ນ ສະເທືອນໄດ້ ໃນການທັບມ້າງລ້າງສ່ວງເສດເຫລືອແລະຮາກ ເຫງົ້າທັງປວງຂອງລະບອບເກົ່າແລະສັງຄົມເກົ່າ ປະດິດຄິດ ແຕ່ງແລະກໍ່ສ້າງລະບອບໃໝ່ ສັງຄົມໃໝ່ທີ່ຊົນຊຸບກຳມະ ກອນ,ປະຊາຊົນຜູ້ອອກແຮງງານເປັນເຈົ້າຂອງຢ່າງແທ້ຈິງ!"

– ເມື່ອສຸດສຽງເວົ້າຂອງຊາຍໜຸ່ມ ປະກົດວ່າມີສຽງຕົບ ມືດັງຂຶ້ນຢ່າງນອງນັນໃນໝູ່ບັນດາຊາວບ້ານ ທີ່ມາຮ່ວມອອກ ແຮງງານ ຄວາມຟົດຟື້ນຕື່ນຕົວດັ່ງກ່າວນີ້ ໄດ້ເຮັດໃຫ້ນາງ

ວັນນີ ຜູ້ເປັນຫົວແຮງສຳຄັນຂອງບົງຫນຸ່ມປະຈຳບ້ານ ເກັບເອົາຄວາມຮູ້ສຶກຕື້ນຕັນໃຈໄວ້ຢ່າງມິດຫນີ...ສັດທາໃນຜົນວຽກການງານຂອງຊາຍຫນຸ່ມ ທີ່ຮູ້ຈັກໃຊ້ກາລະໂອກາດອັນເຫມາະສົມມາຫນູນໃຊ້ໃນການນຳພາປະຊາຊົນ ໃຫ້ເກີດມີຄວາມເຊື່ອຫມັ້ນຕໍ່ລະບອບການປົກຄອງໃຫມ່...ໂດຍສະເພາະແນວຄິດອັນຫລ້າຫລັງ ທີ່ເສດເຫລືອ ມາຈາກລະບອບການປົກຄອງເກົ່າຂອງພວກອາຍາສິດສັກດີນາປະຕິການນັ້ນໄດ້ເຮັດໃຫ້ຊາຍຫນຸ່ມຕໍ່ສູ້ຢ່າງຫນັກຫນ່ວງທີ່ສຸດ ແຕ່ເປັນດ້ວຍຄວາມພະຍາຍາມເຂົ້າຕິດແທດກັບຊາວບ້ານ ເພື່ອຮຽນຮູ້ຊອກຄົ້ນພື້ນຖານແຫ່ງການຂັດແຍ້ງນັ້ນແລ້ວ ທີ່ສາມາດຖອດຖອນເປັນບົດຮຽນນຳພາປະຊາຊົນໃຫ້ຮູ້ສະພາບການຄວາມເປັນຈິງ ຈົນໃນທີ່ສຸດ... ໄຊຊະນະອັນນັ້ນ, ກໍຄືການລົບລ້າງຄວາມກືກຫນັງສື... ທັບມ້າງແນວຄິດເອກະຊົນ... ລົບລ້າງການເຊື່ອຜີສາງນາງໄມ້ໄປໄດ້ຢ່າງສິ້ນເຊີງ ເຮັດໃຫ້ຊາວບ້ານມີແນວຄິດໃຫມ່ ເປັນແນວຄິດທີ່ກ້າວຫນ້າໃຫ້ມີສ່ວນປະກອບສົມທົບການປະຕິວັດຊາດ, ປະຊາທິປະໄຕແລະສັງຄົມນິຍົມ..."ສັດຈະທຳແມ່ນຕົວຈິງການປະຕິວັດແມ່ນປະດິດສ້າງ" ເຊິ່ງນາງເອງແຕ່ກ່ອນບໍ່ຮູ້ທີບຫຍັງເລີຍໃນດ້ານການເມືອງ ແຕ່ພາຍຫລັງທີ່ໄດ້ຮ່ຳຮຽນຄົ້ນຄ້ວາ ເອກະສານການເມືອງ ຕິດຕາມ

ອ່ານໜັງສືເປັນປະຈຳ ຈຶ່ງເຮັດໃຫ້ແນວຄິດດ້ານການເມືອງສູງຂຶ້ນ... ອຳນາດການປົກຄອງໃຫມ່ແມ່ນອຳນາດການປົກຄອງປະຊາທິປະໄຕປະຊາຊົນ ໂດຍແມ່ນປະຊາຊົນເປັນເຈົ້າທີ່ຢູ່ພາຍໃຕ້ການນຳຂອງພັກ ແມ່ນເປັນພື້ນຖານປະຊາທິປະໄຕ ທີ່ດີງາມກ່ວາຫລາຍເທົ່າ ຖ້າທຽບກັບລະບອບສັກດີນາແລະນາຍທຶນ ເຖິງວ່າມັນຍັງບໍ່ທັນໄດ້ເສີມຂະຫຍາຍ ຫລັກສະນະດີເດັ່ນຂອງມັນອອກຢ່າງຄົບຖ້ວນເທື່ອກໍຕາມ ແຕ່ມັນກໍໄດ້ຮັບການກໍ່ສ້າງແລະປັບປຸງດີກ່ວາເກົ່າ.

ນາງສາວໃຊ້ສາຍຕາເບິ່ງການເຄື່ອນໄຫວຂອງ ສົມແພງພຸດທະວົງສາ ຊຶ່ງຖືວ່າເປັນຊາຍຫນຸ່ມຢູ່ໃນອຸດົມຄະຕິຂອງນາງ ເຂົາເປັນຊາຍຫນຸ່ມພຽງຄົນດຽວເທົ່ານັ້ນທີ່ຄວນໄວ້ໃຈແລະມີຄວາມສາມາດພຽງພໍ ທີ່ຈະປົກປັກຮັກສາຕະຫລອດທັງໃຫ້ຄວາມອົບອຸ່ນ ແກ່ນາງໄປໄດ້ຢ່າງຕະຫລອດຮອດຝັ່ງແຕ່ຄວາມຮູ້ສຶກດັ່ງກ່າວນີ້ໄດ້ເຊື່ອງຊ້ອນຢູ່ພາຍໃນສ່ວນເລິກຍາກທີ່ຈະແກ້ກຸມອອກເປີດເຜີຍຢ່າງອິດສະລະເສລີໄດ້ ນອກຈາກເຮັດວຽກການທຸກຢ່າງຂອງການປະຕິວັດຊຸກຍູ້ການຈັດຕັ້ງທຸກຢ່າງ ພາງໃນບ້ານ ໃຫ້ເປັນຫມາກເປັນຜົນ ຊຶ່ງການສະແດງອອກດ້ວຍແຮງໃຈ ແລະ ກາງເພື່ອການປະຕິວັດນັ້ນ ໄດ້ເຮັດໃຫ້ຊາງຫນຸ່ມ ມີຄວາມພໍໃຈ ອັນເປັນຄວາມປາຖະຫນາຂອງນາງ

ຄືກັນ ທີ່ຕ້ອງການໃຫ້ຊາວໜຸ່ມ ໄດ້ຮັບກັບຄວາມສຸກໃຈແນວ ນັ້ນ ແລະ ຖືວ່າ ເປັນການນຳຜົນປະໂຫຍດສ່ວນລວມ ມາສູ່ບ້ານ ນາ.

ສຽງເວົ້າຂອງຊາວໜຸ່ມ ບັງກ້ອງຢູ່ໃນຫູຂອງນາງ ຢູ່ສະເໝີ ເມື່ອກາວໄປອົບຮົມອ້າງເອື້ອງນ້ອງ ປະຊາຊົນ ໃຫ້ຕື່ນຕົວ ເຂົ້າຮ່ວມການຈັດຕັ້ງນັ້ນວ່າ.

" ອົງການຈັດຕັ້ງມະຫາຊົນປະຕິວັດແມ່ນບ່ອນເຕົ້າໂຮມ ຄວາມສາມັກຄີ ທັງເປັນບ່ອນຝຶກຝົນຫລໍ່ຫລອມ ໃຫ້ຜູ້ເຂົ້າໃນ ການຈັດຕັ້ງ ມີແນວຄິດຫລັກໝັ້ນ ລັກສະນະຄຸນສົມບັດປະຕິວັດ ຄວາມສາມາດໃນວຽກງານ ພ້ອມກັບນັ້ນ ອົງການຈັດຕັ້ງ ຍັງແມ່ນຜູ້ດູແລ ປົກປັກຮັກສາ ແລະ ຮັບປະກັນສິດ ແລະ ຜົນ ປະໂຫຍດຂອງສະມາຊິກນຳອີກ ດັ່ງນັ້ນອົງການຈັດຕັ້ງມະຫາ ຊົນປະຕິວັດ ມີບົດບາດສຳຄັນທີ່ສຸດ ສ່ວນບຸກຄົນທີ່ຮູ້ດຳລົງຊີວິດຢ່າງມີເຫດຜົນ ຮູ້ຄວາມໝາຍແຫ່ງຊີວິດຂອງຕົນ ຮູ້ເປັນ ຫ່ວງຕໍ່ອະນາຄົດຂອງຕົນແລະ ຂອງປະເທດຊາດ ນັ້ນ ກໍແມ່ນ ຜູ້ທີ່ບໍ່ມັກຢູ່ໂດດດ່ຽວຫາກເປັນຜູ້ລື້ນຕົວເຂົ້າຮ່ວມໃນອົງການຈັດຕັ້ງປະຕິວັດຢ່າງຫ້າວຫັນແລະດີໃຈແທ້ຈິງ "

ນີງສາວຍັງຈື່ຄວາມເວົ້າອັນໜັກແໜ້ນຂອງຊາວໜຸ່ມອີກ ວ່າ " ພາງໃຕ້ການນຳພາແລະຊັກຈູງຢ່າງໃກ້ຊິດຂອງພັກປະ

ຊາວຊົນປະຕິວັດລາວ ໃນເວລາຜ່ານມາ ບັນດາອົງການຈັດຕັ້ງ ມະຫາຊົນປະຕິວັດເຊັ່ນ ກຳມະບານລາວ, ສະມາຄົມຊາວນາ ລາວຮັກຊາດ, ຊາວໜຸ່ມລາວຮັກຊາດ, ແມ່ຍິງລາວຮັກຊາດ ແລະ ອື່ນໆ, ໄດ້ຮັບການ ຈັດຕັ້ງຂຶ້ນ ໄດ້ເຕີບໃຫຍ່ ຂະຫຍາຍໂຕ ເລື້ອຍມາ ແລະ ໄດ້ປະກອບສ່ວນຢ່າງຂະຫຍັນຂັນແຂງໃນການ ຊິງເອົາໄຊຊະນະ ໃນການກູ້ຊາດ ຕ້ານຈັກກະພັດ ອາເມລິກາ ແລະ ໃນພາລະກິດ ສະຖາປານາ ແລະ ປົກປັກຮັກສາລະບອບ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໃນປະຈຸບັນ"

ຕອນທຳອິດ ຍິງສາວຄິດຕໍ່າຄ້ຽນບັ້ງໃຈ ທີ່ໄດ້ເຫັນຊາຍໜຸ່ມ ບໍ່ໃຫ້ຄວາມສົນໃຈ ກັບຕົນ ເບິ່ງຄືວ່າ ເຂົາເປັນຝ່າຍລືມສັນຍາ ກັບໄວ້ໝົດທຸກຢ່າງ ໄປໝົດແລ້ວ ຈຶ່ງກົ້ມໜ້າກົ້ມຕາເຮັດແຕ່ ວຽກການງານເທົ່ານັ້ນ ແຕ່ແລ້ວຄວາມອົບອຸ່ນໃຈ ຍິ່ງໄດ້ຮັບ ຄວາມອັດແໜ້ນຫລາຍຍິ່ງຂຶ້ນ ເມື່ອນາງໄດ້ຮູ້ຄວາມຈິງ ທີ່ໄດ້ ຫລຸດອອກມາຈາກປາກຂອງເຂົາ.

" ອ້າຍ ຍັງເປັນ ຜູ້ເກົ່າ ແລະ ບໍ່ສາມາດ ຈະລືມ ຄຸນງາມ ຄວາມດີຂອງນ້ອງເລີຍ ຄວາມດີທີ່ສ້າງໄວ້ ໃນອະດີດກໍຄືຄວາມ ດີທີ່ນ້ອງໄດ້ ມີຢູ່ໃນປະຈຸບັນ ຄວາມຮັກຂອງເຮົາທັງສອງທີ່ມີ ຈິດໃຈ ຜູກພັນກັນ ມານານປີນັ້ນ ຍ່ອມເປັນ ຄວາມຮັກອະ ມະຕະ ແລະ ຈະໄດ້ຮັບກັບຄວາມສຸກສົມຫວັງ ໃນບັ້ນສຸດທ້າຍ

ສະເຫນີ"

"ນ້ອງຄືດວ່າອ້າຍສິນແພງ ຈະລືມໄປຫມົດແລ້ວໃນເລື່ອງນີ້" ບົງສາວເວົ້າອອກມາດ້ວຍຄວາມນ້ອຍໃຈ.

"ບໍ່ມີມື້ລືມຈັກເທື່ອ ມີແຕ່ຈະຝັງແໜ້ນ ລົງເລິກນັບໄປຊັກໃຊ້... ວັນນີ້!".

ຊາຍໜຸ່ມເອີ້ນຊື່ນົງສາວແລ້ວຈຶ່ງເວົ້າອີກວ່າ... " ນັກຮົບແລະ ຜູ້ຂາດສະຕິລະວັງຕົວ ບາງຄົນອາດພາກັນຄິດວ່າໃນເມື່ອປະເທດຂອງເຮົາມີສັນຕິພາບແລ້ວແມ່ນຫມົດພາລະກິດປະຕິວັດ... ອັນນັ້ນເປັນຄວາມເຂົ້າໃຈຜິດນັກໃຫຍ່... ການປະຕິວັດຍັງຈະຕ້ອງດຳເນີນຕໍ່ໄປຢ່າງເຂັ້ມແຂງຫນຽວແໜ້ນທົນທານແລະເດັດຂາດພວກເຮົາຍັງມີຄວາມຈຳເປັນ ໃນການເຮັດໃຫ້ມີນາບະຈິດອັນກ້າແຂງ ເພື່ອຕໍ່ສູ້ປາບປາມເລ່ກົນຂອງ ຈັກກະພັດອາເມລິກາ ແລະ ພວກລູກມືປະຕິການ... ຕໍ່ສູ້ກັບຮ່ອງຮອຍແນວຄິດເກົ່າອັນຫລ້າຫລັງຕໍ່ສູ້ກັບຄວາມອຶດຢາກ ...

"ຫມາຍຄວາມວ່າ ເຮົາທັງສອງ ຕ້ອງມອບຈິດໃຈ ແລະຮ່າງກາຍ ເພື່ອການປະຕິວັດ ຈົນບໍ່ມີເວລາ ຕອບສະຫນອງຄວາມຮຽກຮ້ອງ ແລະ ຄວາມປາຖະຫນາຂອງຫົວໃຈ" ນົງສາວສຸດທີ່ຈະອົດກັ້ນ ຄວາມຮູ້ສຶກໄວ້ບໍ່ໄດ້ ຈຶ່ງໄດ້ຫລຸດຄວາມເວົ້າອອກມາດ້ວຍຄວາມແໜ້ນໜ້າຫົວໃຈ ...

" ວັນນີ ! " ຊາຍໜຸ່ມເອີ້ນຊື່ຍິງສາວອີກເທື່ອໜຶ່ງ ແລ້ວຈຶ່ງໄດ້ເວົ້າຕໍ່ໄປອີກ. " ນ້ອງເປັນຕົວແທນຄົນໜຶ່ງປະຈຳບ້ານນາທີ່ຮັບໃຊ້ ການປະຕິວັດ ສາມາດເຣັດຫຼອັນ ໜ້າທີ່ມາໄດ້ຫລາຍສິ່ງຫລາຍແບບແລ້ວ ... ຢ່າລືມວ່າຜົນປະໂຫຍດ ຂອງສ່ວນລວມ ຕ້ອງມາກ່ອນຜົນປະໂຫຍດຄວາມສຸກສ່ວນຕົວ ... ນ້ອງເຄີຍຕໍ່ສູ້ກັບຄວາມທໍລະມານ ຂອງຈິດໃຈມາ ໄດ້ຕັ້ງສິບປີແລ້ວ ... ອ້າຍເຊື່ອວ່ານ້ຳໃຈຂອງນ້ອງ ຕ້ອງມີຄວາມເຂັ້ມແຂງພຽງພໍອ້າຍຂໍບອກນ້ອງໃຫ້ຮູ້ຕື່ມອີກວ່າ ...ຄວາມດີ ທີ່ມີຢູ່ແລ້ວທາງຂັ້ນສູງເບິ່ງແຍງຢູ່ສະເໝີອີກບໍ່ນານ ອ້າຍເຊື່ອວ່າຄວາມຫວັງ ຂອງນ້ອງ ຈະຕ້ອງ ໄດ້ຮັບກັບ ຄວາມ ສົມຫວັງ ... ຂໍໃຫ້ນ້ອງຈົ່ງບຸກບືນຕົວເພື່ອວຽກການປະຕິວັດຕໍ່ໄປ ... "

- ໃນວັນທີ່ລັດຖະບານໄດ້ສົ່ງເຄື່ອງມື ການປູກຝັງ ແລະເຄື່ອງບໍລິໂພກ ທີ່ຈຳເປັນ ມາໃຫ້ປະຊາຊົນ ຊາວບ້ານນານັ້ນຊາຍໜຸ່ມໄດ້ອ່ວາງໜ້າ ໄປເວົ້າກັບຍິງສາວ ດ້ວຍໃບໜ້າອັນຍິ້ມແຍ້ມແຈ່ມໃສວ່າ.

" ນາບັດນີ້ນ້ອງຄົງຈະຮູ້ເຫັນເປັນຄວາມຈິງອີກເທື່ອໜຶ່ງວ່າ ... ພັກມີແນວທາງ ທິດນຳ ວິທີການປະຕິວັດ ຖືກຕ້ອງຈຶ່ງສາມາດເສີມຂະຫຍາຍ ກຳລັງແຮງ ຂອງມະຫາຊົນ ຈຶ່ງຍາດແຍ່ງເອົາການຊ່ວຍເຫຼືອຂອງສາກົນ ໄດ້ດ້ວຍເຫດນັ້ນການນຳ

ພາຂອງພັກຈຶ່ງເປັນມູນເຫດສຳຄັນກ່ວາໝູ່ທັງມີລັກສະນະຕັດສິນກ່ວາໝູ່ຕໍ່ໄຊຊະນະຂອງການປະຕິວັດ ! "

– ບົງສາວຍິ້ມຕອບດ້ວຍຄວາມອຸ່ນອຽນ ແລະ ໄດ້ຮັບກັບຄວາມສຸກເບີກບານໃຈເປັນຢ່າງຍິ່ງ ທີ່ໄດ້ປະກອບສ່ວນຮັບໃຊ້ການປະຕິວັດ ອັນເຮັດໃຫ້ນາງ ມີຊີວິດ ອັນສົດໃສ ແລະ ມີຄວາມຫວັງອັນເຕັມປ່ຽມ ສຽງເວົ້າຂອງຊາຍໜຸ່ມຍັງກ້ອງຕິດແໜດປູ່ກັບຫູຂອງນາງຕະຫລອດເວລາວ່າ ...

" ອີກບໍ່ນານອ້າຍເຊື່ອວ່າ ຄວາມຫວັງຂອງນ້ອງຈະຕ້ອງໄດ້ຮັບກັບຄວາມສົມຫວັງ ... ຂໍໃຫ້ນ້ອງ ຈົ່ງບຸກບືນຕົວເພື່ອວຽກການປະຕິວັດຕໍ່ໄປ "

# ລຸງຂຽວ

ໂດຍ .. ອຸທິນ ບຸນຍາວົງ.

ໃນຂົງເຂດບ້ານເຮົານີ້ ບໍ່ມີໃຜດອກຈະປະຕິເສດວ່າບໍ່ໄດ້ກິນຫມາກໄມ້ລຸງຂຽວ. ເຖົ້າແກ່ຍິງຊາຍນ້ອຍໃຫຍ່ ລ້ວນແຕ່ໄດ້ຊີມລົດຫມາກມ່ວງ ຫມາກຈຽງ ຫມາກນ້ຳນົມ ຫມາກລຳໄຍແລະອີກຫລາຍໆຫມາກຈາກຕົ້ນ ຊຶ່ງລຸງຂຽວເປັນຜູ້ປູກ

" ລູກກິນຢູ່ນັ້ນກໍແມ່ນຫມາກມ່ວງລຸງຂຽວ "

ຂ້ອຍບອກບຸນລົມລູກຊາຍອາຍຸສິບປີ ຊຶ່ງກຳລັງແທ້ນແກ່ນຫມາກມ່ວງຢູ່.

" ລູກເກັບມາຈາກຕົ້ນແຈຮົ້ວເຮົາໃດນີ້ ".

ລູກຊາຍເວົ້າສີເຄືອງຈັກຫນ່ອຍ ເພາະເກັບຫມາກມ່ວງບ້ານໂຕເອງແທ້ໆ ກັບເປັນຫມາກມ່ວງລຸງຂຽວ.

" ຕົ້ນມັນຢູ່ບ້ານເຮົາແລະເປັນຂອງເຮົາລູກເອີຍ ແຕ່ວ່າລຸງຂຽວເປັນຜູ້ປູກໃຫ້ ".

ຂ້ອຍຊີ້ແຈ້ງໃຫ້ລູກຊາຍຮູ້.

" ເປັນຫຍັງລຸງຂຽວຈຶ່ງມາປູກໃສ່ບ້ານເຮົາພໍ່ ? ".

" ລຸງຂຽວຖືວ່າທຸກຄົນໃນຄຸ້ມບ້ານເຮົານີ້ ເປັນພີ່ນ້ອງກັນ ລາວຢາກໃຫ້ທຸກຄົນມີຢູ່ມີກິນ ມີຫມາກໄມ້ຫລາຍໆ ດັ່ງນັ້ນ ລຸງຂຽວຈຶ່ງທຽວປູກຫມາກໄມ້ໃຫ້ຜູ້ນັ້ນຜູ້ນີ້ໃນບ້ານເຮົານີ້ນອກ

ຈາກໝາກມ່ວງຕົ້ນນັ້ນແລ້ວ ລຸງຂຽວຍັງໄດ້ປູກໝາກນີ້ ໝາກຂາມ ແລະໝາກລຳໄຍປ່າງລະຕົ້ນໄວ້ແຄມຮົ້ວເບື້ອງທິ້ງ ກິນໝາກມ່ວງໝົດແລ້ວ ອີກບໍ່ດົນລູກກໍຈະໄດ້ກິນໝາກລຳໄຍ ".

" ລຸງຂຽວໃຈດີອີຫລີບໍ່ພໍ່ ."

" ແມ່ນລະລຸງຂຽວໃຈດີ ລາວຊ່ວຍຜູ້ນັ້ນຜູ້ນີ້ເຮັດວຽກໂດຍບໍ່ເອົາຄ່າຈ້າງ ມື້ກ່ອນລາວກໍຍັງມາຊ່ວຍພໍ່ມຸງຫລັງຄາເຮືອນຄົວຫັ້ນເດ ລາວເປັນຄົນກ້ວາງຂວາງ ຄົນບ້ານໃຕ້ບ້ານເໜືອລ້ຽງແກ່ນກັບລຸງຂຽວຮັກລຸງຂຽວທຸກຄົນ ".

" ລູກກໍຮັກລຸງຂຽວ "

" ຮັກລຸງຂຽວແລ້ວກໍໃຫ້ປະຕິບັດຄືລຸງຂຽວເນີ "

ພໍລຸງຂຽວຍ່າງກາຍບ້ານໄປ ນີ້ຖືເບັ້ງໝາກໄມ້ຂ້ອຍເລີຍຮ້ອງໃສ່.

" ໄປໃສລຸງຂຽວ ".

" ເອົາເບັ້ງໝາກຂຽບໄປປູກໃຫ້ເຂົາຢູ່ບ້ານໃຕ້ກ່ອນ ກະວ່າສາມປີໄດ້ກິນໝ່ວຍ ".

ລຸງຂຽວອາຍຸ ៥໙ ປີແລ້ວ ເປັນພໍ່ໝ້າຍມີລູກສາມຄົນຜູ້ຊາຍສອງຄົນສ້າງຄອບຄົວອອກເຮືອນໄປແລ້ວ ສ່ວນລູກສາວກໍເອົາຜົວ ແລະ ຢູ່ເຮືອນນຳພໍ່ ລຸງຂຽວເວົ້າສຽງດັງຟັງ

ແຈ້ງ ທ່າທາງເປີດເຜີຍ ເວົ້າງ່າຍຫົວງ່າຍກັບທຸກຄົນບໍ່ມີຄຳວ່າອວດອົ່ງທະນົງຕົວ ບ່ອນໃດເຮັດບຸນກິນທານ ບ່ອນໃດມີງານສົບ ບ່ອນໃດມີການເຮັດວຽກສານະຄີ ບ່ອນນັ້ນມີລຸງຂຽວ ລາວມີປລັດຊະຍາໃນການດຳລົງຊີວິດວ່າ.

"ຮັກແພງຄົນອື່ນກ່ອນແລ້ວ ຕົວເອງກໍຈະມີຄ່າແພງ"

ດ້ວຍປລັດຊະຍາອັນນີ້ ລາວຈຶ່ງເປັນທີ່ຮັກຂອງປະຊາຊົນຄົນຄຸ້ມບ້ານເຮົາຕະຫລອດຮອດເດັກນ້ອຍທັງຫລາຍ.

ນິໄສເດີມອັນໜຶ່ງຂອງລາວທີ່ທຸກຄົນຊື່ນຊົມ ກໍຄືລາວມັກປູກຝັງໃນບ້ານລາວມີພືນລະປູກທຸກຢ່າງເຊັ່ນຜັກ, ຕົ້ນໄມ້ກິນໃບ, ຕົ້ນໄມ້ກິນໝາກ ສະມຸນໄພແລະຕົ້ນໄມ້ທີ່ໃຊ້ເປັນຢາປົວພະຍາດຕ່າງໆ ໃຜເຈັບໄຂ້ໄດ້ປ່ວຍກໍແລ່ນໄປຂໍຢາພື້ນເມືອງນຳລຸງຂຽວ ງັນເຮືອນດີກໍໄປຂໍໝາກຮຸ່ງມາຕຳຊູມກັນຍາມ ຮັດບຸນເຮັດທານກໍໄປຂໍໃບຕອງມາຫໍ່ເຂົ້າຕົ້ມ ລຸງຂຽວເອົາໃຫ້ໂດຍບໍ່ຕ້ອງຊື້ບໍ່ຕ້ອງຂາຍ ດັ່ງນີ້ລາວຈຶ່ງເປັນທີ່ຮັກແພງຂອງຄົນຄຸ້ມບ້ານເຮົາ.

ລຸງຂຽວກ້າເບັ້ຍໝາກໄມ້ໄວ້ຫລວງຫລາຍ ໄປບ້ານໃດເມືອງໃດເຫັນໝາກໄມ້ແນວແຊບໆ ກໍເອົາແກ່ນມາກ້າແລ້ວກໍປູກ ແຕ່ວ່າບ້ານລຸງຂຽວກໍບໍ່ມີເນື້ອທີ່ພຽງພໍ ດັ່ງນັ້ນລາວຈຶ່ງເອົາເບັ້ຍໄປຢາຍໃຫ້ຜູ້ນັ້ນຜູ້ນີ້ ບໍ່ສະເພາະແຕ່ຢາຍໃຫ້ເທົ່ານັ້ນ

ລຸງຂຽວບັງປູກໃຫ້ພ້ອມອີກ.

ປາກົດວ່າທຸກຄົວເຮືອນໃນຄຸ້ມບ້ານເຮົານີ້ ມີຕົ້ນໄມ້ປ່າງ ນ້ອຍສອງຕົ້ນ ທີ່ລຸງຂຽວເປັນຜູ້ປູກໃຫ້ ຕົ້ນໃດສີໃຫຍ່ໆເດັກ ນ້ອຍກໍມັກເອົາມີດຫລືຂອງແຂງ ໄປຄົວດຊື່ລຸງຂຽວຕິດໄວ້ ຕາມຕົ້ນໄມ້ສ່ວນຫລາຍ ມັກະຫັນຊື່ລຸງຂຽວຕິດຢູ່ທົ່ວໄປຄ້າຍ ກັບວ່າມັນເປັນອະນຸສາວະລີຂອງລຸງຂຽວ ຜູ້ທີ່ອຸທິດຕົນເພື່ອ ປະໂຫຍດສ່ວນໂຮມປ່າງບໍ່ເຄີຍມີຕົວຢ່າງມາກ່ອນ.

ໃນວົງສົນທະນາຂອງຊາຍຫນຸ່ມຍິງສາວ ມັກໄດ້ຍິນເຂົາ ຖຽງກັນເຖິງເລື່ອງທີ່ວ່າແບ່ງໃຜມີຕົ້ນໄມ້ທີ່ອາຍຸແກ່ທີ່ສຸດທີ່ລຸງ ຂຽວເປັນຜູ້ປູກໃຫ້ ແລ້ວສຽງແຊວໆກໍດັງຂື້ນ.

" ຕົ້ນຂາມຫວານບ້ານເຮົາເວີຍ ! " ຜູ້ຫນຶ່ງວ່າ.

" ຕົ້ນມ່ວງບ້ານເຮົາອາຍຸ ໑໕ ປີແລ້ວ " ອີກຜູ້ຫນຶ່ງເວົ້າ.

" ສູ້ຕົ້ນຫມາກລຳໄຍບ້ານເຮົາບໍ່ໄດ້ ພໍ່ເຮົາວ່າລຸງຂຽວເອົາ ມາປູກຕອນນີ້ເຮົາເກີດ ດຽວນີ້ເຮົາອາຍຸ ໒໐ ປີແລ້ວ " ຜູ້ທີ່ ສາມສະເຫນີຂື້ນ.

ການສົນທະນາຍັງບໍ່ສຸດເທົ່ານັ້ນ ພວກຫນຸ່ມສາວຍັງ ຖົກຖຽງກັນຕໍ່ໄປວ່າ ຜູ້ໃດໄດ້ປູກຕົ້ນໄມ້ຫລາຍກວ່າກັນ ? ມີຜູ້ ກ່າວວ່າໄດ້ປູກຊາວສາມສິບຕົ້ນ ບາງຄົນວ່າສີ່ສິບຫ້າສິບ ບາງຄົນວ່າຮ້ອຍກວ່າຕົ້ນ ໃນຈຳນວນນີ້ປູກໃຫ້ຜູ້ອື່ນ ຫລາຍ

ຫລາຍກ່ວາເຄິ່ງ ແລ້ວກໍ່ມີສຽງເວົ້າເຢັ້ຍກັນວ່າ : ສິງໃສປູກຕົ້ນ " ດອກຮັກ " ຫລາຍກວ່າ.

ນັບເປັນເລື່ອງທີ່ຫນ້າພາກພູມໃຈ ທີ່ຊາຍຫນຸ່ມຍິງສາວໃນຄຸ້ມບ້ານເຮົາມັກເອົາຕົວຢ່າງລຸງຂຽວ ແລ້ວກໍພາກັນປູກຫມາກໄມ້ຫລາຍຊະນິດແຂ່ງຂັນກັນ ສົມມຸດວ່າປີນີ້ຜູ້ຫນຶ່ງປູກໄດ້ ໑໐ ຕົ້ນຢ່າງຫນ້ອຍ ປີຫນ້າປູກໄດ້ ໔໐ ຕົ້ນ ໕໐ ຕົ້ນ ແລະ ປູກທຸກໆປີຕໍ່ໄປຕະຫລອດຊົ່ວຊີວິດ ຄຸ້ມບ້ານຂອງເຮົາກໍຈະມີຕົ້ນໄມ້ເພີ້ມຂຶ້ນຫລາຍຮ້ອຍຫລາຍພັນຕົ້ນບານແດດຮ້ອນກໍຈະມີຮົ່ມອາໄສ ບານຫມາກໄມ້ກໍຈະໄດ້ກິນອີ່ມກັນຫມົດທຸກຄົນ.

ຂ້ອຍຮູ້ສຶກດີໃຈນຳລຸງຂຽວອີຫລີທີ່ມື້ວານນີ້ເຫັນຄົນສອງສາມຄົນເອົາຫມາກມ່ວງໄປໃຫ້ລຸງຂຽວ ຜູ້ລະສິບກວ່າຫນ່ວຍ ເຂົາເຈົ້າຍ່າງຜ່ານຫນ້າບ້ານໄປ ແລະ ບອກຂ້ອຍວ່າຫມາກມ່ວງນີ້ລຸງຂຽວປູກໃຫ້ ແລະ ຫາກໍ່ເປັນຫນ່ວຍປີທຳອິດເລີຍເອົາໄປໃຫ້ລາວຊີມເບິ່ງ. ກ່ອນຫນ້ານີ້ບໍ່ດົນ ກໍ່ມີຜູ້ເອົາຫມາກນ້ຳນົມທີ່ລຸງຂຽວປູກໃຫ້ ໄປມອບແກ່ລາວ ລຸງຂຽວໄດ້ຮັບຫມາກໄມ້ເປັນປະຈຳ ຈາກຄົນບ້ານໃຕ້ບ້ານເຫນືອ. ທັງທີ່ລາວໄດ້ປະຕິເສດ ແລະ ລາວກໍ່ມີຫມາກໄມ້ທຸກຊະນິດ.

ຢູ່ຫົວນາລຸງຂຽວກໍມີສວນຫມາກໄມ້ ເປັນປ່າດົກຫນາ ດຽວນີ້ຫມາກແງວກຳລັງສຸກແດງ, ຫມາກມ່ວງກຳລັງສຸກ

ເຫລືອງ, ຫມາກລຳໄຍກຳລັງເປັນຫນ່ວຍນ້ອຍ, ຫມາກພ້າວເປັນຫນ່ວຍດົກຕະຫລອດເວລາ. ຍາມແລງມາລຸງຂຽວຕ່າວຈາກນາ ກໍມັກມີຫມາກໄມ້ຕິດມືມາພ້ອມ, ເພີ່ນກາຍຫນ້າບ້ານຂ້ອຍລາວກໍແບ່ງໃຫ້ພວກລູກໆ ຂອງຂ້ອຍຄົນລະເລັກລະນ້ອຍເຮັດໃຫ້ເດັກນ້ອຍຊົມຊື່ນດີໃຈ ແລະ ເວົ້າຫາແຕ່ລຸງຂຽວສະເຫມີ. ເຮືອນຂ້ອຍ ແລະເຮືອນລຸງຂຽວບໍ່ຢູ່ໃກ້ກັນພໍເທົ່າໃດຫລຽວເຫັນກັນປູ່ທຸກມື້ ຍາມຫວ່າງລາວກໍມັກຍ່າງມາຫລິ້ນນຳ ແລະ ເວົ້າລົມກັບທຸກຄົນຢ່າງອາລົມດີ ບໍ່ວ່າກັບຜູ້ເຖົ້າຜູ້ແກ່ແລະເດັກນ້ອຍ.

" ຖ້າລຸງເອົາຫມາກໄມ້ໄປຂາຍຕະຫລາດວຽງຈັນ ຈັ່ງໃດກໍມີເງິນມີຄຳປຸກເຮືອນສອງສາມຊັ້ນໄດ້ ເມັຍຂ້ອຍເຄີຍເວົ້າແກມຢອກ.

" ຂາຍເຮັດຫຍັງ! ຕາຍໄປແລ້ວກໍເອົາເງິນເອົາເຮືອນໄປນຳບໍ່ໄດ້ ແຫນງດີວ່າປາຍໃຫ້ໃຫບ້ານເຮົາໃຫ້ໄດ້ກິນອີ່ມ ຕາຍໄປແລ້ວກໍຍັງມີຜູ້ຈົ່ມຫາ " ລຸງຂຽວເວົ້າຢ່າງອາລົມດີ.

" ແມ່ນຄວາມລຸງ, ຖ້າບໍ່ເຮັດເພື່ອປະໂຫຍດສ່ວນໂຮມໃນເວລາທີ່ຍັງມີຊີວິດຢູ່ ກໍນັບວ່າເສັຍຊາດເກີດ ຕາຍໄປແລ້ວກໍບໍ່ມີຄຸນຄວາມດີເຫລືອໄວ້ໃຫ້ຜູ້ຍັງຢູ່ນັບຖື ຖ້າຫມົດເມືອງລາວມີຄົນຄືລຸງຂຽວບ້ານລະສິບຄົນຮັບຮອງວ່າມີຢູ່ມີກິນ ເປັນ

ເຈົ້າຕົນເອງຕະຫລອດພອງໃດພຸ້ນລະ " ຂ້ອຍເສີມຕໍ່.

ລຸງຂຽວຫົວຮືຮືຢູ່ໃນຮູຄໍແລ້ວກໍຫາເລື່ອງອື່ນມາລົມກັນຕໍ່.

– ບ້ານເມືອງກຳລັງຢູ່ໃນຍຸກປະຕິວັດ ເຮົາທຸກຄົນທີ່ກຳລັງມີຊີວິດຢູ່ໃນຂະນະນີ້ ແມ່ນໂຊກມະຫາສານ ເພາະເປັນສັກຂີພະຍານ ໃນການສ້າງໜ້າປະຫວັດສາດໃຫມ່ ຂອງປະເທດຊາດ ເຮົາເຮັດຫຍັງດີງາມລົງໃນເວລານີ້ແມ່ນໄດ້ມີສ່ວນຂຽນໜ້າປະຫວັດສາດໃຫມ່ທີ່ແຈ່ມໃສແລະກ້າວໜ້າ ເຮົາຢູ່ບ້ານນອກບ້ານນາ ເຖິງວ່າບໍ່ມີໂອກາດໄດ້ຮຽນຮູ້ວິທະຍາການຊັ້ນສູງເພື່ອໄປກໍ່ສ້າງປະເທດ ແຕ່ການທີ່ເຮົາອອກແຮງເພີ່ມພູນຜະລິດຜົນໃຫ້ຫລາຍໆ ປູກຜັກປູກໝາກໄມ້ຫລາຍໆຂຶ້ນລ້ຽງປາລ້ຽງສັດໃຫ້ມີພຽງພໍກັບຄວາມຕ້ອງການ ນີ້ລະເປັນພື້ນຖານໃຫ້ເສດຖະກິດຂອງຊາດ ຫມັ້ນຄົງ ຊຸກຍູ້ໃຫ້ປະເທດເຮົາກ້າວສູ່ຄວາມວັດທະນາຖາວອນໄດ້ໃນອະນາຄົດອັນໃກ້ ຖ້າມົວເມົາຢູ່ໃນລະບອບເກົ່າ ເກີດອີກສິບຊາດກໍບໍ່ໄດ້ເຫັນຄວາມຈະເລີນຂອງບ້ານເມືອງ ຜູ້ກືບກໍຈະຍູທ່າງກິນພໍຮາກ ຜູ້ປາກຊ້ຳປາກພໍຕາຍຕໍ່ໄປ ການຂູດຮີດໃນສັງຄົມກໍຍິ່ງທະວີຂຶ້ນຊັກໃຊ້ ສວນໝາກໄມ້ຫົວນາຂອງລຸງກໍຈະເປັນຂອງສັກດິນາປະຕິການໄປແລ້ວ ແມ່ນດວາ? " ລຸງຂຽວຍ້ອນຖາມເມັຍແລະຂ້ອຍ.

ແມ່ນລະ  ສວນຫົວນາຂອງລຸງເກືອບເປັນຂອງສັກດີນາປະຕິການໄປແລ້ວເມື່ອຕົ້ນປີ ໑໙໗໕ ເລື່ອງມີຢູ່ວ່າລູກມືຂອງບຸນອຸ້ມ  ຫົວໂປ່ສັກດີນາປະຕິກາ ນໄດ້ໄປຈັບຈອງເອົາດິນຢູ່ເໜືອສວນຫົວນາຂອງລຸງຂຽວ  ທັງໄດ້ຊື້ເອົາດິນກິກນາຂອງລຸງຈອມຊຶ່ງຢູ່ຖັດກັນນັ້ນ  ສ່ວນລຸງຂຽວບໍ່ຍອມຂາຍຄົງຮັກສາໄວ້ເປັນມໍລະດົກໃຫ້ລູກໃຫ້ຫລານ  ຊື້ແລ້ວກໍຈັດການເຮັດໜັງສືຊື້ຂາຍລົງວັນທີຄືນຫລັງໄປນັບສິບໆປີ  ເພາະມີແຜນການຮ້າຍຢູ່ໃນໃຈ  ລູກມືບຸນອຸ້ມຈັດການ  ລ້ອມຮົ້ວຍາວເປັນກິໂລແມັດພໍ່ມາຮອດສວນລຸງຂຽວ  ຮົ້ວເລີຍບໍ່ຊື່ເພາະມີສວນຂອງລຸງຂຽວຕັນຢູ່  ລູກມືບຸນອຸ້ມມາທາບທາມຂໍຊື້ນໍາລຸງຂຽວອີກແຕ່ກໍຖືກລາວປະຕິເສດໄປ.  ອັນນີ້ເຮັດໃຫ້ມັນບໍ່ພໍໃຈ ຈິ່ງຫາເລື່ອງໃສ່ວ່າລຸງຂຽວເຮັດຮົ້ວກວມເອົາດິນຂອງມັນ ເລື່ອງບາດແບ່ງທີ່ດິນກັນນີ້ຖືກສົ່ງຟ້ອງສານ ໂດຍລູກມືບຸນອຸ້ມເປັນໂຈດລຸງຂຽວນັ້ນບໍ່ມີໜັງສືຕາດິນ ເພາະເປັນດິນກິກນາຕົກມາແຕ່ພໍ່ແມ່ຊຶ່ງຄົນໝົດບ້ານພວກເຮົາກໍຮັບຮູ້  ສານຊຶ່ງຖືກອິດທິພົນບຸນອຸ້ມບີບບັງຄັບ  ໄດ້ຕັດສິນໃຫ້ລູກມືບຸນອຸ້ມເປັນຜູ້ຊະນະ  ຂ່າວນີ້ຊາບເຖິງຫູຊາວບ້ານຄຸ້ມເຮົາ ທຸກຄົນຈິ່ງພາກັນຫລັ່ງໄຫລໄປປະທ້ວງ  ການຕັດສິນຂອງສານຊັ້ນຕົ້ນວຽງຈັນຢ່າງເຄັ່ງຂຶມ  ມີນັກຮຽນນັກສຶກສາມາສົມທົບການປະທ້ວງ

ຈິງຍິ່ງຟິດຟື້ນຂື້ນ ຈົນກະຊວງບຸກີທຳ ໃນຄາວນັ້ນໄດ້ສັ່ງໃຫ້ງົດດ້ານປະຕິບັດຄຳຕັດສິນດັ່ງກ່າວໄວ້ໂດຍບໍ່ມີກຳຫນົດ ຈົນກ່ວາຄະດີຈະຖືກສືບສວນ ແລະຫາຫລັກຖານໃຫ້ເປັນທີ່ແຈ້ງຂາວເສັຍກ່ອນ ລະບະທີ່ຄອງຄອຍຢູ່ນີ້ກໍ່ພໍດີບຸນອູ້ມຖືກປະຊາຊົນນັກຮຽນນັກສຶກສາຂັບໄລ່ໄສສົ່ງອອກນອກປະເທດ ລູກນີ້ຂີ້ໂກງຜູ້ນັ້ນກໍຕາມຫລັງກັບໂດດໜີໄປ ແລ້ວສວນລຸງຂຽວກໍກັບເປັນຂອງລາວຄືເກົ່າ.

ຂ້ອຍເອງມີຄວາມສັດທາໃນຕົວລຸງຂຽວຫລາຍ ລາວເປັນບຸກຄົນຕົວຢ່າງທີ່ຂ້ອຍພະຍາຍາມປະຕິບັດຕາມ ແລະຄິດວ່າເອົາພຽງເຄິ່ງໜຶ່ງຂອງລຸງຂຽວ ກໍນັບວ່າໄດ້ປະກອບສ່ວນເຮັດໃຫ້ສັງຄົມຄຸ້ມບ້ານເຮົາກ້າວຫນ້າຂື້ນບໍ່ນ້ອຍເລີຍ ຂ້ອຍນັ່ງຢູ່ເຊີ່ງເຮືອນແນມເບິ່ງຕົ້ນພ້າວສອງຕົ້ນຢູ່ໃນບ້ານປ້າແພງ ດ້ວຍຄວາມພາກພູມໃຈ ມັນກຳລັງເປັນຫນ່ວຍນ້ອຍເທື່ອທຳອິດ ຂ້ອຍເອງເປັນຜູ້ປູກຕົ້ນພ້າວສອງຕົ້ນນີ້ ເມື່ອເຈັດປີປາຍມາແລ້ວ ປ້າແພງບອກກັບຂ້ອຍວ່າ " ຫນ່ວຍໃຫ່ຍແລ້ວປາກກິນມາຂື້ນເອົາໂລດ ".

ຖັດກັນໄປແມ່ນບ້ານທິດສິງ ຕົ້ນຫມາກຈຽງກຳລັງເປັນຊອນລອນ ອີກສີ່ຫ້າປີກໍຈະໄດ້ກິນຫນ່ວຍ ຂ້ອຍເອງເປັນຜູ້ປູກໃຫ້ສາມຕົ້ນ ອີກສອງຕົ້ນແມ່ນທິດສິງປູກເອງ.

ຂ້ອຍງວາກເບິ່ງ ທ້າວບຸນລົມອີກ ເຫັນວ່າກຳລັງກິນ ຫມາກມ່ວງຫນ່ວຍທີ່ສອງ ບັງເຫລືອແຕ່ແກ່ນ.

" ກິນແລ້ວເອົາແກ່ນມັນໄປບົ່ງໄວ້ເນີລູກ ແຕກຫນໍ່ແລ້ວໃຫ້ ລູກບຳໄປປູກ ເຮັດຈັ່ງຊັ້ນຈຶ່ງຈະເປັນຫລານຮັກຂອງລຸງຂຽວ ໄດ້ ".

ລູກຊາຍນ້ອຍຮັບປາກ ພໍກິນແລ້ວກໍຈັບແກ່ນຫມາກມ່ວງ ລົງເຮືອນໄປບົ່ງໄວ້ທີ່ປາຍຊານປ່າງເຊືອຟັງ ຂ້ອຍແນມເບິ່ງ ລູກດ້ວຍຄວາມອົບອຸ່ນ ແລະຊຸ່ມຊື່ນໃຫ້ຫົວໃຈ.

ພິມທີ່ໂຮງພິມແຫ່ງຊາດ
ພິມຈຳນວນ 5000 ຫົວ ຂະໜາດ13x18,4
ພິມແລ້ວ ວັນທີ 25-8-76